## ສາລະບານ

ພາກທີ VI ..........................................................................................2

ວິຊາເຕັກນິກການຂຽນຂ່າວ, ຂຽນບົດຂ່າວສານ,..........................................................2

ບົດຄວາມ, ບົດນຳ, ບົດວິຈານ ແລະ ບົດໂຄສະນາຜ່ານສື່. ..............................................2

ບົດທີ 1 ..........................................................................................2

ການຂຽນຂ່າວ..........................................................................................2

ບົດທີ 2 ..........................................................................................11

ການຂຽນບົດຂ່າວສານ..........................................................................................11

ບົດທີ 3 ..........................................................................................18

ການຂຽນບົດຄວາມ. ..........................................................................................18

ບົດທີ 4 ..........................................................................................24

ການຂຽນບົດນຳ. ..........................................................................................24

ບົດທີ 5 ..........................................................................................33

ການຂຽນບົດວິຈານ..........................................................................................33

ບົດທີ 6 ..........................................................................................39

ການຂຽນບົດສາລະຄະດີ. ..........................................................................................39

ບົດທີ 7 ..........................................................................................43

ການຂຽນບົດຕຳນິ..........................................................................................43

ບົດທີ 8 ..........................................................................................48

ການຂຽນບົດລົງພິມໃນວາລະສານໂຄສະນາ..........................................................................................48

ບົດທີ 9 ..........................................................................................50

ການຂຽນບົດລົງໃນວາລະສານອະລຸນໃໝ່. ..........................................................................................50

ບົດທີ 10 ..........................................................................................55

ບາງບົດຮຽນໃນການຂຽນບົດຕ່າງໆ. ..........................................................................................55

**ຂຽນໂດຍ: ທ່ານ ຄຳວິສັນ ແກ້ວສຸວັນຜູ້ຊ່ວຍຫົວໜ້າຄະນະໂຄສະນາອົບຮົມສູນກາງພັກ**

# ພາກທີ VI

# ວິຊາເຕັກນິກການຂຽນຂ່າວ, ຂຽນບົດຂ່າວສານ, ບົດຄວາມ, ບົດນຳ, ບົດວິຈານ ແລະ ບົດໂຄສະນາຜ່ານສື່.

## ບົດທີ 1

## ການຂຽນຂ່າວ.

### I. ຄວາມສຳນຶກ ແລະ ຄວາມສຳຄັນຂອງຂ່າວ.

#### 1. ຄວາມສຳນຶກກ່ຽວກັບຂ່າວ.

ຂ່າວແມ່ນຮູບແບບການສ່ອງແສງເຫດການໜຶ່ງທີ່ວ່ອງໄວທັນການຕໍ່ເຫດການທີ່ຫາກໍເກີດຂຶ້ນ, ພວມເກີດຂຶ້ນ ແລະ ຈະເກີດຂຶ້ນໃນສະຖານທີ່ແຫ່ງໃດແຫ່ງໜຶ່ງທີ່ມີມູນຄວາມຈິງ ແລະ ມີຫຼັກຖານອ້າງອີງ.

#### 2. ຄວາມສຳຄັນຂອງຂ່າວ.

ຍ້ອນເກີດຂຶ້ນມາຫຼາຍປີຂ່າວຈຶ່ງຂະຫຍາຍເປັນຫຼາຍປະເພດ, ຫຼາຍຮູບຫຼາຍສີເຊັ່ນ: ຂ່າວກ້ອມ, ຂ່າວສັ້ນ, ຂ່າວວິຈານ, ຂ່າວບັນທຶກ ແລະ ຂ່າວສຳພາດເຫຼົ່ານີ້ເປັນຕົ້ນ. ຂ່າວຍັງບໍ່ຢຸດຢູ່ເທົ່ານີ້ມັນຈະຂະຫຍາຍຕົວຢ່າງລຽນຕິດອີງໃສ່ຄວາມຮຽກຮ້ອງຕ້ອງການຂອງສັງຄົມ.

ອາດເວົ້າໄດ້ວ່າ ຂ່າວແມ່ນການຂຽນບົດລາຍງານປະເພດໜຶ່ງທີ່ເປັນພື້ນຖານໃນວົງການສື່ມວນຊົນ. ສະນັ້ນ, ຈຶ່ງເຫັນປະລິມານຂ່າວໃນໜ້າໜັງສືພິມໂດຍສະເພາະໜັງສືພິມລາຍວັນກວມເຄິ່ງໜຶ່ງ. ເບື້ອງຄົນອ່ານກໍເຫັນວ່າອ່ານຂ່າວຫຼາຍກວ່າການອ່ານບົດລາຍງານປະເພດອື່ນໆ. ຈາກຄວາມຮຽກຮ້ອງຕ້ອງການດັ່ງກ່າວ ມັນຈຶ່ງສົ່ງຜົນສະທ້ອນເຖິງປະເພດຂອງຂ່າວຕ້ອງມີການພັດທະນາດີຂຶ້ນທາງດ້ານເນື້ອໃນ ເປັນຕົ້ນແມ່ນຄວາມວ່ອງໄວ, ຄວາມຖືກຕ້ອງຂອງເຫດການທີ່ສ່ອງແສງ.

ຈາກຄວາມສຳຄັນດັ່ງກ່າວ ໃນຖານະທີ່ປະເທດເຮົາ ເປັນປະເທດລະບອບປະຊາທິປະໄຕປະຊາຊົນ ກ້າວຂຶ້ນສັງຄົມນິຍົມ ພວກເຮົາຍ່ອມມີຫຼັກການໃນການຂຽນຂ່າວຕ່າງກັບລະບອບທຶນນິຍົມ ເພາະພວກເຮົາຖືວ່າຂ່າວມັນເປັນເຄື່ອງມືທາງດ້ານການເມືອງ-ແນວຄິດ ເພື່ອນຳໄປສຶກສາອົບຮົມມະຫາຊົນ, ຮັບໃຊ້ພາລະກິດປະຕິວັດ, ປົກປັກຮັກສາ ແລະ ສ້າງສາປະເທດຊາດ, ຂ່າວຍັງແມ່ນອາວຸດອັນແຫຼມຄົມຕ້ານຖອຍທຳນອງບົດເບືອນຂອງຄົນບໍ່ດີທີ່ມີຕໍ່ລະບອບຂອງພວກເຮົາ ແລະ ຕຳນິວິຈານປະກົດການຫຍໍ້ທໍ້ໃນສັງຄົມ.

### II. ລັກສະນະພື້ນຖານຂອງຂ່າວ.

①. ລັກສະນະພັກ.

②. ລັກສະນະຄວາມຈິງ (ທ່ຽງທຳ).

③. ລັກສະນະມະຫາຊົນ.

④. ລັກສະນະວ່ອງໄວ, ທັນການ.

⑤. ລັກສະນະສັ້ນກະທັດລັດ ແລະ ຈະແຈ້ງ.

**1. ລັກສະນະພັກສະແດງອອກໃນຂ່າວ.**

ຕ້ອງໃຫ້ຖືກຕາມທັດສະນະ, ທິດທາງນະໂຍບາຍຂອງພັກ ແນໃສ່ຮັບໃຊ້ຜົນປະໂຫຍດຂອງປະຊາຊົນ, ຂອງຊາດ, ຂ່າວຕ້ອງໂຄສະນາໃຫ້ທິດທາງນະໂຍບາຍ, ນຳເອົາແສງສະຫວ່າງທິດທາງນະໂຍບາຍ, ໄປສ່ອງແສງໃຫ້ມະຫາຊົນ. ຕິດຕາມເບິ່ງການປະຕິບັດນະໂຍບາຍຖືກ ຫຼື ຜິດຢູ່ບ່ອນໃດ? ພວກເຮົາຕ້ອງຍ້ອງຍໍສັນລະເສີນສິ່ງທີ່ເຮັດໄດ້ດີ ແລະ ຖືກຕ້ອງ. ພ້ອມກັນນັ້ນກໍຄ່ອຍດັດແປງ, ຕຳນິວິຈານສິ່ງທີ່ຜິດພາດແລ້ວຊີ້ທິດທາງ ແລະ ຊອກວິທີການທີ່ດີໃຫ້ມະຫາຊົນເຮັດຕາມ. ເຮັດໄດ້ຄືແນວນັ້ນ, ຂ່າວຂອງເຮົາຈຶ່ງສ່ອງແສງໄດ້ທັງຕົວຈິງໃນການເຄື່ອນໄຫວຂອງມະຫາຊົນທັງຊຸກຍູ້ການເຄື່ອນໄຫວນັ້ນກ້າວຂຶ້ນຢ່າງເຂັ້ມແຂງກວ່າເກົ່າ. ພ້ອມກັນນັ້ນ ກໍຊ່ວຍໃຫ້ພັກກຳແໜ້ນແທດເຖິງຕໍ່ສະພາບການ, ສືບຮູ້ ແລະ ແກ້ໄຂບັນຫາທີ່ເກີດຂຶ້ນຢ່າງທັນການ. ເມື່ອເປັນແນວນັ້ນ ກໍໝາຍຄວາມວ່າທັງຮັບໃຊ້ພັກທັງຮັບໃຊ້ມະຫາຊົນ, ຂ່າວໄດ້ກາຍເປັນຕ່ອງໂສ້ ຫຼື ສາຍໄຍຜູກພັນລະຫວ່າງພັກກັບມະຫາຊົນ.

**+ ລັກສະນະພັກບໍ່ຂັດແຍ່ງກັບເສລີພາບຄວາມເປັນຈິງຂອງຂ່າວ.**

ເສລີພາບໃນການຂຽນຂ່າວ ກໍຄື ເສລີພາບອື່ນໆໃນສັງຄົມຂອງພວກເຮົາ ລ້ວນແຕ່ແມ່ນເສລີພາບທີ່ມີລັກສະນະຊົນຊັ້ນໃນບົດໂອ້ລົມຂອງທ່ານ ບຸນຍັງ ວໍລະຈິດ ນາຍົກລັດຖະມົນຕີ ກ່າວຕໍ່ກອງປະຊຸມໃຫຍ່ຄັ້ງທີ VII ຂອງສະມາຄົມນັກຂ່າວ (ຄັ້ງວັນທີ 8 ພຶດສະພາ 2002) ໄດ້ເວົ້າເຖິງເສລີພາບຂອງສື່ມວນຊົນວ່າ: “ເສລີພາບຕ້ອງຕິດພັນກັບລະບຽບວິໄນ, ປະຊາທິປະໄຕຕ້ອງຢູ່ໃນຂອບເຂດຂອງກົດໝາຍ, ເສລີພາບຂອງໜັງສືພິມຕ້ອງຕິດພັນກັບຄຸນສົມບັດ ແລະ ຄວາມຮັບຜິດຊອບຕໍ່ໜ້າທີ່ຂອງພົນລະເມືອງນັ້ນແມ່ນເນື້ອແທ້ເສລີພາບຂອງໜັງສືພິມຢູ່ລາວ”.

ໃນລະບອບນາຍທຶນມີແຕ່ຊົນຊັ້ນນາຍທຶນ (ຜູ້ປົກຄອງຈຳນວນໜ້ອຍ) ຈຶ່ງມີເສລີພາບ, ສ່ວນຊົນຊັ້ນກຳມະຊີບ ແລະ ປະຊາຊົນຜູ້ອອກແຮງງານມີເສລີພາບແບບຈຳກັດ ເສລີນັ້ນເດັດຂາດບໍ່ໃຫ້ແຕະຕ້ອງເຖິງສິດຜົນປະໂຫຍດຂອງຊົນຊັ້ນນາຍທຶນລະບອບສັງຄົມຂອງພວກເຮົາແມ່ນຮັບໃຊ້ຊົນຊັ້ນຊາວຜູ້ອອກແຮງງານ. ດັ່ງນັ້ນ, ເສລີພາບຊາວຜູ້ອອກແຮງງານແມ່ນເສລີພາບທີ່ແທ້ຈິງ ເສລີພາບນັ້ນມັນຕ້ອງຕິດພັນກັບລັກສະນະພັກ. ຜູ້ຂຽນຂ່າວຖ້າຮັບຮູ້ໄດ້ຢ່າງຈະແຈ້ງຈຶ່ງມີເສລີພາບຢ່າງເຕັມສ່ວນໃນວຽກງານຂອງຕົນ.

**2. ລັກສະນະຄວາມຈິງ (ທ່ຽງທຳ).**

- ຄວາມຈິງໃນຂ່າວແມ່ນລັກສະນະທີ່ຂາດບໍ່ໄດ້ໃນສື່ມວນຊົນ. ທ່ານ ເລນິນ ເວົ້າວ່າ: “ເວົ້າຄວາມຈິງຂຽນຕາມລັກສະນະຕົວຈິງ ແລະ ນັບຖືຄວາມຈິງ ແມ່ນບົດຮຽນທຳອິດໃນການຂຶ້ນຫ້ອງຮຽນວິຊາຂຽນຂ່າວ”. ສະນັ້ນ, ການຂຽນຂ່າວກໍຕ້ອງອະທິບາຍໃຫ້ໄດ້ສັດຈະທຳ. ເພາະຄວາມຈິງມັນມີພະລັງແຮງທົບຮ້ອຍເທື່ອທຽບກັບການເວົ້າດ້ວຍປາກ. ຖ້າຈະເວົ້າທິດສະດີເທົ່າໃດໜ້າ ກໍບໍ່ສາມາດເຮັດໃຫ້ຄົນເຊື່ອໄດ້ຢ່າງໜັກແໜ້ນເທົ່າກັບການອອກຂ່າວສ່ອງແສງດ້ວຍຄວາມຈິງ, ສະແດງຄວາມຈິງຊັດເຈນ ແລະ ຖືກກັບທາດແທ້ຂອງເຫດການ.

ການຕົວະຍົວະຫຼອກລວງບໍ່ໄວກໍຊ້າຈະຖືກເປີດເຜີຍ ແລະ ປະລາໄຊຖ້າພວກເຮົາຂຽນຂ່າວຕາມຄວາມຈິງ ຈະເປັນການປະກອບສ່ວນຍົກສູງນ້ຳໃຈ ກໍຄື ຄວາມເຊື່ອໝັ້ນຂອງມະຫາຊົນຕໍ່ການນຳພາຂອງພັກ ແລະ ລັດ.

ລັກສະນະຄວາມຈິງຂອງຂ່າວ ມັນສະແດງອອກໃນການສ່ອງແສງທ່ຽງທຳກ່ຽວກັບທາດແທ້ຂອງເຫດການ ແລະ ສະພາບການທີ່ເກີດຂຶ້ນປະຈຳມື້ ປະຈຳວັນ. ລັກສະນະຄວາມຈິງຂອງຂ່າວບໍ່ຂັດແຍ່ງກັບທາດແທ້ຂອງຊີວິດການເປັນຢູ່ຂອງມະຫາຊົນ.

ລັກສະນະຄວາມຈິງຂອງຂ່າວແຕກຕ່າງກັບລັກສະນະຄວາມຈິງໃນບົດປະພັນວັນນະຄະດີ ເພາະຂ່າວບໍ່ສາມາດເຮັດໃຫ້ເຫດການທຳມະດາກາຍເປັນອັນເດັ່ນແບບປັ້ນແຕ່ງຂຶ້ນ ອີກຢ່າງໜຶ່ງຂ່າວກໍບໍ່ມີສິດແຕ້ມແຕ່ງລະບາຍສີ. ຂ່າວມີແຕ່ອີງໃສ່ເຫດການທີ່ມີຈິງພວມເກີດຂຶ້ນ ຫຼື ຈະເກີດຂຶ້ນ. ແຕ່ຄວາມຈິງທີ່ສະແດງອອກໃນຖານະສື່ມວນຊົນມັນກໍຕ້ອງເໝາະສົມກັບສິດຜົນປະໂຫຍດຂອງພັກ ແລະ ລັດຂອງປະເທດຊາດຂອງຊົນຊັ້ນ ບໍ່ແມ່ນຄວາມຈິງໃດໆ ກໍຕ້ອງຂຽນອອກເປັນຂ່າວໝົດ. ຄວາມລັບຂອງຊາດ ຫຼື ບາງບັນຫາຂຽນອອກມັນບໍ່ເປັນປະໂຫຍດໃຫ້ແກ່ປະເທດຊາດ ແລະ ປະຊາຊົນກໍບໍ່ຈຳເປັນຂຽນອອກ.

**+ ເຮັດແນວໃດຈຶ່ງຮັບປະກັນລັກສະນະຄວາມຈິງໃນຂ່າວ.**

- ຕ້ອງກຳນົດຫຼັກໝັ້ນອັນເດັດຂາດຄື: ນັບຖືລັກສະນະຄວາມຈິງ, ເດັດດ່ຽວຄັດຄ້ານການເສກສັນປັ້ນແຕ່ງ, ການຕື່ມແຖມ ແລະ ຖືເບົາລັກສະນະຄວາມຈິງ.

- ຝຶກຝົນຫຼໍ່ຫຼອມແນວຄິດ, ໝູນໃຊ້ລັດທິວັດຖຸນິຍົມສັດຈະວິພາກ ເພື່ອກຳແໜ້ນ ແລະ ສ່ອງແສງຄວາມຈິງໂດຍຜ່ານບັນດາປະກົດການຮູບນອກທີ່ສັບສົນຂອງມັນ. ຫຼີກເວັ້ນການເບິ່ງເຫັນແຕ່ພາກສ່ວນໃດໜຶ່ງຢ່າງຜິວເຜີນ, ໃຊ້ຫົວຄິດຊອກຮູ້, ວິໄຈ ແລະ ມີແບບແຜນຄົ້ນຄວ້າກວດກາຢ່າງເລິກເຊິ່ງ.

- ຍົກສູງລະດັບໃນທຸກດ້ານ (ແນວທາງນະໂຍບາຍຂອງພັກກ່ຽວກັບວຽກງານແນວຄິດ, ສື່ມວນຊົນ, ເສດຖະກິດ ແລະ ຄວາມຮັບຮູ້ທົ່ວໄປ ກໍຄື ລະດັບທາງດ້ານວິຊາສະເພາະທຸກຂົງເຂດວຽກງານ). ໂດຍສະເພາະແມ່ນລະດັບວິຊາການຂີດຂຽນໃຫ້ແໜ້ນໜາຕ້ອງຮໍ່າຮຽນຝຶກຝົນຫຼໍ່ຫຼອມໃຫ້ຫຼາຍ ແລະ ຕ້ອງມີຄວາມມານະພະຍາຍາມທີ່ສຸດຈຶ່ງຈະເຮັດໄດ້.

**3. ລັກສະນະມະຫາຊົນ.**

- ມະຫາຊົນແມ່ນຜູ້ສ້າງປະຫວັດສາດ, ແມ່ນຜູ້ເປັນເຈົ້າລວມໝູ່ໃນສັງຄົມໂດຍພາຍໃຕ້ການນຳຂອງພັກ. ຂ່າວແມ່ນອາວຸດຕໍ່ສູ້ຊົນຊັ້ນ, ຮັບໃຊ້ຜົນປະໂຫຍດຂອງປະເທດຊາດ. ດັ່ງນັ້ນ, ຂ່າວຕ້ອງຮັບໃຊ້ສິດຜົນປະໂຫຍດຂອງປະຊາຊົນຢ່າງກວ້າງຂວາງ. ຂ່າວຂອງພວກນາຍທຶນ, ມັນກໍຮັບໃຊ້ສິດຜົນປະໂຫຍດຂອງພວກປົກຄອງຈຳນວນໜ້ອຍເທົ່ານັ້ນ, ບໍ່ແມ່ນຈະໄດ້ຮັບໃຊ້ສິດຜົນປະໂຫຍດຂອງມະຫາຊົນອັນຫຼວງຫຼາຍຄືພວກເຮົາ.

- ຂ່າວຕ້ອງໄດ້ຮັບການສ່ອງແສງອອກເປັນປະຈຳ ກ່ຽວກັບການເຄື່ອນໄຫວວຽກງານ ກໍຄື ຫົວຄິດປະດິດສ້າງຂອງມະຫາຊົນໃນການອອກແຮງງານ, ການຕໍ່ສູ້ ແລະ ວຽກງານອື່ນໆຂອງຊາດ. ສ່ອງແສງບຸກຄົນທີ່ມີຄວາມກ້າວໜ້າ, ບັນດາປັດໄຈໃໝ່. ບັນຫາທີ່ພົ້ນເດັ່ນໃນຂະບວນການຂອງມະຫາຊົນ, ຕ້ອງກຳແໜ້ນແນວຄິດຈິດໃຈ, ຄວາມມຸ່ງມາດປາຖະໜາອັນຊອບທຳຂອງມະຫາຊົນ.

- ປຸກລະດົມ, ຈັດຕັ້ງມະຫາຊົນເຂົ້າຮ່ວມປະກອບສ່ວນໃນວຽກງານສ້າງສາປະເທດຊາດ. ພ້ອມກັນນັ້ນກໍາລະດົມ ແລະ ຈັດຕັ້ງມະຫາຊົນປະກອບສ່ວນໃນການຕໍານິຕິຊົມ, ການກະຈາຍຂ່າວໃນສື່ມວນຊົນ ເພື່ອເຮັດໃຫ້ໜັງສືພິມ, ວິທະຍຸ ແລະ ໂທລະພາບມີຂ່າວທີ່ມີເນື້ອໃນດີ.

- ລັກສະນະມະຫາຊົນຍັງສະແດງອອກໃນການຂຽນຂ່າວ, ອອກຂ່າວແນວໃດເຮັດໃຫ້ມະຫາຊົນຟັງໄດ້ງ່າຍ ແລະ ເຂົ້າໃຈງ່າຍ. ເຮັດໄດ້ແນວນັ້ນ ຈຶ່ງເປັນຜົນດີແກ່ມະຫາຊົນ ແລະ ຮັບໃຊ້ມະຫາຊົນໄດ້ຢ່າງແທ້ຈິງ.

- ເພື່ອໃຫ້ຂ່າວມີລັກສະນະມະຫາຊົນຜູ້ຂຽນຂ່າວຕ້ອງມີນໍ້າໃຈມະນຸດສະທໍາຮັກປະເທດຊາດບ້ານເມືອງ, ມີນໍ້າໃຈຜູກພັນກັບປະຊາຊົນ. ມີແຕ່ເຮັດໄດ້ຄືແນວນັ້ນ ຈຶ່ງສ່ອງແສງໄດ້ກ່ຽວກັບພາລະກິດຂອງມະຫາຊົນ. ຖ້າລັກສະນະມະຫາຊົນໄດ້ຮັບການສະແດງອອກຢ່າງຄົບຖ້ວນ ແລະ ຖືກຕ້ອງແລ້ວຈະເປັນການຊ່ວຍຊູ ແລະ ຮັບໃຊ້ໃຫ້ແກ່ລັກສະນະພັກ ແລະ ບັນດາຫຼັກການອື່ນໆຂອງຂ່າວ.

### 4. ລັກສະນະໄວ ແລະ ທັນເຫດການ.

- ຂ່າວຍາມໃດກໍຕິດພັນກັບເຫດການທີ່ຮີບດ່ວນທີ່ສຸດໃນຊີວິດປະຈໍາວັນ ແລະ ສັງຄົມພວກເຮົາ ຕ້ອງການນໍາເອົາສະພາບຂ່າວຄາວໄປເຜີຍແຜ່ຕໍ່ມະຫາຊົນໃຫ້ໄວ ແລະ ທັນການ. ນັ້ນແມ່ນຄວາມຮຽກຮ້ອງຕ້ອງການຂອງຂ່າວບັນດາພາຫານະສື່ມວນຊົນປະເພດລາຍວັນ ແມ່ນຕ້ອງການໃຫ້ມີຂ່າວໄວເທົ່າໃດຍິ່ງດີ. ເພາະການທີ່ໃຫ້ຂ່າວຊ້າເກີນໄປນັ້ນ ມັນເປັນເຫດຜົນອັນໜຶ່ງທີ່ພາໃຫ້ພາຫະນະສື່ມວນຊົນເສຍລັກສະນະທັນການ, ຫຼຸດຜ່ອນປະສິດທິພາບໃນການໂຄສະນາ, ການປຸກລະດົມ ແລະ ການຈັດຕັ້ງ. ວິທະຍຸ ຫຼື ໂທລະພາບໃຊ້ຮູບການຖ່າຍທອດສົດການຮັບສົ່ງຜ່ານດາວທຽມ ແລະ ອື່ນໆ ນັ້ນລ້ວນແຕ່ຮັບໃຊ້ໃຫ້ແກ່ຄວາມຕ້ອງການດ້ານຄວາມໄວ ແລະ ທັນການຂອງຂ່າວທັງນັ້ນ.

- ຂ່າວບໍ່ສະເພາະຕ້ອງການໃຫ້ໄວເທົ່ານັ້ນແຕ່ຕ້ອງການໃຫ້ທັນການອີກ. ທັນການໝາຍຄວາມວ່າຂຽນໄດ້ໄວແລ້ວ, ແຕ່ຍັງຕ້ອງອອກໃຫ້ໄດ້ໄວ, ອອກໃຫ້ທັນກັບເວລາທີ່ຕ້ອງການ. ຖ້າວ່າອອກທັນການກັບເວລາທີ່ຕ້ອງການແລ້ວຈະມີປະສິດທິພາບສູງ, ເປັນຜົນດີໃຫ້ແກ່ຄວາມຕ້ອງການໃດໜຶ່ງຂອງສັງຄົມ. ການອອກຂ່າວໄວ ຫຼື ຊ້ານັ້ນ ບາງກໍລະນີພັດຂຶ້ນກັບທ່າທີທາງການເມືອງ ຫຼື ການຊັ່ງຊາຜົນໄດ້ຜົນເສຍຂອງບັນຫານັ້ນໆ, ແຕ່ມີບາງເທື່ອບໍ່ອອກຂ່າວຍ້ອນຢ້ານເສຍລັບ ຫຼື ອອກບໍ່ມີຜົນປະໂຫຍດຕໍ່ປະເທດຊາດ, ບາງກໍລະນີການອອກຂ່າວໃດໜຶ່ງແມ່ນເພື່ອສະແດງທ່າທີຄັດຄ້ານຕໍ່ບັນຫານັ້ນໆ. ແຕ່ຢາກໃຫ້ຂ່າວອອກໄດ້ໄວ, ທັນເວລາກ່ອນອື່ນໝົດນັກຂ່າວຕ້ອງຮູ້ຂຽນຂ່າວໄວ, ຕ້ອງກໍາແໜ້ນແນວທາງນະໂຍບາຍຂອງພັກ, ຂອງລັດ. ເຂົ້າໃຈໄວ, ມີຄວາມຮູ້ຕໍ່ອັນໃໝ່ຢ່າງວ່ອງໄວ.

### 5. ລັກສະນະສັ້ນກະທັດຮັດ ແລະ ຈະແຈ້ງ.

ເຫດຜົນທີ່ວ່າຕ້ອງໃຫ້ສັ້ນ, ກະທັດຮັດນັ້ນມັນພົວພັນເຖິງຜູ້ອ່ານ, ຜູ້ຟັງຂ່າວ ອ່ານຂ່າວເຂົ້າໃຈງ່າຍໂດຍສະເພາະໃນໜ້າໜັງສືພິມແມ່ນມີຂອບເຂດຈໍາກັດ. ວິທະຍຸ, ໂທລະພາບເວລາກະຈາຍສຽງ ແລະ ພາບກໍຕ້ອງການໃຫ້ຂ່າວສັ້ນຈຶ່ງອອກໄດ້ຫຼາຍຂ່າວ, ຂ່າວສັ້ນຈຶ່ງຂຽນໄດ້ໄວ, ທັນເວລາເພາະຂ່າວຕິດພັນກັບເຫດການທີ່ຮີບດ່ວນ.

ຂ່າວຕ້ອງການຂຽນຈະແຈ້ງ, ເຂົ້າໃຈງ່າຍຈຶ່ງຈະມີຜົນໃນການໂຄສະນາ. ປຸກລະດົມນໍາພາ ແລະ ຈັດຕັ້ງມະຫາຊົນ. ຖ້າຂ່າວຂຽນບໍ່ຈະແຈ້ງຈະພາໃຫ້ມະຫາຊົນບໍ່ເຂົ້າໃຈ ຫຼື ເຂົ້າໃຈຜິດ, ເມື່ອເປັນແນວນັ້ນກໍໝາຍຄວາມວ່າ

ຂ່າວທີ່ເຮົາຂຽນໄປນັ້ນບໍ່ເປັນປະໂຫຍດຊ້ຳບໍ່ໜຳບາງເທື່ອຍັງກໍ່ຄວາມເສຍຫາຍອີກດ້ວຍ. ດັ່ງນັ້ນ, ວິທີຂຽນຂ່າວຈະຕ້ອງເອົາໃຈໃສ່ຂຽນໃຫ້ສັ້ນແຕ່ຕ້ອງຈະແຈ້ງ, ມີເນື້ອໃນຄົບຖ້ວນ.

ຂ່າວແນວໃດຈຶ່ງແມ່ນສັ້ນ, ກະທັດຮັດ? ມີຈັກປະໂຫຍກຄວາມເວົ້າຈຶ່ງຈະພໍດີ?. ນັ້ນບໍ່ມີຂໍ້ກຳນົດຢ່າງຕາຍຕົວ ແລະ ລະດັບຄາດໝາຍແມ່ນຂຽນແນວໃດໃຫ້ຄົບຖ້ວນແຕ່ລະບັນຫາ, ແຕ່ລະເຫດການ ຫຼື ສິ່ງທີ່ຕ້ອງການຈະເວົ້າດ້ວຍປະໂຫຍກຄຳເວົ້າໃຫ້ພໍດີກັບຄວາມສຳຄັນຂອງເຫດການທີ່ຈະຂຽນ.

ບັນດາຫຼັກການພື້ນຖານຂອງຂ່າວມີການພົວພັນກັນຢ່າງສະໜິດແໜ້ນ, ມີຜົນສະທ້ອນເຊິ່ງກັນ ແລະ ກັນ ບົນພື້ນຖານລັກສະນະພັກເປັນກົກ ບັນດາຫຼັກການຂອງຂ່າວນັ້ນບໍ່ສະແດງອອກຕາມລຳດັບ, ແຕ່ມັນເຄີຍສະແດງອອກຜ່ານການຮັບຮູ້, ການເລືອກເຟັ້ນເອກະສານ, ການກຳນົດບັນຫາລະອຽດ, ການໃຊ້ໄວຍະກອນ ແລະ ຮູບພາບປະກອບຂອງຂ່າວ. ການໝູນໃຊ້ບັນດາຫຼັກການນັ້ນຕ້ອງມາຈາກພື້ນຖານທິດສະດີ ແລະ ແນວທາງຂອງພັກໃນແຕ່ລະໄລຍະ ກໍຄື ຄວາມເປັນຈິງຢ່າງມີຊີວິດຊີວາໃນຊີວິດສັງຄົມ. ຄຸນປະໂຫຍດຂອງຂ່າວແມ່ນການພິສູດຢ່າງຄົບຖ້ວນ ແລະ ຖືກຕ້ອງກ່ຽວກັບການໝູນໃຊ້ເຂົ້າໃນການຂຽນຂ່າວຢ່າງຄ່ອງແຄ້ວຈຶ່ງຈະຂຽນຂ່າວທີ່ດີອອກມາໄດ້.

### III. ຢາກຂຽນຂ່າວໄດ້ດີຕ້ອງກຳແໜ້ນບາງບັນຫາທີ່ເປັນພື້ນຖານ.

#### 1. ຄວນເອົາໃຈໃສ່ ດັ່ງນີ້:

+ ຫົວຂໍ້ຂ່າວຈະເນັ້ນເຖິງບັນຫາໃດ?.

+ ຈິດໃຈລວມໃນຂ່າວຈະສະເໜີບັນຫາຫຍັງ?.

+ ເຫດການທີ່ເກີດຂຶ້ນ (ຂໍ້ມູນອ້າງອີງ, ບຸກຄົນໃນຂ່າວ).

+ ໂຄງຮ່າງການຂຽນຂ່າວ (ຫົວຂໍ້, ເດີນເລື່ອງ, ສະຫຼຸບ).

+ ພາສາໃນຂ່າວ (ໄວຍະກອນ, ສຳນວນການຂຽນ).

**- ຫົວຂໍ້ຂ່າວຈະເນັ້ນເຖິງບັນຫາໃດ?.**

ໝາຍຄວາມວ່າ ຫົວຂໍ້ຈະຕ້ອງໄດ້ເນັ້ນໃສ່ບັນຫາຕົວຈິງກ່ຽວກັບເສດຖະກິດ-ສັງຄົມ, ການເມືອງ ຫຼື ປ້ອງກັນຊາດປ້ອງກັນຄວາມສະຫງົບ ຊຶ່ງບັນຫາດັ່ງກ່າວ ແມ່ນເປັນບັນຫາທີ່ເຂດຊຸມຊົນ, ທ້ອງຖິ່ນ ຫຼື ສັງຄົມມີຄວາມສົນໃຈຢາກຮູ້, ຢາກເຂົ້າໃຈເຖິງເນື້ອໃນ, ທາດແທ້ຂອງມັນ.

**- ຈິດໃຈລວມໃນຂ່າວຈະສະເໜີເຖິງບັນຫາຫຍັງ?.**

ໃນຫົວຂໍ້ເຖິງວ່າຈະສັ້ນ, ຮັດກຸມ ແຕ່ມັນສ່ອງແສງບັນດາເຫດການທີ່ເຮັດຂຶ້ນຕົວຈິງ, ຊຶ່ງມີສາຍພົວພັນເຖິງຫຼາຍປັດໄຈ, ພາກສ່ວນ, ຂົງເຂດໝາຍວ່າ ຕ້ອງຊີ້ໃຫ້ເຫັນສາຍພົວພັນ (ບັນຫາຕົ້ນຕໍ) ຂອງເຫດການດັ່ງກ່າວ.

**- ເຫດການທີ່ເກີດຂຶ້ນ, ຂໍ້ມູນອ້າງອີງ, ບຸກຄົນໃນຂ່າວ.**

ໝາຍວ່າຕ້ອງຊີ້ແຈງໃຫ້ເຫັນວ່າ ເຫດການນັ້ນເກີດຂຶ້ນຢູ່ໃສ, ເຫດຜົນ, ຫຼັກຖານຕົວຈິງຈະແຈ້ງ.

- ໂຄງຮ່າງການຂຽນຂ່າວ (ຫົວຂໍ້, ເດີນເລື່ອງ, ສະຫຼຸບ) (ຈະອະທິບາຍ 1 ຂໍ້ 3).

**- ພາສາໃນຂ່າວ (ໄວຍາກອນ, ສຳນວນການຂຽນ).**

ພະຍາຍາມບໍ່ໃຫ້ຜິດໄວຍາກອນ, ຖ້າຜິດຈະເຮັດໃຫ້ເນື້ອໃນໃຈຄວາມປ່ຽນໄປ ຫຼື ພ້ຽນໄປບໍ່ໄດ້ຄວາມ ໝາຍທີ່ຢາກສ່ອງແສງ, ສັບສຳນວນຄຳເວົ້າກໍພະຍາຍາມໃຊ້ສັບທີ່ເຂົ້າໃຈງ່າຍ, ໃຊ້ທົ່ວໄປ, ບໍ່ຄວນໃຊ້ສຳນວນຄຳເວົ້າທ້ອງຖິ່ນ (ຖ້າບໍ່ຈຳເປັນ).

**2. ລະບຽບທີ່ງ່າຍສຳລັບຜູ້ຂຽນຂ່າວ.**

- ຢ່າລືມຜູ້ອ່ານ.
- ຮັກສາເນື້ອໃນໃຫ້ສັ້ນ ແລະ ງ່າຍດາຍ.
- ໃຫ້ຂໍ້ມູນຫຼາຍທີ່ສຸດໃນປະໂຫຍກຄຳເວົ້າທີ່ສັ້ນທີ່ສຸດ.
- ຖ້າສິ່ງໃສໃນຂໍ້ມູນໃຫ້ຖາມ, ຂໍ້ມູນບໍ່ລະອຽດໃຫ້ປະຖິ້ມ.
- ຕ້ອງຄຳນຶງວ່າຜູ້ອ່ານຕ້ອງການຢາກຮູ້ວ່າເຮົາເວົ້າຫຍັງໃນຂ່າວ?.
- ການອ້າງອີງຫຼັກຖານຢັ້ງຢືນແຫຼ່ງຂ່າວ.

ຊື່...............................

ອາຍຸ...........................

ຕຳແໜ່ງ......................

**+ ຢ່າລືມຜູ້ອ່ານ:** ອັນທີ່ວ່າຂ່າວມັນຈະກະຈາຍໄປຢ່າງກວ້າຂວາງ, ທັງພາຍໃນ ແລະ ຕ່າງປະເທດ, ຕົວເມືອງ, ຊົນນະບົດ. ດັ່ງນັ້ນ, ຜູ້ອ່ານມັນຫຼາກຫຼາຍລະດັບ, ຄວາມຮັບຮູ້, ເຂົ້າໃຈ, ຜູ້ບໍ່ຫວັງດີ... ສະນັ້ນ, ເນັ້ນໃນຂ່າວຕ້ອງໃຫ້ເຂົ້າໃຈງ່າຍ, ຫຼັກຖານຕ້ອງຊັດເຈນ, ບໍ່ໃຫ້ມີຊ່ອງຫວ່າງແກ່ຜູ້ບໍ່ຫວັງດີ ຫຼື ບິດເບືອນ.

- ສັງກັດບ້ານ................ເມືອງ, ອົງການ, ສຳນັກງານ.........................................

- ກວດເບິ່ງການຂຽນໜັງສື ແລະ ຢ້ຳຄືນຂໍ້ມູນທີ່ໄດ້ຮັບດ້ວຍການຂໍນາມບັດ, ເບິ່ງຕາມໜັງສືທາງການ , ໃບສະເໜີແຈ້ງການ.

**3. ໂຄງຮ່າງຂອງການຂຽນຂ່າວ.**

- ຫົວຂໍ້ (ຫົວເລື່ອງ)
- ເດີນເລື່ອງ
- ສະຫຼຸບ

**ໂຄງສ້າງໃນການຂຽນຂ່າວປະກອບດ້ວຍຄຳຖາມທີ່ຖືວ່າເປັນກຸນແຈສຳຄັນໃນການຂຽນຂ່າວຊຶ່ງເອີ້ນວ່າ 5 W ແລະ H.**

When, ເວລາໃດ**?** ເຫດການດັ່ງກ່າວເກີດຂຶ້ນເວລາໃດ?.

Where, ຢູ່ໃສ**?** ເຫດການດັ່ງກ່າວເກີດຂຶ້ນຢູ່ໃສ?.

Who, ແມ່ນໃຜ**?** ແມ່ນໃຜມີສ່ວນຮ່ວມໃນເຫດການ?.

What, ແມ່ນຫຍັງ**?** ແມ່ນຫຍັງເກີດຂຶ້ນ?.

Why, ເປັນຫຍັງ**?** ເປັນຫຍັງເຫດການດັ່ງກ່າວຈຶ່ງເກີດຂຶ້ນ**?** ແລະ How, ເປັນແນວໃດ**?.**

ໂຄງປະກອບຂອງຂ່າວປຽບດັ່ງຮູບປີລະມິດປີ້ນລົງຫຼືວ່າຮູບ 3 ຫຼ່ຽມປີ້ນລົງ ຊຶ່ງໝາຍເຖິງຄວາມສຳຄັນໃນການຈັດວາງສິ່ງສຳຄັນທີ່ສຸດແມ່ນຢູ່ທາງເທິງ ແລະ ຫຼຸດລົງຕາມລຳດັບ.




**ຕົວຢ່າງ: (ການຂຽນຂ່າວຈາກວາລະສານໂຄສະນາ).**

**<u>ຫົວຂໍ້ຂ່າວ</u>: ວາລະສານກັບການເຮັດໜ້າທີ່ການເມືອງໃນໄລຍະໃໝ່.**

ກົມສື່ມວນຊົນ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ (ຖວທ) ໄດ້ຈັດສຳມະນາກ່ຽວກັບ "ວາລະສານກັບການເຮັດໜ້າທີ່ການເມືອງໃນໄລຍະໃໝ່" ໃນວັນທີ 5 ສິງຫາ 2015 ທີ່ສະຖານີວິທະຍຸກະ ຈາຍສຽງແຫ່ງຊາດ ພາຍໃຕ້ການເປັນປະທານ ຂອງທ່ານ ສະຫວັນຄອນ ຣາຊມຸນຕຣີ, ລັດຖະມົນຕີຊ່ວຍວ່າການ ກະຊວງຖະແຫຼ່ງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ມີບັນດາຫົວໜ້າຄະນະບັນນາທິການ ແລະ ວິຊາການຈາກວາລະສານ ແລະ ພາກສ່ວນກ່ຽວຂ້ອງເຂົ້າຮ່ວມ.

ທ່ານ ສະຫວັນຄອນ ຣາຊມຸນຕຣີ ໄດ້ກ່າວບາງຕອນວ່າ: ຜ່ານການສະຫຼຸບຕີລາຄາຂອງອົງການຄຸ້ມຄອງວຽກງານຖະແຫຼງຂ່າວສື່ມວນຊົນ ເຫັນວ່າປະເພດສື່ສິ່ງພິມ ວາລະສານພາຍໃຕ້ການຄຸ້ມຄອງ, ຊີ້ນຳ-ນຳພາຂອງຂະແໜງການທີ່ຮັບຜິດຊອບ ໄດ້ມີການພັດທະນາທັງດ້ານປະລິມານ ແລະ ຄຸນນະພາບ ໂດຍເຮັດໜ້າທີ່ບົດບາດເຜີຍແຜ່ແນວທາງ, ນະໂຍບາຍຂອງພັກ ແລະ ລະບຽບກົດໝາຍຂອງລັດ, ໃຫ້ຄວາມຮູ້ຂໍ້ມູນຂ່າວສານ, ສາລະບັນເທີງແກ່ສັງຄົມ, ການສຳມະນາໃນຄັ້ງນີ້ເປັນໂອກາດອັນດີທີ່ຈະໄດ້ປຶກສາຫາລືກັນ ກ່ຽວກັບການປັບປຸງດ້ານເນື້ອໃນ ແລະ ຮູບແບບຂອງວາລະສານແຕ່ລະປະເພດ; ເຮັດແນວໃດ ເພື່ອໃຫ້ສັງຄົມໄດ້ຮັບຮູ້ ແລະ ເຂົ້າໃຈເຖິງຄວາມສຳຄັນ

ແລະ ບົດບາດຂອງສື່ມວນຊົນ, ເຫັນດີເຖິງຄວາມສຳຄັນຂອງຂໍ້ມູນຂ່າວສານ ໃນຍຸກປັດຈຸບັດ ແລະ ບັນຫາສຳຄັນອື່ນໆ. ພ້ອມທັງແລກປ່ຽນຄຳຄິດຄຳເຫັນ ເພື່ອເຮັດແນວໃດຈະປະຕິບັດໜ້າທີ່ຮັບໃຊ້ສັງຄົມຕາມພາລະໜ້າທີ່ໃຫ້ຖືກຕ້ອງຕາມກົດໝາຍ, ຕາມແນວທາງ ແລະ ຈັນຍາບັນຂອງສື່ມວນຊົນ.

ທ່ານ ໄດ້ຕາງໜ້າຄະນະພັກ, ຄະນະນຳກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຕີລາຄາສູງຕໍ່ການປະກອບສ່ວນຂອງພາຫະນະສື່ມວນຊົນ, ຄະນະອຳນວຍການ, ຄະນະບັນນາທິການ, ບັນດາພະນັກງານສື່ມວນຊົນທຸກພາກສ່ວນ ໃນການເຮັດໜ້າທີ່ໂຄສະນາເຜີຍແຜ່ແນວທາງ, ແຜນນະໂຍບາຍຂອງພັກ ແລະ ລະບຽບ ກົດໝາຍຂອງລັດ, ໃຫ້ການສຶກສາອົບຮົມທາງດ້ານການເມືອງ-ແນວຄິດ ໃຫ້ທົ່ວສັງຄົມ, ປຸກລະດົມຊຸກຍູ້ມະຫາ ຊົນປະກອບສ່ວນປະຕິບັດ 2 ໜ້າທີ່ຍຸດທະສາດ ຄື: ໃນພາລະກິດແຫ່ງການປົກປັກຮັກສາປະເທດຊາດ ສືບຕໍ່ສ້າງ ແລະ ຂະຫຍາຍລະບອບປະຊາທິປະໄຕປະຊາຊົນ, ສ້າງປະຖົມປັດໃຈໃຫ້ແກ່ການກ້າວຂຶ້ນສັງຄົມນິຍົມເທື່ອລະກ້າວ.

ໃນໂອກາດເຂົ້າຮ່ວມກອງປະຊຸມສຳມະນາໃນຄັ້ງນີ້ ທ່ານ ຄຳວິສັນ ແກ້ວສຸວັນ, ຫົວໜ້າຄະນະບັນນາທິການ ວາລະສານໂຄສະນາ ໄດ້ມີຄຳເຫັນຕາມຄຳຖາມເຈາະຈີ້ມຂອງຄະນະຮັບຜິດຊອບກອງປະຊຸມ ໂດຍທ່ານ ໄດ້ສະແດງຄວາມເປັນເອກະພາບຕໍ່ການຕີລາຄາ ຂອງກົມສື່ມວນຊົນກ່ຽວກັບການຄຸ້ມຄອງ ແລະ ຊີ້ນຳ-ນຳພາວຽກງານສື່ມວນຊົນ ຊຶ່ງມີການພັດທະນາທັງດ້ານປະລິມານ ແລະ ຄຸນນະພາບ; ພ້ອມດຽວກັນນີ້ ທ່ານກໍໄດ້ສະແດງຄວາມເປັນຫ່ວງເປັນໃຍ ໃນການໃຊ້ພາສາລາວໃນບາງວາລະສານ ໂດຍສະເພາະແມ່ນຂໍ້ມູນທີ່ນຳມາຈາກອິນເຕີເນັດ ທັງສະເໜີໃຫ້ມີການຈັດຕັ້ງຊຸດຝຶກອົບຮົມວຽກງານບັນນາທິການ ເພື່ອໃຫ້ຜູ້ເຮັດໜ້າທີ່ບັນນາທິການ ກຳແໜ້ນແນວທາງນະໂຍບາຍຂອງພັກ-ລັດ ຍົກສູງຄວາມສາມາດໃນການນຳພາວຽກງານວາລະສານຂອງຕົນ.

## IV. ຄວາມສຳຄັນຂອງຫົວຂໍ້ຂ່າວ.

ຫົວຂໍ້ຂ່າວ (headline) ມີໜ້າທີ່ບອກໃຫ້ຜູ້ອ່ານຮູ້ເຖິງເນື້ອຫາສາລະສຳຄັນຂອງຂ່າວ ແລະ ເປັນສ່ວນປະກອບສຳຄັນທີ່ສຸດ ແລະ ໜ້າສົນໃຈຫຼາຍທີ່ສຸດສຳລັບຜູ້ອ່ານ. ຈຸດປະສົງໃນການພາດຫົວຂໍ້ແມ່ນເພື່ອ:

- ດຶງດູດຄວາມສົນໃຈ.
- ບອກເນື້ອຫາສາລະທີ່ສຳຄັນ.
- ຊ່ວຍການຈັດໜ້າ.
- ເສີມສ້າງລັກສະນະ (ຫຼື ສີສັນ).

### 1. ດຶງດູດຄວາມສົນໃຈ.

ເປັນໜ້າທີ່ອັນດັບຕົ້ນ; ໝາຍຄວາມວ່າ ສ້າງຄວາມສົນໃຈໃຫ້ຜູ້ອ່ານຄືເຫັນຫົວຂໍ້ນັ້ນແລ້ວເກີດຄວາມຢາກອ່ານ, ຢາກຮູ້ຄຳຕອບ ຫຼື ຄວາມເປັນຈິງຈາກຫົວຂໍ້ທີ່ຂຽນໄວ້ຂ້າງເທິງນັ້ນຕ້ອງໄດ້ຈັບໄປອ່ານຕື່ມອີກຢູ່ເຮືອນ. ອາດກ່າວໄດ້ວ່າຫົວຂໍ້ຂ່າວເປັນສ່ວນໜຶ່ງທີ່ເຊື້ອເຊີນໃຫ້ຜູ້ອ່ານຊື້ໜັງສືພິມສະບັບນັ້ນໄດ້.

### 2. ບອກເນື້ອຫາສາລະທີ່ສຳຄັນ.

ຍ້ອນວ່າເຫດທີ່ເກີດຂຶ້ນ ແລະນຳສະເໜີຜ່ານໜ້າໜັງສືພິມນັ້ນຢ່າງຫຼວງຫຼາຍຈົນເຮັດໃຫ້ຜູ້ອ່ານເກີດຄວາມເບື່ອໜ່າຍບໍ່ສົນໃຈ ຫຼື ຍ້ອນບໍ່ມີເວລາພໍທີ່ຈະອ່ານຂ່າວນັ້ນ. ດັ່ງນັ້ນ, ການພາດຫົວຂໍ້ທີ່ດີຈະຊ່ວຍປະຢັດເວລາໃຫ້ຜູ້ອ່ານສາມາດຮູ້ເນື້ອຫາສາລະທີ່ສຳຄັນໄດ້ຈາກຫົວຂໍ້ ໃນນີ້ຖ້າວ່າເລື່ອງໃດມີຄວາມສຳຄັນຫຼາຍຄວນຂຽນຫົວຂໍ້ໃຫຍ່ຈັດໄວ້ຂ້າງເທິງດ້ວຍວິທີທີ່ຈະຊ່ວຍໃຫ້ຜູ້ອ່ານມີຄວາມສະດວກໃນການເລືອກອ່ານ.

**3. ຊ່ວຍຈັດໜ້າ.**

ຄວາມແຕກຕ່າງກັນທັງຂະໜາດຕົວໜັງສື ແລະ ຄວາມສັ້ນ, ຍາວໃນການພາດຫົວຂໍ້ມີສ່ວນຊ່ວຍໃນການດຶງດູດຄວາມສົນໃຈຂອງຜູ້ອ່ານ. ເຮົາລອງມາວາດພາບເບິ່ງວ່າໜັງສືພິມຈືດຊືດບໍ່ເປັນຕາອ່ານ, ຂາດຄວາມມີຊີວິດຊີວາ, ບໍ່ໜ້າສົນໃຈແມ່ນຍ້ອນການຈັດໜ້າ ຫຼື ບໍ່?.

**4. ຊ່ວຍເສີມສ້າງສີສັນຫຼືບຸກຄະລິກຂອງໜ້າໜັງສືພິມ.**

ໂດຍທົ່ວໄປແລ້ວໜັງສືພິມແຕ່ລະສະບັບຈະຊອກເອກະລັກສ່ວນຕົວ ຫຼື ຈຸດພິເສດດ້ວຍວິທີພາດຫົວຂໍ້ ແລະ ສຳນວນພາສາເພື່ອເຮັດໃຫ້ຜູ້ອ່ານເກີດຄວາມຄຸ້ນເຄີຍ (ໝາຍຄວາມວ່າເຫັນຫົວຂໍ້ ຫຼື ສຳນວນແລ້ວກໍຮູ້ທັນທີວ່າແມ່ນຂອງສະບັບໃດ) ພຽງແຕ່ເບິ່ງລັກສະນະການພາດຫົວຂໍ້ ແລະ ການຈັດໜ້າຜູ້ອ່ານກໍສາມາດບອກຊື່ໜັງສືພິມໄດ້ຢ່າງຖືກຕ້ອງ.

**ຄຳຖາມຄົ້ນຄວ້າ.**

1. ຂ່າວແມ່ນຫຍັງ?
2. ໂຄງສ້າງທີ່ຖືວ່າເປັນຂໍກຸນແຈສຳຄັນໃນການຂຽນຂ່າວມີຫຍັງແດ່?
3. ຈົ່ງລອງເອົາຂ່າວໃດໜຶ່ງມາວິເຄາະເບິ່ງວ່າຄົບປັດໄຈຕາມຫຼັກການ ຫຼື ບໍ່?

# ບົດທີ 2

# ການຂຽນບົດຂ່າວສານ.

## I. ຄວາມສຳນຶກ ແລະ ຮູບການຂຽນບົດຂ່າວສານ.

### 1. ຄວາມສຳນຶກກ່ຽວກັບບົດຂ່າວສານ.

ບົດຂ່າວສານ, ບົດວຽກດີຄົນເດັ່ນ, ບົດສະເໜີ, ບົດປະຈຳຄໍລຳ ແລະ ບົດລາຍງານຂ່າວເປັນປະເພດບົດຂຽນທີ່ຢາກຄ້າຍຄືກັນ ແລະ ເປັນບົດຂຽນທີ່ກວມປະລິມານຫຼາຍກວ່າໝູ່ຖ້າທຽບໃສ່ບົດອື່ນໆໃນໜ້າໜັງສືພິມ ເພາະມັນເປັນບົດທີ່ຂຽນໄດ້ຂ້ອນຂ້າງກວ້າງຂວາງບໍ່ສັບສົນ, ມັນຄືກັນກັບບົດຫັດແຕ່ງທີ່ເຮົາຮຽນຢູ່ຊັ້ນມັດທະຍົມ. ຢ່າງໃດກໍຕາມການຂຽນບົດນີ້ມັນຕ້ອງການໃຫ້ມີການວິໄຈບັນຫາ, ຕີລາຄາ ແລະ ອະທິບາຍບັນຫາທີ່ຕັ້ງຂຶ້ນ ທັງສະ ຫຼຸບຊອກຫາທາງອອກອີກດ້ວຍບົດປະເພດນີ້ເປັນບົດຂຽນທີ່ຄົນນິຍົມຂຽນຫຼາຍ ເພື່ອສ່ອງແສງຜົນງານທີ່ດີເດັ່ນໃນການຜະລິດ, ການສູ້ຮົບ, ວຽກດີຄົນເດັ່ນ ແລະ ອື່ນໆ.

ບົດປະເພດນີ້ ແມ່ນການສະເໜີເຫດການສຳຄັນເປັນປະໂຫຍດແກ່ຄົນສ່ວນຫຼາຍ. ສະນັ້ນ, ໂຄງສ້າງຂອງບົດໂດຍສະເພາະການໃຊ້ສັບພາສາຈຶ່ງມີຫຼາຍຮູ້ແບບອາດຈະເລີ່ມດ້ວຍການສະເໜີແບບພິທີການ ຫຼື ສະເໜີແບບພັນລະນາໃນຮູບແບບວັນນະຄະດີຢ່າງມີຊີວິດຊີວາກໍໄດ້.

### 2. ຮູບການຂຽນ.

ບົດຂ່າວສານມີ 2 ຮູບການ ດັ່ງນີ້:

**① ບົດທີ່ຂຽນໂດຍອາໄສເອກະສານຜູ້ຂຽນບໍ່ເຫັນເຫດການ.**

ບົດປະເພດນີ້ສ່ວນຫຼາຍແມ່ນອີງໃສ່ເອກະສານທາງການເຊັ່ນ: ບົດສະຫຼຸບຈາກພາກສ່ວນຕ່າງໆ ໂດຍຜູ້ຂຽນເປັນຜູ້ເລືອກເຟັ້ນເອົາເຫດການສຳຄັນໃດໜຶ່ງມານຳສະເໜີ ໂດຍທີ່ບໍ່ສາມາດເພີ່ມເຕີມ ຫຼື ຫຼຸດຂໍ້ມູນໃດໜຶ່ງໄດ້. ບໍ່ເທົ່ານັ້ນຍັງບໍ່ສາມາດສະເໜີຄວາມຮູ້ສຶກນຶກຄິດຂອງຜູ້ຂຽນຈະດ້ວຍຮູບການສະໜັບສະໜູນ ຫຼື ຕຳນິມີແຕ່ນຳເອົາຈຸດໃດຈຸດໜຶ່ງຂອງເອກະສານທີ່ເຫັນວ່າເປັນເຫດການທີ່ດີສາມາດເຂົ້າເຖິງໝາກຫົວໃຈ ແລະ ມັນສະໝອງຂອງຜູ້ອ່ານໄດ້ເປັນຢ່າງດີ.

**ຕົວຢ່າງ: ບົດຂ່າວສານພາຍໃຕ້ຫົວຂໍ້: ສະມາຊິກພັກກັບການສ້າງພູມຕ້ານທານ.**

ໃນໂອກາດລະນຶກວັນສ້າງຕັ້ງພັກປະຊາຊົນປະຕິວັດລາວ (22 ມີນາ 1955-22 ມີນາ 2019) ຄົບຮອບ 64 ປີ, ຜູ້ຂຽນໄດ້ນຳເອົາເອກະສານພາດຫົວຂໍ້ວ່າ: ສະມາຊິກພັກຕ້ອງສ້າງ ແລະ ຕ້ານຫຍັງ? ເພື່ອສືບຕໍ່ເຮັດຫຼ້ອນໜ້າທີ່ການເມືອງຂອງຕົນ (ເອກະສານໄດ້ຈາກປຶ້ມອົບຮົມສະມາຊິກພັກທົ່ວໄປ, ພິມໂດຍຄະນະໂຄສະນາອົບຮົມສູນກາງພັກ, ພິມປີ 2014).

ຜູ້ຂຽນຢາກນຳສະເໜີເນື້ອໃນຂອງການສ້າງພູມຕ້ານທານ ແລະ ຕ້ານພະຍາດທີ່ເປັນອັນຕະລາຍຕໍ່ພັກ ດັ່ງລຸມນີ້:

**1. ເນື້ອໃນຂອງການສ້າງພູມຕ້ານທານໃຫ້ແກ່ສະມາຊິກພັກ.**

**1.1. ສ້າງຄວາມຈົງຮັກພັກດີຕໍ່ລັດທິມາກ-ເລນິນ, ຕໍ່ພັກ, ຕໍ່ຊາດ ແລະ ຕໍ່ປະຊາຊົນ.**

- ເອົາໃຈໃສ່ຄົ້ນຄວ້າຮໍ່າຮຽນ ແລະ ກໍາແໜ້ນຫຼັກມູນທິດສະດີມາກ-ເລນິນ ແລະ ໝູນໃຊ້ຫຼັກມູນດັ່ງກ່າວໃຫ້ສອດຄ່ອງກັບລະພາບຄວາມເປັນຈິງຂອງປະເທດເຮົາໃນແຕ່ລະໄລຍະ.

- ສ້າງຄວາມເຊື່ອໝັ້ນຕໍ່ການນໍາພາຂອງພັກຢ່າງຕາຍໃຈ ແລະ ເອົາໃຈໃສ່ຍົກສູງບົດບາດ ແລະ ຄວາມສາມາດນໍາພາຂອງພັກໃຫ້ສົມຄູ່ກັບຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງໃນໄລຍະໃໝ່.

- ອຸທິດເຫື່ອແຮງ ແລະ ສະຕິປັນຍາເພື່ອຄວາມຢູ່ດີກິນດີຂອງປະຊາຊົນ, ຄວາມຮັ່ງມີຜາສຸກ ແລະ ຄວາມມັ່ງຄັ່ງເຂັ້ມແຂງຂອງປະເທດຊາດ.

**1.2. ສ້າງຄຸນທາດການເມືອງ ແລະ ຄຸນສົມບັດສິນທໍາປະຕິວັດອັນໜັກແໜ້ນ.**

- ພັກເຮົາຈະມີບົດບາດ ແລະ ມີຄວາມສາມາດກໍາອໍານາດ (ນໍາພາທົ່ວສັງຄົມ) ໄດ້ ຫຼື ບໍ່? ບັນຫາສໍາຄັນ ແລະ ມີລັກສະນະຕັດສິນກວ່າໝູ່ແມ່ນຂຶ້ນກັບຄຸນນະພາບໃນການນໍາພາ ຫຼື ກໍາອໍານາດຂອງພັກ. ຢາກໃຫ້ການນໍາພາຂອງພັກມີຄຸນນະພາບດີ, ກ່ອນອື່ນໝົດສະມາຊິກພັກທຸກສະຫາຍຕ້ອງຕັ້ງໜ້າຝຶກຝົນຫຼໍ່ຫຼອມຕົນເອງໃຫ້ມີຄຸນທາດການເມືອງ, ຄຸນສົມບັດສິນທໍາປະຕິວັດອັນໜັກແໜ້ນຢູ່ສະເໝີ.

**1.3. ສ້າງລັດທິລວມໝູ່ ແລະ ຄວາມເປັນແບບຢ່າງນໍາໜ້າທີ່ດີ.**

- ລັດທິລວມໝູ່ແມ່ນພູມຕ້ານທານອັນແຂງແກ່ນອັນໜຶ່ງຂອງພັກ ເພາະວ່າລັດທິລວມໝູ່ແມ່ນຄວາມສາມັກຄີສະໜິດແໜ້ນພາຍໃນການຈັດຕັ້ງ ກໍຄື ໃນສັງຄົມ ແລະ ເປັນກໍາລັງແຮງງານໃຫຍ່ຫຼວງຂອງການປະຕິວັດ.

- ລັດທິລວມໝູ່ ແມ່ນການສົມທົບຢ່າງກົມກຽວລະຫວ່າງຜົນປະໂຫຍດກັບພັນທະ, ເສລີພາບກັບຄວາມຮັບຜິດຊອບ, ຜົນປະໂຫຍດສ່ວນບຸກຄົນກັບຜົນປະໂຫຍດລວມໝູ່ ແລະ ຜົນປະໂຫຍດຂອງຊາດ.

- ຄວາມເປັນແບບຢ່າງນໍາໜ້າຂອງສະມາຊິກພັກເປັນແວ່ນແຍງທີ່ໃສແຈ້ງ ແລະ ສາມາດດຶງດູດມະຫາຊົນເຮັດນໍາ, ໄປຕາມ ແລະ ຕາຍໃຈຕໍ່ການນໍາພາຂອງພັກ.

**1.4. ສ້າງທັດສະນະມະຫາຊົນອັນຖືກຕ້ອງ.**

- ສະມາຊິກພັກເຮົາຢາກເປັນຕົວແທນທີ່ຈິງຮັກພັກດີຕໍ່ສິດ, ຜົນປະໂຫຍດຂອງຊົນຊັ້ນກໍາມະກອນ, ຊາວຜູ້ອອກແຮງງານລາວບັນດາເຜົ່າທີ່ຮັກຊາດໄດ້ດີ, ສະມາຊິກພັກທຸກສະຫາຍຕ້ອງເອົາຕົວເຈືອຈານເຂົ້າກັບຂະບວນການຂອງມະຫາຊົນ, ເອົາໃຈໃສ່ໃກ້ຊິດຕິດແທດມະຫາຊົນ ເພື່ອສ້າງຄວາມເຄົາລົບນັບຖື ແລະ ຮັກແພງມະຫາ ຊົນ , ກໍາໄດ້ແນວຄິດຈິດໃຈ, ຄວາມຂັດຂ້ອງໝອງໃຈ ແລະ ຄວາມມຸ່ງມາດປາຖະໜາຂອງມະຫາຊົນພ້ອມທັງມີຄວາມຈິງໃຈຮັບໃຊ້ ແລະ ນໍາເອົາຜົນປະໂຫຍດຕົວຈິງມາໃຫ້ມະຫາຊົນ, ເຮັດໄດ້ແນວນັ້ນ ພັກຈຶ່ງມີກໍາລັງແຮງຈັດຕັ້ງປະຕິບັດແນວທາງຂອງພັກໃຫ້ເປັນຈິງ.

**1.5. ສ້າງພັກໃຫ້ໜັກແໜ້ນເຂັ້ມແຂງຮອບດ້ານ.**

- ເອົາໃຈໃສ່ ແລະ ປັບປຸງແນວທາງແຜນນະໂຍບາຍຂອງພັກໃຫ້ຖືກຕ້ອງ ແລະ ສອດຄ່ອງກັບສະພາບຄວາມເປັນຈິງຂອງປະເທດເຮົາໃນແຕ່ລະໄລຍະ.

- ຕັ້ງໜ້າປັບປຸງການຈັດຕັ້ງພັກທຸກຂັ້ນໃຫ້ມີຄວາມເຂັ້ມແຂງ, ມີຄວາມສາມັກຄີເປັນເອກະພາບພາຍໃນສູງ, ມີຄວາມປອດໃສ ແລະ ມີລະບຽບວິໄນເຂັ້ມງວດ. ໃນຕໍ່ໜ້ານີ້ ຕ້ອງເອົາໃຈໃສ່ເປັນພິເສດ ການສ້າງໜ່ວຍພັກແຂງ-ຮູ້ນໍາພາຮອບດ້ານ.

- ປັບປຸງແບບແຜນການນຳພາ ແລະ ວິທີເຮັດວຽກຂອງສະມາຊິກພັກໃຫ້ມີວິທະຍາສາດ, ແທດຕົວຈິງ, ມີການຕິດຕາມກວດກາເປັນປົກກະຕິ ແລະ ເຂັ້ມງວດ ເອົາໃຈໃສ່ເປັນພິເສດແບບແຜນການນຳພາຕາມແນວທາງມະຫາຊົນຂອງພັກ.

## 2. ເນື້ອໃນຂອງການຕ້ານພະຍາດທີ່ເປັນອັນຕະລາຍຕໍ່ພັກ.

### 2.1. ຕ້ານລັດທິເອກະຊົນ ແລະ ລັດທິຄຳພີຮັກສາເດີມ.

- ລັດທິເອກະຊົນສ້າງຄວາມເສຍຫາຍອັນໃຫຍ່ຫຼວງໃຫ້ແກ່ການນຳພາ ພາລະກິດປະຕິວັດຂອງພັກ ເພາະວ່າ ລັດທິນີ້ສະແດງອອກຢູ່ໃນນິດໄສຄັບແຄບ, ແນວຄິດພາກສ່ວນຈຸ້ມເຈື້ອເຊື້ອສາຍ, ສ່ວນຕົວ, ທ້ອງຖິ່ນ, ເສລີ, ບໍ່ມີລະບຽບວິໄນ, ບໍ່ນັບຖືການຈັດຕັ້ງ, ມັກໃຫຍ່ໃຝສູງ, ມັກຊື່ສຽງອວດອີ່ງທະນົງຕົວ, ມັກແຍ່ງຊີງຖານະຕຳແໜ່ງ ແນວຄິດຢາກໄດ້ແຕ່ສິດແລ່ນນຳຜົນປະໂຫຍດສ່ວນຕົວ (ຖືເບົາຜົນປະໂຫຍດສ່ວນລວມ) ພະຍາດດັ່ງກ່າວຖ້າບໍ່ເອົາໃຈໃສ່ຕ້ານ ແລະ ສະກັດກັ້ນ, ຖ້າເກີດຢູ່ບ່ອນໃດກໍຈະເປັນການທຳລາຍສັດທາ ແລະ ຄວາມເຊື່ອໝັ້ນຂອງມະ ຫາຊົນຕໍ່ພັກ.

ການຮຽນຮູ້ລັດທິມາກ-ເລນິນ ບໍ່ແມ່ນການຮຽນແບບທ່ອງຂຶ້ນໃຈ, ແຕ່ແມ່ນການນຳເອົາຫຼັກມູນພື້ນຖານຂອງມັນ, ກຳເອົາບັນຫາທີ່ເປັນສັດຈະທຳ ແລະ ວິທີແກ້ໄຂບັນຫາທີ່ມີວິທະຍາສາດ ເພື່ອມາໝູນໃຊ້ເຂົ້າໃສ່ສະພາບຄວາມເປັນຈິງຂອງປະເທດເຮົາຢ່າງປະດິດສ້າງ ການຮຽນຮູ້ຖອດຖອນບົດຮຽນກັບຕ່າງປະເທດ ຕ້ອງຫຼີກເວັ້ນໃຫ້ໄດ້ການເຂົ້າໃຈທິດສະດີແບບຄຳພີຕາຍຕົວ ແລະ ໝູນໃຊ້ບົດຮຽນແບບລອກແບບ.

### 2.2. ຕ້ານພະຍາດໂລບມາກໂລພາ, ຟຸມເຟືອຍ, ການລົ້ລາດບັງຫຼວງ ແລະ ພະຍາດອາຍາສິດ.

- ຄວາມໂລບມາກໂລພາ, ການໃຊ້ຈ່າຍຟຸມເຟືອຍ ແລະ ການສໍ້ລາດບັງຫຼວງໄດ້ເຮັດໃຫ້ຊັບສິນຂອງຊາດ, ຂອງສ່ວນລວມສູນເສຍຢ່າງມະຫາສານ ການໃຊ້ຈ່າຍຟຸມເຟືອຍເຮັດໃຫ້ພະນັກງານ-ສະມາຊິກພັກເກີດຄວາມໂລບມາກໂລພາ, ສໍ້ໂກງ, ກິນສິນບົນ ແລະ ດຳລົງຊີວິດບໍ່ສົມຖານະຕົນເອງ (ຫຼົງຕົວເອງ) ແລະ ຄວາມໂລບ, ຄວາມຫຼົງນັ້ນ ລ້ວນແຕ່ແມ່ນກົກເຄົ້າຂອງຄວາມຊົ່ວຮ້າຍທັງຫຼາຍ.

ພະຍາດອາດຍາສິດເຮັດໃຫ້ພະນັກງານ-ສະມາຊິກພັກ ເກີດມີທັດສະນະອັດຕະວິໄສ ແລະ ຫ່າງເຫີນຈາກມະຫາຊົນທັງເປັນສິ່ງກັ້ງບັງໃຫ້ແກ່ໄພແຫ່ງຄວາມໂລບມາກໂລພາ ແລະ ການຟຸມເຟືອຍ. ສະນັ້ນ, ຕ້ອງຈຳກັດ ແລະ ຕີຖອຍພະຍາດອາດຍາສິດໃຫ້ຫຼຸບລົງ ແລະ ໝົດໄປ.

### 2.3. ຕ້ານປາກົດການເສື່ອມຄຸນປ່ຽນທາດ.

- ບັນຫາການເສື່ອມຖອຍທາງດ້ານຄຸນທາດການເມືອງ ແລະ ຄຸນສົມບັດສິນທຳປະຕິວັດຂອງພະນັກງານ-ສະມາຊິກພັກ ເປັນໄພອັນຕະລາຍຂົ່ມຂູ່ຕໍ່ບົດບາດອິດທິພົນ ແລະ ການຄົງຕົວຂອງພັກເຮົາ. ຢູ່ບ່ອນໃດພະນັກງານ-ສະມາຊິກພັກ ເກີດການເສື່ອມຖອຍທາງດ້ານຄຸນທາດການເມືອງ ແລະ ຄຸນສົມບັດສິນທຳປະຕິວັດ, ຢູ່ບ່ອນນັ້ນບົດບາດ ແລະ ຄວາມສາມາດກຳອຳນາດຂອງພັກກໍຈະເສື່ອມຖອຍເປັນເງົາຕາມຕົວ ມັນເລັ່ງທວງໃຫ້ພວກເຮົາຕ້ອງຮີບຮ້ອນແກ້ໄຂ ແລະ ບັນຫາເກີດຢູ່ບ່ອນໃດແມ່ນຄະນະພັກຢູ່ບ່ອນນັ້ນ ຕ້ອງເປັນເຈົ້າການແກ້ໄຂຢ່າງເດັດຂາດ, ເຂັ້ມງວດ ແລະ ທັນການ, ບໍ່ປະໃຫ້ເປັນບັນຫາແກ່ຍາວ ຫຼື ປົກປ້ອງເອົາກັນ, ບໍ່ປ່ອຍໃຫ້ມີການສະສົມປະລົມມານ ຖ້າຫາກຖືເບົາການແກ້ໄຂບັນຫານີ້ ໄວ ຫຼື ຊ້າ ມັນກໍຈະມີຜົນກະທົບໂດຍກົງຕໍ່ບົດບາດ ແລະ ຄວາມສາມາດກຳອຳນາດຂອງພັກເຮົາ.

**2.4. ດ້ານທັດສະນະທ່າງເຫັນມະຫາຊົນ.**

- ທິດສະດີມາກ-ເລນິນ ໄດ້ຂຽນໄວ້ວ່າ: ການປະຕິວັດເປັນຂອງມະຫາຊົນ ໜຶ່ງໃນບັນດາຫຼັກການກໍ່ສ້າງ ແລະ ປັບປຸງຕົວເອງຂອງພັກເຮົາ ກໍໄດ້ກຳນົດຢ່າງຈະແຈ້ງວ່າ ພັກປະຊາຊົນປະຕິວັດລາວຖືເອົາປະຊາຊົນເປັນກົກ, ເຄື່ອນໄຫວຕາມແນວທາງມະຫາຊົນຂອງພັກ. ສະນັ້ນ, ພະນັກງານ-ສະມາຊິກພັກທຸກສະຫາຍ ຕ້ອງເພີ່ມທະວີການເຄື່ອນໄຫວຕາມແນວທາງມະຫາຊົນຂອງພັກ, ທຸກການເຄື່ອນໄຫວຂອງສະມາຊິກພັກທີ່ບໍ່ເຄົາລົບນັບຖື, ບໍ່ໃກ້ຊິດຕິດແທດ, ບໍ່ເຂົ້າໃຈແນວຄິດຈິດໃຈ, ບໍ່ເປັນຫວ່ງເປັນໃຍ ແລະ ບໍ່ຄຳນຶງເຖິງສິດຜົນປະໂຫຍດອັນຊອບທຳຂອງມະຫາຊົນ ລ້ວນແຕ່ແມ່ນເປັນອັນຕະລາຍຕໍ່ພັກເຮົາ ເພາະວ່າ ການກະທຳດັ່ງກ່າວຈະເຮັດໃຫ້ມະຫາຊົນຂາດຄວາມເຊື່ອໝັ້ນ ແລະ ບໍ່ໄປນຳພັກໃນທີ່ສຸດພັກກໍຈະບໍ່ມີກຳລັງແຮງ.

ທັງໝົດນັ້ນແມ່ນເນື້ອໃນສຳຄັນທີ່ຢາກໃຫ້ສະມາຊິກພັກໄດ້ເຊື່ອມຊຶມ ແລະ ກຳແໜ້ນໃນການຝຶກຝົນຫຼໍ່ຫຼອມຕົນເອງ.

ຍ້ອນວ່າໃນປີ 2018 ຜ່ານມາ ຄະນະກວດກາສູນກາງພັກ ໄດ້ສະຫຼຸບໄວ້ວ່າ: ຄະນະພັກ, ສະມາຊິກພັກຈຳນວນໜຶ່ງເສື່ອມຖອຍດ້ານຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ ແລະ ແບບແຜນການດຳລົງຊີວິດ, ຂາດຄວາມເປັນແບບຢ່າງທີ່ດີ, ເກີດມີປາກົດການອາດຍາສິດ, ເອກະຊົນ ແລະ ສໍ້ລາດບັງຫຼວງ, ລະເມີດກົດລະບຽບຂອງພັກ, ກົດໝາຍຂອງລັດ ຊຶ່ງສະແດງອອກມີກຳມະການຄະນະພັກ ແລະ ສະມາຊິກພັກ ຖືກປະຕິບັດວິໄນດ້ວຍຮູບການຕ່າງໆ 845 ສະຫາຍ, ຍິງ 110 ສະຫາຍ. ໃນນັ້ນ, ໄດ້ກ່າວເຕືອນຄວາມຜິດ 186 ສະຫາຍ, ປົດຕຳແໜ່ງ 30 ສະຫາຍ, ໂຈະຮ່ວມຊີວິດພັກ 154 ສະຫາຍ ແລະ ເອົາອອກຈາກພັກ 475 ສະຫາຍ, ປັດຈຸບັນ ມີສະມາຊິກພັກທົ່ວປະເທດ 321.281 ສະຫາຍ, ຍິງ 80.868 ສະຫາຍ. ໃນນັ້ນ, ມີສະມາຊິກພັກສຳຮອງ 26.406 ສະຫາຍ, ຍິງ 8.941 ສະຫາຍ. (ບົດນີ້ຂຽນໂດຍ: ທິດດີ, ອອກໃນໜັງສືພິມເສດຖະກິດ-ການຄ້າ (ໜ້າ 2) ຄໍລຳ ມຸມຫຼັກແປດ, ລົງວັນທີ 26 ມີນາ 2019).

**② ບົດຂຽນທີ່ໄປເຫັນດ້ວຍຕົວເອງ ແລະ ມີການຕີລາຄາ.**

ບົດປະເພດນີ້ ນັກຂ່າວມັກຂຽນຫຼາຍເພາະມັນເປັນຄືການຂຽນຂ່າວຍາວ ແລະ ສາມາດລາຍງານໄດ້ຢ່າງມີຊີວິດຊີວາ, ສາມາດໃຊ້ເບື້ອງຫຼັງຂ່າວ, ໃຊ້ການຕີລາຄາຂອງຜູ້ຂຽນ, ໃຊ້ສັບພາສາທີ່ກິນໃຈໃນຮູບແບບວັນນະຄະດີ ເພື່ອເຮັດໃຫ້ຜູ້ອ່ານມີຄວາມຮູ້ສຶກວ່າເຂົາເຈົ້າກໍຢາກຢູ່ໃນເຫດການ. ແນວໃດກໍຕາມການຂຽນທັງສອງຮູບການນີ້ ຕ້ອງໄດ້ກຳນົດຂອບເຂດຂອງເຫດການຕົວຈິງໝາຍວ່າກຳນົດເປົ້າໝາຍເພື່ອນຳຜູ້ອ່ານໄປສູ່ຈຸດທີ່ເຮົາຕ້ອງການ.

**ຕົວຢ່າງ: ບົດຈາກວາລະສານໂຄສະນາ.**

**<u>ຫົວຂໍ້</u>: ບ້ານ 3 ສ້າງທີ່ສຸມໃສ່ການປູກ-ການລ້ຽງເປັນສິນຄ້າ.**

ບ້ານໂນນສະຫວ່າງ ເປັນບ້ານທົດລອງວຽກງານ 3 ສ້າງຂອງເມືອງປາກເຊ, ໄປທາງທິດໃຕ້ປະມານ 5 ກິໂລແມັດ. ເປັນບ້ານທີ່ຕັ້ງຢູ່ແຄມນ້ຳຂອງ, ອາຊີບສ່ວນໃຫຍ່ຂອງປະຊາຊົນແມ່ນຄ້າຂາຍ, ການບໍລິການ ແລະ ປູກຝັງ-ລ້ຽງສັດເປັນສິນຄ້າ. ບ້ານດັ່ງກ່າວຖືກຮັບຮອງເປັນບ້ານທົດລອງ 3 ສ້າງ ໃນວັນທີ 28 ກັນຍາ 2012.

ທ່ານ ສຸບັນ ພອນມະນີ ນາຍບ້ານ-ບ້ານໂນນສະຫວ່າງ ໄດ້ໃຫ້ສຳພາດຕໍ່ຜູ້ຂຽນໃນວັນທີ 9 ກັນຍາ 2013 ວ່າ: ພາຍຫຼັງທີ່ບ້ານຂອງພວກເຮົາ ໄດ້ປະກາດເປັນບ້ານທົດລອງວຽກງານ 3 ສ້າງແລ້ວ ກໍໄດ້ເລີ່ທຈັດຕັ້ງປະຕິບັດຄື: ກ່ອນອື່ນແມ່ນໄດ້ປັບປຸງອຳນາດການປົກຄອງບ້ານ, ອົງການຈັດຕັ້ງຂັ້ນຕ່າງໆ ຂອງບ້ານ ແລະ ໄດ້ຮ່ຳຮຽນມະຕິ

ຕ່າງໆ ກ່ຽວກັບການຈັດຕັ້ງປະຕິບັດວຽກງານ 3 ສ້າງ. ສໍາລັບບ້ານຂອງພວກເຮົາແມ່ນໄດ້ກໍານົດເອົາການປູກຝັງ-ລ້ຽງສັດເປັນທ່າແຮງຂອງບ້ານ, ຫຼັງຈາກໄດ້ກໍານົດທ່າແຮງແລ້ວທາງບ້ານເຫັນວ່າ: ມີຂໍ້ສະດວກໃນການຈັດເປັນກຸ່ມການຜະລິດ, ດັ່ງນັ້ນ ທາງບ້ານຈຶ່ງໄດ້ສົມທົບກັບພະນັກງານກະສິກໍາທີ່ລົງປະຈໍາຢູ່ບ້ານ ພ້ອມກັບການປຶກສາຫາລື ແລະ ຈັດຕັ້ງກຸ່ມການຜະລິດເປັນສິນຄ້າ ຂຶ້ນ 7 ກຸ່ມຄື: ປູກເຫັດ, ກຸ່ມປູກໝາກຖົ່ວຝັກຍາວ, ກຸ່ມການລ້ຽງສັດປີກ (ໄກ່ ແລະ ນົກກະທາ), ກຸ່ມລ້ຽງປາກະຊັງ, ກຸ່ມລ້ຽງແບ້, ກຸ່ມລ້ຽງງົວ-ຄວາຍ ແລະ ກຸ່ມລ້ຽງໝູ.

ກຸ່ມປູກເຫັດ ມີ 9 ຄອບຄົວ, ຊຶ່ງທະນາຄານນະໂຍບາຍໄດ້ປ່ອຍເງິນກູ້ດອກເບ້ຍຕໍ່າໃຫ້ຈໍານວນ 210 ລ້ານກີບ ໃນນັ້ນ ລົງມືປະຕິບັດແລ້ວ 36 ຄອກ, ມີ 165.100 ຖົງ, ໃນໄລຍະຜ່ານມາການເກັບກ່ຽວເບື້ອງຕົ້ນໄດ້ຮັບຜົນຜະລິດ 4.100 ກິໂລ ແລະ ຂາຍໃນລາຄາ 15.000 ກີບຕໍ່ກິໂລ, ລວມເປັນເງິນທັງໝົດ 61.500.000 ກີບ.

ກຸ່ມປູກຖົ່ວຝັກຍາວມີ 17 ຄອບຄົວ, ເງິນກູ້ຢືມຈາກທະນາຄານນະໂຍບາຍ ຈໍານວນ 200 ລ້ານກີບ, ລົງມືປູກແລ້ວໃນເນື້ອທີ່ 9 ເຮັກຕາ, ໃນໄລຍະຜ່ານມາເກັບກ່ຽວໄດ້ເບື້ອງຕົ້ນໄດ້ຮັບຜົນຜະລິດ 7.500 ກິໂລ ແລະ ຂາຍໃນລາຄາ 3.000 ກີບຕໍ່ກິໂລ, ລວມເປັນເງິນທັງໝົດ 22.500.000 ກີບ.

ກຸ່ມລ້ຽງໄກ່ມີ 8 ຄອບຄົວ, ຢືມເງິນຈາກທະນາຄານນະໂຍບາຍຈໍານວນ 71 ລ້ານກີບ, ລົງມືປະຕິບັດແລ້ວ 8 ຄອກໃຫຍ່, ມີຈໍານວນໄກ່ທັງໝົດ 1.200 ໂຕ.

ກຸ່ມລ້ຽງປາກະຊັງ ມີ 8 ຄອບຄົວ, ຄອບຄົວໜຶ່ງມີ 60 ກະຊັງ.

ທ່ານ ນາຍບ້ານຍັງໄດ້ກ່າວອີກວ່າ: ສໍາລັບການຈັດຕັ້ງປະຕິບັດວຽກງານ 3 ສ້າງມາເປັນໄລຍະ 1 ປີນີ້ ທາງບ້ານຂອງພວກເຮົາໄດ້ສັງເກດເຫັນວ່າ: ອົງການຈັດຕັ້ງພາຍໃນບ້ານພາຍຫຼັງໄດ້ຮັບການປັບປຸງແລ້ວ ແມ່ນມີຄວາມເຂັ້ມແຂງ, ອໍານາດການປົກຄອງມີຄວາມເຂົ້າໃຈຕໍ່ກັບພາລະບົດບາດຂອງຕົນຢ່າງເລິກເຊິ່ງ, ພື້ນຖານໂຄງລ່າງຂອງບ້ານແມ່ນໄດ້ຮັບການປັບປຸງແກ້ໄຂໃຫ້ດີຂຶ້ນເທື່ອລະກ້າວ, ອາຄານຮຽນ, ສຸກສາລາ ກໍໄດ້ຮັບການປັບປຸງແກ້ໄຂ, ການສ້າງເສດຖະກິດຄອບຄົວຂອງປະຊາຊົນ ມີລາຍຮັບເພີ່ມຂຶ້ນ, ອົງການຈັດຕັ້ງ ແລະ ພໍ່ແມ່ປະຊາຊົນພາຍໃນບ້ານມີຄວາມສາມັກຄີຮັກແພງເຊິ່ງກັນ ແລະ ກັນຢ່າງໜັກແໜ້ນ.

ປີນີ້ ບ້ານໂນນສະຫວ່າງ ສາມາດເກັບລາຍຮັບໄດ້ 91.918.000 ກີບ, ຊຶ່ງທຽບເປັນເປີເຊັນແມ່ນປະຕິບັດໄດ້ 95% ທີ່ທາງເມືອງໄດ້ວາງຕົວເລກລາຍຮັບຂອງບ້ານຄື: 97.300.000 ກີບ. ໃນນີ້ໄດ້ມອບໃຫ້ເມືອງ 60% ແລະ 40% ແມ່ນເປັນລາຍຮັບຂອງບ້ານ. ສໍາລັບປະຊາຊົນແມ່ນມີລາຍຮັບສະເລ່ຍ 8.800.000 ກີບຕໍ່ຄົນຕໍ່ປີ, ສໍາລັບປີໜ້າຄາດວ່າຈະໃຫ້ມີລາຍຮັບ 10.400.000 ກີບຕໍ່ຄົນຕໍ່ປີ.

ປັດຈຸບັນ ບ້ານໂນນສະຫວ່າງໄດ້ປະກາດເປັນບ້ານພັດທະນາແລ້ວ. ສະນັ້ນ, ໃນຕໍ່ໜ້າຈຶ່ງມີແຜນພັດທະນາໃຫ້ກາຍເປັນຕົວເມືອງນ້ອຍ. ນັ້ນກໍຄືຄໍາບອກເລົ່າຂອງ ທ່ານ ດຣ ນາງ ພົງພັນ ວິລະພັນ ຫົວໜ້າຄະນະໂຄສະນາອົບຮົມເມືອງປາກ ທີ່ເດີນທາງຮ່ວມເກັບກໍາຂໍ້ມູນນໍາພວກເຮົາໃນມື້ນັ້ນ.

**ກ່ອນຈະຂຽນບົດນີ້ຕ້ອງຕັ້ງຄໍາຖາມໄວ້ດັ່ງນີ້:**

- ແມ່ນຫຍັງ**?** ແມ່ນໃຜ**?** ເວລາໃດ**?** ຢູ່ໃສ**?.**
- ເພື່ອຫຍັງ ຫຼື ເປັນຫຍັງ**?.**

- ເປັນແນວໃດ?.
- ເພື່ອເປົ້າໝາຍອັນໃດຈຶ່ງໄດ້ຂຽນບົດນີ້.

## II. ໂຄງສ້າງຂອງບົດຂ່າວສານ.

ບົດຂ່າວສານກໍມີໂຄງສ້າງຄືກັນກັບບົດຂຽນທົ່ວໄປຄື:

- ພາກເປີດຫົວເລື່ອງ.
- ພາກເດີນເລື່ອງ.
- ພາກສະຫຼຸບ.

### 1. ຫົວເລື່ອງ.

ພາກຫົວເລື່ອງສຳຄັນຫຼາຍ ອາດຈະໄຂຫົວເລື່ອງດ້ວຍການຕັ້ງຄຳຖາມຕາມສັງຄົມສົນໃຈ ແລ້ວຕອບເລີຍກໍໄດ້ ຫຼື ອາດຕັ້ງຫົວເລື່ອງດ້ວຍການນຳສະເໜີທີ່ຕັ້ງແບບຂ່າວກໍໄດ້ ແຕ່ສ່ວນຫຼາຍຄົນມັກຂຽນແບບສະເໜີເຫດການເດັ່ນໃນຫົວເລື່ອງໂລດ.

### 2. ເດີນເລື່ອງ.

ການເດີນເລື່ອງ ແມ່ນການວິໄຈ ແລະ ອະທິບາຍບັນຫາທີ່ຕັ້ງຂຶ້ນຢ່າງພາວະວິໄສ ແລະ ອະທິບາຍດ້ວຍຂໍ້ມູນເຊີງວິຊາການຢ່າງຮັດກຸມເຊັ່ນ: ຄຳເຫັນຂອງນັກວິຊາການ, ຄູ່ສົນທະນາ ຫຼື ໜ່ວຍງານໃດໜຶ່ງອອກມາຢືນຢັນ. ຄວນຫຼີກເວັ້ນການອະທິບາຍທີ່ເປັນຄຳເຫັນຂອງຜູ້ຂຽນເອງ.

### 3. ພາກສະຫຼຸບ.

ໃນພາກສະຫຼຸບນີ້ ຜູ້ຂຽນສາມາດມີຄຳເຫັນຕິລາຄາຂອງຕົນ ແລະ ຊອກທາງອອກໄດ້ ຫຼື ອາດນຳເອົາບົດສະຫຼຸບຂອງເອກະສານມາມ້ວນທ້າຍໃສ່ບົດກໍໄດ້. ສຳຄັນແມ່ນຜູ້ຂຽນຕ້ອງຕ້ອມບັນຫາທຸກຢ່າງໃນບົດໃຫ້ມາລົງຈອດຢູ່ທີ່ນີ້ຈະເປັນດ້ວຍສຳນວນພາສາວັນນະຄະດີ ຊຶ່ງຄຳຖາມປະໄວ້ໃຫ້ຜູ້ອ່ານຕອບເອງ ຫຼື ຕອບເລີຍກໍໄດ້. ຢ່າລືມວ່າບົດຂຽນບົດໜຶ່ງພາກສະຫຼຸບສຳຄັນຫຼາຍ ດັ່ງຄຳໂຕ່ງໂຕຍຂອງເຖົ້າແກ່ບູຮານກ່າວໄວ້ວ່າ: "ຢ່າໃຫ້ເຮືອຫຼົ້ມບາດຈອດ".

**ຕົວຢ່າງ: ການຂຽນກ່ຽວກັບຄອບຄົວຕົວແບບດີເດັ່ນໃນການປູກ-ການລ້ຽງ.**

**ພາກເປີດຫົວເລື່ອງ:**

ຕ້ອງນຳສະເໜີ ຄອບຄົວຕົວແບບທີ່ມີການຢັ້ງຢືນຢ່າງເປັນທາງການຈາກອຳນາດການປົກຄອງບ້ານ, ເມືອງ ແລະ ຂະແໜງການກ່ຽວຂ້ອງ ເປັນຕົ້ນຂະແໜງກະສິກຳ- ປ່າໄມ້, ຫາກບໍ່ແມ່ນຜູ້ຂຽນເປັນຜູ້ຊອກຫາ ແລະ ຢັ້ງຢືນເອົາເອງ.

ໃນການສະເໜີໃຫ້ຫຼີກເວັ້ນການຂຽນກ່າຍເອົາແບບຄຳພີຕາຍຕົວຂອງຕົວແບບ ເຊັ່ນ: ຊື່ຜົວ ຫຼື ເມຍ, ອາຍຸ ແຕ່ງງານປີໃດ? ມີລູກຈັກຄົນ (ຍິງ-ຊາຍ), ແຕ່ກ່ອນມີອາຊີບຫຍັງ? ຜົນລະນາເກີນຄວາມຈິງ.

ຕ້ອງນຳສະເໜີສະພາບຄອບຄົວແບບສັ້ນໆ, ຕົວຈິງ ແລະ ເໝາະສົມກັບສະຖານະການທີ່ນຳສະເໜີ (ຈຸດປະສົງ) ຫາກບໍ່ແມ່ນວ່າ: ຂຽນບົດໃດກໍກ່າຍເອົາແບບດຽວກັນອ້ອຍຕ້ອຍ.

**ພາກເດີນເລື່ອງ:**

ຕ້ອງນຳສະເໜີຜົນງານຂອງຄອບຄົວຕົວແບບ ໃນການປູກ-ການລ້ຽງຢ່າງເປັນລະບົບ ເຊັ່ນ:

- ເລີ່ມການປູກ-ການລ້ຽງໃນປີໃດ? ຕົ້ນທຶນການຜະລິດມີເທົ່າໃດ? ແຮງງານມີທໍ່ໃດ? ເນື້ອທີ່ການຜະລິດມີເທົ່າໃດ? ສັດລ້ຽງມີຈຳນວນເທົ່າໃດ? ວັດຖຸດິບ ຫຼື ແນວພັນເອົາມາຈາກໃສ? (ລົງເລີກລາຄາຊື້).

- ເຕັກນິກທີ່ນຳໃຊ້ເຂົ້າໃນການຜະລິດ (ການປູກ-ການລ້ຽງ) ໄດ້ມາຈາກໃສ? ມີຂະແໜງການກ່ຽວຂ້ອງເຂົ້າມາຊ່ວຍ ຫຼື ບໍ?.

- ການຂາຍຜົນຜະລິດໄດ້ເຮັດແນວໃດ? ປີໜຶ່ງຂາຍໄດ້ຈັກເທື່ອ, ປະລິມານຂາຍອອກມີເທົ່າໃດ? ລາຄາຂາຍເທົ່າໃດ? ລາຍຮັບທັງໝົດໄດ້ເທົ່າໃດ?.

- ປີໜຶ່ງມີກຳໄລເທົ່າໃດ? (ຫຼັງຈາກຫັກຄ່າໃຊ້ຈ່າຍ ແລະ ຄ່າແຮງງານ).

- ທິດໃນຕໍ່ໜ້າ ຈະຂະຫຍາຍການຜະລິດຢ່າງໃດ? ຈະກູ້ຢືມທຶນເທົ່າໃດ? ແລະ ຈາກແຫຼ່ງທຶນໃດເຂົ້າມາຕື່ມ ເພື່ອເຮັດໃຫ້ຜົນຜະລິດຫຼາຍຂຶ້ນກວ່າເກົ່າ?.

- ໃນພາກເດີນເລື່ອງ ໃຫ້ເອົາໃຈໃສ່ເປັນພິເສດ ໂດຍຫ້າມເດັດຂາດບໍ່ໃຫ້ມີຄຳເຫັນຂອງຜູ້ຂຽນ ເພາະມັນແມ່ນຜົນງານຂອງຄອບຄົວຕົວແບບຮ້ອຍສ່ວນຮ້ອຍ.

**ພາກສະຫຼຸບ:**

ຕ້ອງນຳສະເໜີຜົນສຳເລັດໃນການຜະລິດ (ການປູກ-ການລ້ຽງ) ໂດຍຍົກໃຫ້ເຫັນອັນພົ້ນເດັ່ນ ເພື່ອໃຫ້ຜູ້ອ່ານ, ອ່ານເຂົ້າໃຈ, ອ່ານແລ້ວສາມາດນຳໄປໃຊ້ໃນຊີວິດຕົວຈິງໄດ້.

- ຕ້ອງມີການຢັ້ງຢືນດ້ວຍວັດຖຸຕົວຈິງທີ່ມີໃນຄອບຄົວ ເຊັ່ນ: ມີເຮືອນຢູ່ຖາວອນ, ເຄື່ອງໃຊ້ໃນຄອບຄົວ, ພາຫະນະຂົນສົ່ງ ແລະ ເດີນທາງ (ເປັນຂອງສ່ວນຕົວ).

- ສ່ອງແສງການມີທຶນສົ່ງເສີມການສຶກສາສຳລັບລູກ.

- ມີການຢັ້ງຢືນຢ່າງເປັນທາງການ (ຖ່າຍຮູບປະກອບເວລາໃຫ້ສຳພາດ) ຈາກທ່ານໃດທ່ານໜຶ່ງໃນຈຳນວນເຫຼົ່ານີ້: ເລຂາພັກບ້ານ, ນາຍບ້ານ, ເລຂາພັກກຸ່ມບ້ານ, ພະນັກງານໂຄສະນາອົບຮົມເມືອງ, ເຈົ້າເມືອງ, ພະນັກງານວິຊາການຈາກຂະແໜງກະສິກຳ-ປ່າໄມ້, ພະນັກງານລົງກໍ່ສ້າງຮາກຖານປະຈຳບ້ານ…

ການຂຽນກ່ຽວກັບບຸກຄົນດີເດັ່ນ ກໍມີການສ່ອງແສງລັກສະນະຄ້າຍຄືກັນ ສິ່ງສຳຄັນໃນນີ້ ແມ່ນຕ້ອງມີບຸກຄົນຢັ້ງຢືນວ່າ: ເປັນບຸກຄົນດີເດັ່ນແທ້ ຫາກບໍ່ແມ່ນຜູ້ຂຽນຢັ້ງຢືນເອົາຈາກຄຳບອກເລົ່າ, ໃບຍ້ອງຍໍ ຫຼື ຫຼຽນໄຊເທົ່ານັ້ນ.

## ຄຳຖາມຄົ້ນຄວ້າ.

1. ການຂຽນບົດຂ່າວສານມີຈັກຮູບການ ຄືຮູບການໃດແດ່?.
2. ເປັນຫຍັງຈຶ່ງວ່າພາກສະຫຼຸບຂອງບົດຂ່າວສານມີຄວາມສຳຄັນ?.

# ບົດທີ 3

# ການຂຽນບົດຄວາມ.

ໃນບັນດາບົດທີ່ພົບເຫັນໃນໜັງສືພິມ ບົດຄວາມອາດກວມປະລິມານໜ້ອຍຖ້າທຽບໃສ່ບົດລາຍງານຂ່າວ ຫຼື ບົດຂ່າວສານທັງນີ້ກໍຍ້ອນວ່າການຂຽນບົດຄວາມຂ້ອນຂ້າງຍາກກວ່າບົດທຳມະດາ ການຂຽນບົດປະເພດນີ້ຕ້ອງມີການວິໄຈລະອຽດ, ມີການຕີລາຄາ ແລະ ອະທິບາຍກ່ຽວກັບເລື່ອງ ແລະ ບັນຫາຢ່າງເປັນລະບົບ ແລະ ສັບສົນສົມຄວນ. ບົດຄວາມມີປະຫວັດເກົ່າແກ່ຫຼາຍຮ້ອຍປີເພາະເປັນຮູບແບບການຂຽນທີ່ນັກການເມືອງ, ນັກຮຽນຮູ້ ແລະ ນັກຂ່າວທົ່ວໄປນິຍົມຂຽນຮູບການນີ້ ເພື່ອສ່ອງແສງທາງດ້ານທິດສະດີ, ຄວາມນຶກຄິດທາງດ້ານວິທະຍາສາດສັງຄົມ ແລະ ວິທະຍາສາດທຳມະຊາດ.

## I. ໜ້າທີ່ຕົ້ນຕໍຂອງບົດຄວາມ.

ໂດຍທົ່ວໄປບົດຄວາມທີ່ລົງພິມໃນກໍລະນີໃດກໍຕາມແມ່ນເພື່ອແກ້ໄຂ 3 ໜ້າວຽກໃຫຍ່ ດັ່ງນີ້:

1. ສະເໜີຢ່າງລະອຽດກ່ຽວກັບບັນຫາທາງແນວຄິດຈິດໃຈ ແລະ ອຸດົມຄະຕິຂອງຜູ້ຄົນໃນສັງຄົມ ເພື່ອຈຸດປະສົງພັດທະນາສ້າງສັນສັງຄົມໃຫ້ກ້າວໜ້າສີວິໄລ.

2. ໃຊ້ພາສາພັນລະນາຢ່າງນິ້ມນວນ ຄ່ອງແຄ້ວກ່ຽວກັບແນວຄວາມຄິດຢ່າງພາວະວິໄສ ເປັນລະບົບມີແຜນການພ້ອມກັບມີເຈດຕະນາລົມອັນແນ່ວແນ່ໃນການອະທິບາຍແນວທາງຂອງພັກ-ລັດ ກ່ຽວກັບບັນຫາໃດໜຶ່ງທີ່ຕິຖອຍ ແລະ ໂຕ້ແຍ້ງແນວຄວາມຄິດທີ່ບໍ່ຖືກຕ້ອງ ແລະ ຜິດເຂວ.

3. ຄົ້ນຄວ້າ ແລະ ຊອກຫາຫຼາຍສາເຫດ ແລະ ຊອກຫາຫຼາຍແງ່ມູມໃນບັນຫາໃດໜຶ່ງທີ່ພົ້ນເດັ່ນຂຶ້ນໃນສັງຄົມ ພ້ອມທັງຊອກທາງອອກໃຫ້ເໝາະສົມເປັນປະໂຫຍດແກ່ການສ້າງສາພັດທະນາຖືກຕ້ອງຕາມແນວທາງຂອງພັກ-ລັດ.

## II. ໂຄງສ້າງຂອງບົດຄວາມ.

ການຂຽນບົດຄວາມກໍມີໂຄງສ້າງຂອງບົດທົ່ວໄປຄືມີພາກເປີດຫົວເລື່ອງ, ເນື້ອເລື່ອງ (ການເດີນເລື່ອງ, ຂະຫຍາຍເລື່ອງ) ແລະ ສະຫຼຸບເລື່ອງ.

**- ຫົວເລື່ອງ.**

ຍ້ອນວ່າການຂຽນບົດຄວາມນັ້ນ ບໍ່ແມ່ນການນຳເອົາເຫດການອັນໜຶ່ງ ແລະ ອັນດຽວມາສ່ອງແສງມັນແມ່ນການນຳເອົາຂະບວນວິວັດຂອງເຫດການມາສ່ອງແສງ. ສະນັ້ນ, ພາກໄຂຫົວເລື່ອງສຳຄັນຫຼາຍອາດຈະໄຂຫົວເລື່ອງດ້ວຍການຕັ້ງຄຳຖາມຕາມຜົນປະໂຫຍດຂອງຜູ້ອ່ານແລ້ວຕອບເລີຍກໍໄດ້. ໃນພາກປະຕິບັດມັກຈະພົບບັນຫາໃນພາກຫົວເລື່ອງ ຍ້ອນວ່າການເຂົ້າເຖິງບັນຫາບໍ່ລະອຽດການສ່ອງແສງບໍ່ຈະແຈ້ງ ເປັນຕົ້ນແມ່ນຂະບວນວິວັດຂອງເຫດການ ຫຼື ການຍົກເຫດ ຍົກຜົນກໍບໍ່ເໝາະສົມ ພາໃຫ້ການຂຽນປິ່ນອ້ອມເລື່ອງຫຼາຍເກີນໄປບໍ່ສາມາດອະທິບາຍ ,ວິໄຈ, ຊວນເຊື່ອຜູ້ອ່ານໄດ້. ຈຸດນີ້ພາໃຫ້ບົດຄວາມພົບບັນຫາແຕ່ຫົວທີໂລດ.

**- ເດີນເລື່ອງ.**

ການເດີນເລື່ອງໃນນີ້ ແມ່ນການວິໄຈ ແລະ ອະທິບາຍບັນຫາທີ່ຕັ້ງຂຶ້ນຢ່າງພາວະວິໄສ ແລະ ແບບມີການຕອບໂຕ້, ແຕ່ຕ້ອງມີການຈັດລຽງບັນຫາແບບຕັກກະວິທະຍາ (ສົມເຫດ, ສົມຜົນ) ການໃຊ້ຂໍ້ມູນເປັນຕົວກຳນົດ

ບົດບາດຂອງຂໍ້ຄວາມ ເພາະວ່າຢາກອະທິບາຍບັນຫາໃດໜຶ່ງໄດ້ຕ້ອງມີຂໍ້ມູນລະອຽດບໍ່ວ່າທາງວິຊາການ ກໍຄື ທາງບຸກຄົນຢັ້ງຢືນ, ຈຸດນີ້ຜູ້ຂຽນຕ້ອງຊອກຮູ້ຫາຂໍ້ມູນຢ່າງຮັດກຸມບອກທີ່ມາຂອງແຫຼ່ງຂໍ້ມູນຢ່າງກົງໄປກົງມາບໍ່ບິດອໍາ.

**- ສະຫຼຸບ.**

ໃນພາກສະຫຼຸບ ຜູ້ຂຽນອາດກັບຄືນສູ່ບັນຫາໃຫຍ່ໆ ພ້ອມຄໍາຕອບໂດຍສັງເຂບສິ່ງທີ່ໄດ້ເວົ້າໄປແລ້ວ. ວິທີນີ້ຈະເຮັດໃຫ້ຜູ້ອ່ານໄດ້ຮັບການກະຕຸ້ນທີ່ດີມີແນວຄິດສົມເຫດ, ສົມຜົນ ໃນການແກ້ບັນຫາທັງກຽມພ້ອມຕິດຕາມການແກ້ໄຂບັນຫາຂອງຜູ້ຂຽນຕາມຫົວເລື່ອງຂອງຜູ້ຂຽນຍົກຂຶ້ນ. ຍ້ອນເປັນບົດຂຽນທີ່ວິໄຈຂະບວນວິວັດຂອງເຫດການໃດເຫດການໜຶ່ງທີ່ມີການຂະຫຍາຍຕົວ.

ສະນັ້ນ, ມັນຮຽກຮ້ອງໃຫ້ຜູ້ຂຽນຕ້ອງໃຊ້ຂໍ້ມູນຫຼາຍຈະດ້ວຍເອກະສານ ຫຼື ການສະສົມຂໍ້ມູນສ່ວນຕົວ (ທຶນຊີວິດ) ກໍໄດ້ທັງນັ້ນ ເພື່ອໃຫ້ຜູ້ອ່ານເຂົ້າໃຈບັນຫາທີ່ຕັ້ງຂຶ້ນ.

## III. ບາງບົດຮຽນຕົວຈິງໃນການຂຽນບົດຄວາມ.

ບົດຄວາມແມ່ນການຂຽນທີ່ໃຊ້ທິດສະດີທີ່ຕິດພັນກັບພຶດຕິກໍາ ເພື່ອຕັ້ງບັນຫາຄົ້ນຄວ້າວິໄຈ ແລະ ສະຫຼຸບຖອດຖອນເປັນບົດຮຽນກ່ຽວກັບບັນຫາໃດບັນຫາໜຶ່ງ ທີ່ມີລັກສະນະສະຖານະການຢູ່ພາຍໃນ ຫຼື ຕ່າງປະເທດ.

ບົດຄວາມຄວນນໍາໃຊ້ໃນເວລາທີ່ມີບັນຫາຮີບຮ້ອນ ຊຶ່ງຮຽກຮ້ອງໃຫ້ມີການສະຫຼຸບສັງລວມຢ່າງຄົບຖ້ວນ ແລະ ອະທິບາຍບັນຫາໃນລັກສະນະທິດສະດີ. ສະນັ້ນ, ການຂຽນບົດຄວາມຈຶ່ງຮຽກຮ້ອງໃຫ້ມີຫຼັກຖານພະຍານຕົວຈິງ, ຕິດພັນກັບທິດສະດີຢ່າງເລິກເຊິ່ງ, ມີການວິເຄາະວິໄຈບັນຫາຢ່າງໜັກແໜ້ນ, ສະແດງທັດສະນະການເມືອງ ແລະ ທ່າທີ່ການເມືອງຢ່າງຈະແຈ້ງ.

ຍ້ອນແນວນັ້ນເອງ ຈຶ່ງບໍ່ສູ້ປະກົດເຫັນບົດຄວາມແຜ່ຫຼາຍໃນສື່ມວນຊົນເໝືອນບົດນໍາ (ໂດຍສະເພາະແມ່ນບົດຄວາມທີ່ສະເພາະເຈາະຈົງໃສ່ບັນຫາຮີບດ່ວນໃດໜຶ່ງໂດຍກົງ) ບົດຄວາມສ່ວນຫຼາຍຂຽນໃນກໍລະນີ ດັ່ງນີ້:

1. ເມື່ອມີຄວາມຈໍາເປັນຈະຕ້ອງໄດ້ແກ້ໄຂບັນຫາທີ່ກ່ຽວຂ້ອງເຖິງທິດສະດີທີ່ເລິກເຊິ່ງສົມຄວນ ຫຼື ເວລາມີຄວາມຈໍາເປັນຈະຕ້ອງໄດ້ໂຄສະນາເຜີຍແຜ່ທັດສະນະພື້ນຖານຂອງແນວທາງການເມືອງຂອງພັກ ຍົກຕົວຢ່າງ: ເວລາພັກເຮົາມີມະຕິຂອງກອງປະຊຸມໃຫຍ່ແຕ່ລະຄັ້ງ ມັກຈະມີຫຼາຍບັນຫາຕັ້ງຂຶ້ນທີ່ມີລັກສະນະທິດສະດີ ເຊິ່ງຈະຕ້ອງໄດ້ເຜີຍແຜ່ໃຫ້ແກ່ພະນັກງານຂັ້ນຕ່າງໆເຊື່ອມຊຶມເຊັ່ນ: ບັນຫາສູ້ຊົນໃຫ້ຫຼຸດພົ້ນອອກຈາກຄວາມທຸກຍາກ, ບັນຫາສ້າງຄວາມເຂັ້ມແຂງດ້ວຍຕົນເອງ, ບັນຫາຜະລິດເປັນສິນຄ້າ, ບັນຫາປະຢັດມັດທະຍັດ, ບັນຫາຕ້ານປະກົດການຫຍໍ້ທໍ້ໃນສັງຄົມ, ບັນຫາຕ້ານຢາເສບຕິດ...

2. ເວລາພັກ-ລັດມີນະໂຍບາຍໃໝ່ໆ ປະກາດອອກໃໝ່ທີ່ພົວພັນເຖິງບັນຫາສໍາຄັນໃນຊີວິດປະຈໍາວັນຂອງປະຊາຊົນ. ເພື່ອອະທິບາຍບັນຫາທີ່ຈະເກີດຂຶ້ນພາຍຫຼັງການປະກາດໃຊ້ນະໂຍບາຍໃໝ່ເຫຼົ່ານັ້ນເຊັ່ນ: ອາດຈະຂຽນບົດຄວາມໃນຫົວຂໍ້ວ່າ "ພາສີເປັນພາຫະນະສ້າງສັງຄົມສີວິໄລ" ບົດຄວາມກ່ຽວກັບພາສີນີ້ຈະໄດ້ຍົກບັນຫາຕາມແບບແລກປ່ຽນຄໍາຄິດຄໍາເຫັນທີ່ມີຈຸດສຸມ ແລະ ລົງເລິກອະທິບາຍນະໂຍບາຍພາສີອາກອນອັນຖືກຕ້ອງຂອງພັກ-ລັດ ຊຶ່ງເປັນການລະດົມທຶນຮອນອັນຊອບທໍາ ເພື່ອນໍາໃຊ້ເຂົ້າໃນການພັດທະນາສ້າງສາປະເທດຊາດໃຫ້ຈະເລີນຮຸ່ງເຮືອງ; ພ້ອມກັນນັ້ນ ກໍຕ້ອງຈໍາແນກໃຫ້ເຫັນແຈ້ງກ່ຽວກັບຄວາມແຕກຕ່າງລະຫວ່າງພາສີຂອງລະບອບໃໝ່ ແລະ ພາສີຂອງລະບອບເກົ່າ ຈາກນັ້ນ ຈຶ່ງສະຫຼຸບໄດ້ວ່າການເສຍພາສີເປັນທັງຄວາມຮັບຜິດຊອບ ແລະ ເປັນທັງພັນທະຂອງພົນລະເມືອງລາວໝົດທຸກຄົນ.

**3. ເວລາມີເຫດການທາງການເມືອງທີ່ສໍາຄັນ ແລະ ຮຽກຮ້ອງໃຫ້ມີການແກ້ໄຂດ່ວນ.**

ຍົກຕົວຢ່າງ: ພາຍຫຼັງທີ່ພັກ-ລັດເຮົາວາງແນວທາງປ່ຽນແປງໃໝ່ຢ່າງຮອບດ້ານ ອອກມາມັນໄດ້ຕັ້ງບັນຫາຂຶ້ນຫຼາຍຢ່າງເຊັ່ນ: ບັນຫາທາງດ້ານການເມືອງ, ເສດຖະກິດ, ວັດທະນະທໍາ, ສັງຄົມ... ຊຶ່ງຈະໄດ້ຮັບການອະທິ

ບາຍໃຫ້ຈະແຈ້ງ. ມີບາງບັນຫາຄວນໄດ້ຮັບການແກ້ໄຂແຕ່ຈະຕ້ອງລໍຖ້າໂອກາດອໍານວຍຈຶ່ງໄດ້ຮັບຜົນສູງ, ຕົວຢ່າງ: ຂຽນບົດຄວາມລະນຶກວັນເກີດຂອງ ທ່ານ ກາກມາກ, ວັນເກີດຂອງ ທ່ານ ເລນິນ, ວັນເກີດຂອງທ່ານຜູ້ນໍາເຮົາ, ວັນຊາດ 2 ທັນວາ, ວັນປະກາດເອກະລາດ, ວັນລຸກຮື້ຂຶ້ນຍຶດອໍານາດການປົກຄອງດ້ວຍມືປະຊາຊົນ 23 ສິງຫາ. ໃນການພົວພັນສາກົນກໍມີຫຼາຍບັນຫາທີ່ຄວນຂຽນເປັນປະເພດບົດຄວາມແຕ່ໃຫ້ເໝາະກັບກາລະເວລາ (ເຫດການປະຫວັດສາດຂອງແຕ່ລະຊາດ ທີ່ມີການພົວພັນອັນດີຕໍ່ກັນ, ເປັນຕົ້ນແມ່ນເພື່ອນມິດຍຸດທະສາດ).

**4. ເມື່ອມີບັນຫາທາງດ້ານວິຊາສະເພາະ, ທາງດ້ານວິທະຍາສາດ-ເຕັກນິກທີ່ມີຄວາມສໍາຄັນ ແລະ ກ່ຽວຂ້ອງໂດຍກົງເຖິງຂະແໜງການຕ່າງໆ.**

ການເຄື່ອນໄຫວທາງດ້ານວິທະຍາສາດ, ວັດທະນະທໍາ, ວັນນະຄະດີ... ມີບັນຫາກໍຄວນໄດ້ປຶກສາຫາລືຢ່າງເລິກເຊິ່ງ ເພື່ອສະຫຼຸບຖອດຖອນໃຫ້ເປັນບັນຫາທີ່ມີຄວາມໝາຍໃນອັນດັບອັນແນ່ນອນ. ສະນັ້ນ, ສື່ມວນຊົນກໍອາດສາມາດນໍາໃຊ້ບົດຄວາມເພື່ອປະກອບເຂົ້າໃນການອະທິບາຍແກ້ບັນຫາເຫຼົ່ານັ້ນ. ຕົວຢ່າງ: ບັນຫາກ່ຽວກັບວິທະຍາສາດ-ເຕັກນິກຮັບໃຊ້ກະສິກໍາ, ວິທະຍາສາດນໍາໃຊ້ຊີວິດການເປັນຢູ່ຂອງປະຊາຊົນ, ຮັບໃຊ້ວຽກງານປ່າໄມ້... ຕ້ອງນໍາໃຊ້ບົດຄວາມໃຫ້ສອດຄ່ອງເໝາະສົມກັບຈຸດເວລາທີ່ຈະອະທິບາຍເຜີຍແຜ່.

**5. ບົດຄວາມເປັນປະເພດບົດໂຄສະນາ, ມັນມີເປົ້າໝາຍອັນແນ່ນອນ, ສະນັ້ນ ບໍ່ແມ່ນວ່າເວລາ**ໃດກໍຈະເກັບເອົາມາເປັນບົດຄວາມໝົດ. ຍິ່ງໄປກວ່ານັ້ນ ໃນຫຼາຍກໍລະນີບົດຄວາມຍັງເວົ້າເຖິງບັນຫາທີ່ໃຫຍ່ຫຼວງ, ມີຄວາມສໍາຄັນຕໍ່ທົ່ວທັງປະເທດ, ບາງຄັ້ງຍັງແນໃສ່ເປົ້າໝາຍທັງນອກ, ແນໃສ່ຊົນຊັ້ນທີ່ເປັນປໍລະປັກນໍາອີກ.

ດັ່ງນັ້ນ, ການຂຽນບົດຄວາມຕ້ອງມີຄວາມລະມັດລະວັງ, ຂຽນໃຫ້ຖືກຕ້ອງຕາມແນວທາງ, ຖືກຕ້ອງຕາມທັດສະນະຫຼັກໝັ້ນ ແລະ ຖືກຕ້ອງຕາມທິດສະດີຂອງພັກ; ພ້ອມກັນນັ້ນ ກໍມີຄວາມຊັດເຈນກ່ຽວກັບຄວາມຮູ້ທາງດ້ານວິຊາການ, ນໍາໃຊ້ຄໍາສັບ ແລະ ປະໂຫຍກໃຫ້ຮັດກຸມ.

**ຕົວຢ່າງ:** ບົດຄວາມລະນຶກວັນສໍາຄັນ (ບົດຄວາມຈາກໜັງສືພິມກອງທັບປະຊາຊົນລາວ (ໜ້າ 1) ລົງວັນທີ 7 ຕຸລາ 2019).

**<u>ຫົວຂໍ້</u>: ຄູແມ່ນວິສາວະກອນທາງປັນຍາ ແລະ ເປັນແມ່ພິມຂອງຊາດ.**

ຄົນເຮົາທຸກຄົນຢູ່ໃນສັງຄົມບໍ່ວ່າຈະຢູ່ໃນຖານະຕໍາແໜ່ງໃດກໍຕາມ ກ່ອນຈະກ້າວໄປເຖິງຈຸດໃດໜຶ່ງຂອງຊີວິດກໍລ້ວນແລ້ວແຕ່ໄດ້ຮັບການອົບຮົມບົ່ມສອນຈາກພໍ່ແມ່ຜູ້ໃຫ້ກໍາເນີດ, ແຕ່ນອກຈາກພໍ່ກັບແມ່ຜູ້ທີ່ໃຫ້ກໍາເນີດແລ້ວ ທີ່ທຸກຄົນບໍ່ອາດສາມາດປະຕິເສດ ແລະ ຫຼົງລືມໄດ້ນັ້ນ ກໍຄື ຄູ ທີ່ນັກຮຽນ, ນັກສຶກສາຖືເປັນພໍ່ແມ່ຜູ້ທີ 2 ຂອງຕົນນັ້ນເອງ. ນອກຈາກນີ້, ອາຊີບຄູຍັງໄດ້ການຂະໜານນາມຈາກສັງຄົມວ່າ "ຄູແມ່ນແມ່ພິມຂອງຊາດ". ຍ້ອນວ່າຄູແມ່ນຜູ້ທີ່ໄດ້ອຸທິດສະຕິປັນຍາຂອງຕົນເພື່ອຜູ້ອື່ນ, ແມ່ນຜູ້ທີ່ເສຍສະຫຼະຜົນປະໂຫຍດຂອງຕົນສູງ, ຄູຄືແສງທຽນທີ່ເຍືອງທາງໃຫ້ແກ່ການສຶກສາ ທັງແມ່ນນັກວິສະວະກອນແຫ່ງການກໍ່ສ້າງພູມປັນຍາ. ສະຕິປັນຍາຄວາມຮູ້ຂອງຊາດແມ່ນຕ້ອງໄດ້ອາໄສຄູເປັນເບົ້າແບບໃຫ້ກໍາເນີດ, ບົດບາດຂອງຄູໃນຖານະທີ່ເປັນຜູ້ມີຄຸນຄ່າອັນສູງສົ່ງຕໍ່ການສ້າງຊັບພະຍາກອນມະນຸດໃຫ້ແກ່ປະເທດຊາດ.

ຈາກຄວາມໝາຍຄວາມສໍາຄັນຄືດັ່ງກ່າວນັ້ນ, ມັນຍິ່ງມີຄວາມຈໍາເປັນຜູ້ທີ່ຢຶດຖືອາຊີບຄູ ຕ້ອງຍົກສູງ ແລະ ປະຕິບັດໜ້າທີ່ຕາມການຈັດຕັ້ງມອບໝາຍຢ່າງເຂັ້ມງວດ ຊຶ່ງແມ່ນໜ້າທີ່ຂອງຄູໂດຍກົງໃນການສິດສອນເພື່ອສິ່ງຄວາມຮູ້ ແລະ ແນະນໍາໃຫ້ນັກຮຽນ, ນັກສຶກສາປະພຶດປະຕິບັດໃນທາງທີ່ດີມີປະໂຫຍດ. ຄູດີບໍ່ພຽງແຕ່ສິດສອນເທົ່ານັ້ນ, ຕ້ອງປະພຶດດີນໍາດ້ວຍ ເພາະການສິດສອນທີ່ດີຄືການກະທໍາເປັນຕົວຢ່າງ ຊຶ່ງຈະເຮັດໃຫ້ຜູ້ປະຕິບັດນໍາ

ຢ່າງບໍ່ຮູ້ສຶກຕົວ. ນອກຈາກນັ້ນກໍຕ້ອງສິດສອນໃຫ້ນັກຮຽນ, ນັກສຶກສາບໍ່ໃຫ້ປະພຶດໃນທາງເສຍຫາຍ. ຖ້າຜູ້ໃດມີການປະພຶດທີ່ຜິດ ຄວນມີວິທີແກ້ໄຂ ແລະ ສະກັດກັ້ນ ໂດຍສະເພາະ ແມ່ນເລື່ອງອະບາຍະມຸກຕ່າງໆ. ການເປັນຄູທີ່ດີມີໜ້ອຍຄົນຈະເຮັດໄດ້. ເພາະວ່າ ການເປັນຄູທີ່ດີນອກຈາກຈະເປັນຜູ້ທີ່ມີຄວາມຮູ້ທີ່ແນ່ນອນແລ້ວ ຕ້ອງເປັນຜູ້ທີ່ມີໃຈຮັກ, ມີຄວາມປາຖະໜາ, ມີອຸດົມການອັນສູງສົ່ງ, ເສຍສະຫຼະ ແລະ ມີບຸກຄະລິກອັນເໝາະສົມ, ເນື່ອງຈາກວ່ານັກຮຽນ, ນັກສຶກສາມີຄວາມປາຖະໜາບໍ່ເໝືອນກັນ, ບາງຄົນມັກຮຽນນຳຄູເກັ່ງມີຄວາມຮູ້, ບາງຄົນມັກຮຽນນຳຄູທີ່ເວົ້ານິ່ມຫົວມ່ວນ. ສະນັ້ນ, ການເປັນຄູທີ່ດີນັ້ນຜູ້ທີ່ປະຕິບັດໄດ້ນັ້ນ ກໍຕ້ອງແມ່ນຜູ້ທີ່ມີຄວາມເສຍສະຫຼະຜົນປະໂຫຍດສ່ວນຕົວໃນລະດັບອັນແນ່ນອນ ໂດຍສະເພາະ ໃນເງື່ອນໄຂປັດຈຸບັນ. ດັ່ງນັ້ນ, ການເປັນຄູຈະຕ້ອງແມ່ນຜູ້ທີ່ມີຈິດໃຈຮັກ, ຜູ້ມີສັດທາ ແລະ ມີຄຸນສົມບັດເທົ່ານັ້ນ.

ເພື່ອປົກປ້ອງ ແລະ ຮັກສາໄວ້ ຊຶ່ງກຽດຕິສັກອັນສູງສົ່ງຂອງຄູທີ່ສັງຄົມມອບໃຫ້ ໃນຖານະທີ່ເປັນແມ່ພິມຂອງຊາດ ບັນຫາສຳຄັນອັນໜຶ່ງນັ້ນ ກໍຄື ຕ້ອງໄດ້ເປັນແບບຢ່າງໃນການເຄົາລົບລະບຽບກົດໝາຍ ແລະ ປະຕິບັດໜ້າທີ່ຕ່າງໆເໝືອນຄົນອື່ນ. ເພາະລະບຽບກົດໝາຍເປັນບັນທັດຖານໃຫ້ສັງຄົມປະຕິບັດຕາມ. ດ້ວຍເຫດນັ້ນ, ສັງຄົມທີ່ກວ້າງຂວາງເຊັ່ນ: ສະຖາບັນການສຶກສາຕະຫຼອດຮອດປະເທດຊາດ ຕ້ອງມີລະບຽບກົດໝາຍໄວ້ເປັນບັນທັດຖານ. ພ້ອມດຽວກັນນັ້ນ, ຜູ້ທີ່ຍຶດຖືໃນອາຊີບຄູຕ້ອງໄດ້ມີຈິດໃຈກວ້າງຂວາງ, ມີທັດສະນະທີ່ດີຕໍ່ນັກຮຽນ, ນັກສຶກສາ ແລະ ຄູດ້ວຍກັນ. ບົດບາດ ແລະ ໜ້າທີ່ຂອງຄູບໍ່ແມ່ນມີໜ້າທີ່ສິດສອນພຽງແຕ່ຢ່າງດຽວ ໂດຍສະເພາະ ຢູ່ທ້ອງຖິ່ນຊົນນະບົດ, ຄູມີບົດບາດເປັນຜູ້ນຳ, ເປັນທີ່ປຶກສາຂອງປະຊາຊົນ ໃນຖານະເປັນຜູ້ທີ່ມີຄວາມຮູ້ກວ້າງຂວາງການໃຫ້ຄຳປຶກສາບໍ່ວ່າຈະເປັນໄລຍະຮຽນຢູ່ ຫຼື ມີວຽກເຮັດງານທຳແລ້ວ ຖ້ານັກຮຽນ, ນັກສຶກສາ ແລະ ເພື່ອນຄູຜູ້ໃດບໍ່ທັນເຂົ້າໃຈແຈ້ງທາງດ້ານທິດສະດີ, ວິທີການຈັດຕັ້ງປະຕິບັດກໍຄວນແນະນຳໃຫ້ເຂົາເຈົ້າດ້ວຍຄວາມຈິງໃຈ.

ສັງລວມແລ້ວ, ການເປັນຄູທີ່ດີມີຄຸນສົມບັດສິນທຳປະຕິວັດ, ປະຕິບັດໜ້າທີ່ບົດບາດຂອງຕົນເອງຢ່າງມີຄວາມຮັບຜິດຊອບສູງໄດ້ນັ້ນ ແມ່ນຄຸນສົມບັດພື້ນຖານຂອງຄວາມເປັນຄູ ຈຶ່ງເປັນປັດໄຈສຳຄັນທີ່ສຸດສຳລັບວິຊາຊີບທີ່ສັງຄົມໃຫ້ນາມມະຍົດວ່າ: “ແມ່ພິມຂອງຊາດ” ສົມທົບກັບປະຊາຊົນໄດ້ມອບຄວາມໄວ້ເນື້ອເຊື່ອໃຈໃນການສຶກສາອົບຮົມ, ສິດສອນລູກເຕົ້າຜູ້ເປັນທີ່ຮັກຂອງເຂົາເຈົ້າໃຫ້ກາຍເປັນລູກທີ່ດີຂອງພໍ່ແມ່, ຍາດພີ່ນ້ອງ ແລະ ເປັນພົນລະເມືອງດີຂອງຊາດທີ່ມີຄວາມສາມາດ, ມີຄຸນນະພາບດີ, ຈະເປັນການປະກອບສ່ວນໃນລະດັບອັນແນ່ນອນເຂົ້າໃນການຊຸກຍູ້ໃຫ້ປະເທດຊາດຈະເລີນວັດທະນາ ແລະ ກ້າວໜ້າຍິ່ງໆຂຶ້ນ.

ຕົວຢ່າງ: ບົດຄວາມ ເຫດການບໍ່ເພິ່ງປາຖະໜາ ຊີ້ນຳການເມືອງ-ແນວຄິດ (ອອກໜັງສືພິມເສດຖະກິດ-ການຄ້າ ລົງວັນທີ 18 ກັນຍາ 2018; ຄຳລຳມຸມຫຼັກແປດ).

### <u>ຫົວຂໍ້</u>: ເພີ່ມທະວີວຽກງານການເມືອງ-ແນວຄິດຕໍ່ເຫດໄພພິບັດ.

ປີນີ້ໄພພິບັດເກີດຂຶ້ນຢູ່ປະເທດເຮົາໜັກໜ່ວງແບບບໍ່ເຄີຍມີມາກ່ອນ ເນື່ອງຈາກສະພາບດິນຟ້າອາກາດປີນີ້ປ່ຽນແປງຢູ່ເລື້ອຍໆ ມີປະກົດການທຳມະຊາດເກີດຂຶ້ນແບບຜິດປົກກະຕິ ໂດຍເລີ່ມແຕ່ຕົ້ນປີເປັນຕົ້ນມາ ເກີດມີລົມພັດແຮງ, ຟ້າຜ່າຄົນ ແລະ ສັດລ້ຽງ, ພໍເລີ່ມເຂົ້າສູ່ລະດູຝົນກໍເກີດມີຝົນຕົກໜັກ, ນ້ຳຖ້ວມ, ດິນເຈື່ອນ ແລະ ເຫດການອື່ນໆ ເກີດຂຶ້ນຢ່າງຕໍ່ເນື່ອງໃນວົງກວ້າງໄດ້ສ້າງຄວາມເສຍຫາຍຕໍ່ຊີວິດ ແລະ ຊັບສິນຂອງປະຊາຊົນ ທັງເປັນອຸປະສັກຢ່າງໃຫຍ່ຫຼວງຕໍ່ການດຳລົງຊີວິດຂອງປະຊາຊົນ. ໃນນັ້ນ, ເຫດການທີ່ສັງຄົມເສົ້າສະຫຼົດໃຈກວ່າໝູ່

ແມ່ນຄູຕົ້ນນ້ຳຂອງເຂື່ອນໄຟຟ້າເຊປຽນ-ເຊນ້ຳນ້ອຍແຕກພັງ ສ້າງຄວາມເສຍຫາຍອັນໜັກໜ່ວງຕໍ່ຊີວິດ ແລະ ຊັບສິນຂອງປະຊາຊົນໃນເຂດດັ່ງກ່າວ ຊຶ່ງເປັນເຫດໄພພິບັດທີ່ບໍ່ເຄີຍເກີດຂຶ້ນມາກ່ອນໃນປະເທດເຮົາ.

ຢືນຕໍ່ໜ້າສະພາບດັ່ງກ່າວຮຽກຮ້ອງໃຫ້ພວກເຮົາ ຕ້ອງໄດ້ເພີ່ມທະວີວຽກງານການນຳພາ, ວຽກງານການເມືອງ-ແນວຄິດຕໍ່ເຫດໄພພິບັດ ຊຶ່ງແມ່ນເຫດການທີ່ບໍ່ມີໃຜຢາກໃຫ້ມັນເກີດຂຶ້ນ, ພວກເຮົາຕ້ອງເຂົ້າໃຈວ່າເຫດການນີ້ເກີດຂຶ້ນຈາກການປ່ຽນແປງພູມອາກາດຂອງໂລກ, ການພັດທະນາທີ່ສ້າງຜົນກະທົບຕໍ່ທຳມະຊາດ ເຫດການນີ້ ບໍ່ແມ່ນວ່າເກີດຂຶ້ນແຕ່ຢູ່ປະເທດເຮົາ ຫຼາຍປະເທດກໍເກີດຂຶ້ນໃນປີນີ້ ແລະ ຫຼາຍປີຜ່ານມາເຊັ່ນກັນ. ສະນັ້ນ, ພວກເຮົາຕ້ອງໄດ້ທຳໃຈພ້ອມກັນຜ່ານຜ່າ ເພື່ອຟື້ນຟູຊີວິດການເປັນຢູ່ໃຫ້ເຂົ້າສູ່ສະພາບປົກກະຕິໂດຍໄວ.

ການຈັດຕັ້ງຂັ້ນເທິງ ແລະ ກ່ຽວຂ້ອງຕ່າງໆກໍໄດ້ພະຍາຍາມແກ້ໄຂເຫດຮ້າຍດັ່ງກ່າວຢ່າງເປັນເຈົ້າການ ຕັ້ງແຕ່ມື້ເລີ່ມຕົ້ນ ຊຶ່ງໃນວ່າງບໍ່ດົນນີ້ ຄະນະເລຂາທິການສູນກາງພັກກໍໄດ້ອອກຄຳສັ່ງ ເລກທີ 06/ຄລສພ ວ່າດ້ວການເພີ່ມທະວີຄວາມຮັບຜິດຊອບຂອງຄະນະພັກໃນການນຳພາ-ຊີ້ນຳການປ້ອງກັນ ແລະ ຮັບມືໄພພິບັດທຳມະຊາດ ໂດຍມີເນື້ອໃນສຳຄັນ ດັ່ງນີ້:

1. ໃຫ້ຄະນະພັກແຕ່ລະຂັ້ນຖືສຳຄັນການສຶກສາອົບຮົມ, ອະທິບາຍໃຫ້ແກ່ຖັນແຖວພະນັກງານ, ທະ ຫານ , ຕຳຫຼວດ ແລະ ພໍ່ແມ່ປະຊາຊົນໃຫ້ມີຄວາມເຂົ້າໃຈຢ່າງຖືກຕ້ອງ ກ່ຽວກັບຄວາມສ່ຽງໄພພິບັດທາງທຳມະຊາດຢູ່ໃນພື້ນທີ່ດຳລົງຊີວິດ ເພື່ອໃຫ້ມີສະຕິລະວັງຕົວ ແລະ ເປັນເຈົ້າການ ການຮັບມືກັບໄພພິບັດທີ່ອາດຈະເກີດຂຶ້ນ.

2. ປັບປຸງການຈັດຕັ້ງຂອງຄະນະກຳມະການປ້ອງກັນ ແລະ ຄວບຄຸມໄພພິບັດຢູ່ແຕ່ລະຂັ້ນ. ໃນນັ້ນ, ຕ້ອງປະກອບຄົນ ແລະ ຈັດວາງການຈັດຕັ້ງໃຫ້ທົ່ວເຖິງເປັນລະບົບ, ປະກອບພາຫະນະ, ອຸປະກອນ ແລະ ງົບປະ ມານອັນຈຳເປັນ, ສ້າງ ແລະ ປັບປຸງກົນໄກເຄື່ອນໄຫວປະສານງານໃຫ້ໂລ່ງລ່ຽນ ພ້ອມທັງຝຶກອົບຮົມຍົກລະດັບເຈົ້າໜ້າ ທີ່ດ້ານກູ້ໄພໃຫ້ເປັນປົກກະຕິ.

3. ໃນກໍລະນີເກີດໄພພິບັດ ຄະນະພັກ, ອຳນາດການປົກຄອງບ່ອນເກີດເຫດນັ້ນ ຕ້ອງເປັນເຈົ້າການນຳພາ-ຊີ້ນຳ ເພື່ອຈັດຕັ້ງຜັນຂະຫຍາຍແຜນການກູ້ໄພ ໂດຍຜ່ານກົນໄກການຈັດຕັ້ງຂອງຄະນະກຳມະການປ້ອງກັນ ແລະ ຄວບຄຸມໄພພິບັດຢູ່ທ້ອງຖິ່ນຂອງຕົນ, ຮັບປະກັນໃຫ້ເຂົ້າເຖິງ ແລະ ຊ່ວຍເຫຼືອຜູ້ປະສົບໄພໂດຍໄວ.

4. ເປັນເຈົ້າການນຳພາກະກຽມແຜນການ ແລະ ຄວາມພ້ອມໃນການຈັດຕັ້ງປະຕິບັດແຜນຟື້ນຟູຫຼັງໄພພິບັດ ລວມທັງດ້ານທີ່ຢູ່ອາໄສ, ອາຫານການກິນ, ປ້ອງກັນການປິ່ນປົວສຸຂະພາບ, ຟື້ນຟູດ້ານໃຈ ແລະ ການທຳມາຫາກິນຂອງປະຊາຊົນ ທີ່ໄດ້ຮັບຜົນກະທົບຈາກໄພພິບັດ ໃຫ້ເຂົ້າສູ່ສະພາບປົກກະຕິໂດຍໄວ.

5. ໃນການນຳພາ-ຊີ້ນຳແກ້ໄຂຈາກໄພພິບັດທີ່ເກີດຂຶ້ນຢູ່ເມືອງສະໜາມໄຊ ແຂວງອັດຕະປື ໃຫ້ຄະນະພັກແຂວງອັດຕະປື ແລະ ເມືອງສະໜາມໄຊ ສືບຕໍ່ເຊີດຊູຄວາມຮັບຜິດຊອບ ແລະ ເປັນເຈົ້າການຮ່ວມກັບຄະນະຮັບຜິດຊອບແກ້ໄຂໄພພິບັດຂອງສູນກາງ ທັງປະສານງານກັບທຸກພາກສ່ວນທີ່ກ່ຽວຂ້ອງ ເພື່ອຮັບປະກັນການຈັດຫາທີ່ຢູ່ອາໄສ, ແຈກສະບຽງອາຫານ, ປ້ອງກັນ-ຮັກສາສຸພາບໃຫ້ຜູ້ປະສົບໄພ ແລະ ວາງແຜນການຟື້ນຟູເບື້ອງຕົ້ນຫຼັງໄພພິບັດ. ສ່ວນຢູ່ທ້ອງຖິ່ນອື່ນໆທີ່ໄດ້ຮັບຜົນກະທົບຈາກໄພພິບັດທຳມະຊາດ ກໍໃຫ້ອຳນາດການປົກຄອງແຕ່ລະບ່ອນເປັນເຈົ້າການນຳພາ-ຊີ້ນຳ.

6. ໃຫ້ຄະນະພັກ, ກະຊວງອົງການ, ຄະນະພັກນະຄອນຫຼວງ ແລະ ບັນດາແຂວງໃນທົ່ວປະເທດ ເພີ່ມທະວີວຽກງານການເມືອງ-ແນວຄິດ ຕໍ່ພະນັກງານ-ສະມາຊິກພັກ ແລະ ພໍ່ແມ່ປະຊາຊົນບັນດາເຜົ່າ ເພື່ອຄວາມເຊື່ອ ໝັ້ນ

ຕໍ່ການນໍາພາຂອງພັກ, ການສົ່ງເສີມການໃຫ້ທຶນຈາກພາຍໃນ ແລະ ຕ່າງປະເທດ. ໃນຕໍ່ໜ້າ ພັກ-ລັດຖະບານ ຈະເອົາໃຈໃສ່ຢ່າງສຸດຂີດ, ປັບປຸງຄຸນນະພາບ ແລະ ປະສິດທິພາບໃນການຄຸ້ມຄອງບັນດາໂຄງການກໍ່ສ້າງເຂື່ອນຕ່າງໆ, ຖືການຮັບປະກັນຄວາມປອດໄພດ້ານຊີວິດ ແລະ ຊັບສິນຂອງປະຊາຊົນເປັນເງື່ອນໄຂສູງສຸດ.

ຈາກຄໍາສັ່ງດັ່ງກ່າວນີ້ ການຈັດຕັ້ງທີ່ກ່ຽວຂ້ອງຈະຕ້ອງເປັນເຈົ້າການນໍາພາວຽກງານການເມືອງ-ແນວຄິດເພື່ອໃຫ້ທົ່ວສັງຄົມເຂົ້າໃຈ ແລະ ພ້ອມກັນຜ່ານຜ່າເຫດການໄພພິບັດໃນຄັ້ງນີ້ ທັງເຊື່ອໝັ້ນຕໍ່ການນໍາພາຂອງພັກ-ລັດ ເຮັດໃຫ້ສະພາບການປົກກະຕິໂດຍໄວ.

## ຄໍາຖາມຄົ້ນຄວ້າ.

1. ບົດຄວາມແຕກຕ່າງກັບບົດຂ່າວສານຢູ່ບ່ອນໃດ ?
2. ໜ້າທີ່ຕົ້ນຕໍຂອງບົດຄວາມມີຫຍັງແດ່ ?

# ບົດທີ 4

# ການຂຽນບົດນຳ.

## I. ຄວາມສຳນຶກກ່ຽວກັບບົດນຳ ແລະ ປະເພດຂອງບົດນຳ.

### 1. ຄວາມສຳນຶກກ່ຽວກັບບົດນຳ.

**ບົດນຳ** ແມ່ນຮູບການສະແດງອອກເຖິງທັດສະນະຫຼັກໝັ້ນ ແລະ ການຊີ້ທິດເຍືອງທາງຂອງຄະນະບັນນາທິການໃດໜຶ່ງກ່ຽວກັບບັນຫາສຳຄັນໆທັງພາຍໃນ ແລະ ຕ່າງປະເທດ (ນຳໃຊ້ຫຼາຍແມ່ນໜັງສືພິມ ແລະ ວິທະຍຸກະຈາຍສຽງ).

ຕາມທຳມະດາແລ້ວ, ບົດນຳ ສະແດງອອກເປັນແນວຄິດລວມສູນກວ່າໝູ່ (ນາມປາກກາກໍໃສ່ຊື່ອົງການເລີຍ), ເປັນບົດທີ່ມີລັກສະນະສັງລວມ, ແຕ່ຫາກຍົກໃຫ້ເຫັນໜ້າທີ່ອັນຮີບດ່ວນທີ່ຈະຕ້ອງເຮັດທັນທີທັນໃດໂລດ. ສະນັ້ນ, ບົດນຳຈຶ່ງຖືວ່າເປັນຄັນທຸງຊີ້ນຳ-ນຳພາ ແລະ ເປັນກົດຄຳສັ່ງທາງການເມືອງໃນແຕ່ລະມື້ແຕ່ລະວັນ ຫຼື ໃນໄລຍະຕໍ່ໜ້າ. ໃນດ້ານອື່ນອາດຖືໄດ້ວ່າບົດນຳເປັນບົດສຳຄັນກວ່າໝູ່ໃນຈຳພວກບົດຂຽນຂອງວົງການສື່ມວນຊົນ ເພາະວ່າມັນຍົກໃຫ້ເຫັນທັດສະນະຫຼັກໝັ້ນຂອງພັກການເມືອງ ຫຼື ອົງການຈັດຕັ້ງມະຫາຊົນ ຊຶ່ງບັນດາອົງການສື່ມວນຊົນເປັນປາກກະບອກສຽງ (ເປັນຕົວແທນ) ຕໍ່ບັນຫາສຳຄັນໃດໜຶ່ງ.

### 2. ປະເພດຂອງບົດນຳ.

ບົດນຳມີບາງປະເພດ ດັ່ງນີ້:

#### ①. ບົດນຳຕາມກາລະ.

ເມື່ອການເວລາມີບັນຫາໃຫຍ່ເກີດຂຶ້ນ ຊຶ່ງຮຽກຮ້ອງໃຫ້ມີການແກ້ໄຂດ່ວນ, ມີຄວາມຈຳເປັນຕ້ອງສະແດງທັດສະນະທ່າທີ່ຂອງພັກ ແລະ ລັດຖະບານອອກມາໃຫ້ທັນການ ແລະ ຊັດເຈນເພື່ອໃຫ້ປະຊາຊົນຄິດຫງໍາໄປໃນທາງທີ່ມີຜົນດີ ແລະ ມີການປະຕິບັດປະຕິບັດຖືກຕ້ອງຕາມແນວທາງນະໂຍບາຍຂອງພັກ ແລະ ລະບຽບກົດໝາຍຂອງລັດ... ໃນບາງກໍລະນີ, ເມື່ອສະຖານະການສາກົນຜັນແປໄປສັບສົນທ້າທາຍ, ກ່ຽວຂ້ອງເຖິງປະເທດເຮົາ, ຈຳເປັນຕ້ອງສະແດງທັດສະນະທ່າທີທາງການຜ່ານສື່ມວນຊົນ, ໃນເວລານັ້ນມັກມີບົດນຳປະເພດນີ້ປະກົດຕົວ.

ບົດນຳຕາມກາລະເວລາຄວນມີຂໍ້ມູນຊັດເຈນ, ການວິເຄາະວິໄຈບັນຫາ, ການສະຫຼຸບບັນຫາໃຫ້ຮັດກຸມພ້ອມກັນນັ້ນກໍຄວນວາງໜ້າທີ່ທິດທາງສະເພາະໜ້າໃຫ້ຈະແຈ້ງ. ບົດນຳປະເພດນີ້ຕ້ອງໃຫ້ທັນການ ແລະ ຖືກຕ້ອງກັບເວລາທີ່ສຸດຖ້າຫາກວ່າອອກບົດນຳປະເພດນີ້ໄວໂພດ ຫຼື ຊ້າໂພດ ລ້ວນແຕ່ບໍ່ມີຄຸນປະໂຫຍດຕໍ່ແນວຄິດຂອງມະຫາຊົນ.

#### ②. ບົດນຳເພື່ອສະຫຼຸບສັງລວມ ແລະ ຖອດຖອນບົດຮຽນ

ບົດນຳປະເພດນີ້ມີຂຶ້ນເພື່ອສະຫຼຸບສັງລວມ ແລະ ຖອດຖອນບົດຮຽນໃນພາລະກິດປົກປັກຮັກສາ ແລະ ສ້າງສາປະເທດຊາດເຊັ່ນ: ໃນວຽກງານເສດຖະກິດ, ການຜະລິດ, ໃນວຽກງານລັດຖະການ ຫຼື ໃນວຽກງານວັດທະນະທຳ-ສັງຄົມ ເປັນຕົ້ນ.

ໃນພຶດຕິກຳປະຕິວັດ, ຢູ່ໃນຫຼາຍຂົງເຂດການເຄື່ອນໄຫວຂອງສັງຄົມໄດ້ປະກົດມີລວມໝູ່ທີ່ເປັນຕົວແບບ ແລະ ບຸກຄົນດີເດັ່ນ, ເກີດມີວິທີທຳມາຫາກິນທີ່ກ້າວໜ້າ, ມີບົດຮຽນໃນການຊີ້ນຳ-ນຳພາທີ່ມີປະສິດທິຜົນສູງ... ເກີດຂຶ້ນ. ປັດໄຈໃໝ່ເຫຼົ່ານັ້ນສະແດງເຖິງຄວາມມີຊີວິດຊີວາຂອງແນວທາງອັນຖືກຕ້ອງສ່ອງໃສຂອງພັກເຮົາທັງເປັນຈິງໃນຊີວິດສັງຄົມຂອງພວກເຮົາ ເຊິ່ງເປັນເງື່ອນໄຂສະດວກໃຫ້ແກ່ບັນດາອົງການສື່ມວນຊົນດຳເນີນການໂຄສະນາເຜີຍແຜ່ໄດ້ຮັບຜົນສູງ.

ສື່ມວນຊົນນຳໃຊ້ບົດນຳປະເພດນີ້ ເພື່ອປະກອບສ່ວນເຂົ້າໃນການຊີ້ນຳຂະບວນການຕ່າງໆ ໃຫ້ໄດ້ຮັບຜົນດີ, ເພາະວ່າມັນມີລັກສະນະສະຫຼຸບສັງລວມ ແລະ ຖອດຖອນບົດຮຽນໃນແຕ່ລະດ້ານ ພ້ອມກັນນັ້ນ ກໍວາງທິດທາງແກ້ໄຂລ່ວງໜ້າໃຫ້ແຕ່ລະຂົງເຂດຕົວຈິງ. ສົມມຸດວ່າພວກເຮົາຢາກຊຸກຍູ້ການຜະລິດໃນລະດູນາແຊງທັງຢາກສົ່ງເສີມໃຫ້ມີການຜະລິດເປັນສິນຄ້າຂາອອກ, ອາດຈະຂຽນບົດສຳພາດ, ຫົວເລື່ອງ “ບ້ານໜຶ່ງທີ່ເຮັດນາແຊງໄດ້ດີ ແລະ ມີສິນຄ້າສົ່ງອອກ”.

ບົດນຳ ເພື່ອສະຫຼຸບຖອດຖອນບົດຮຽນ ຢູ່ໃນຊີວິດການເປັນຢູ່ຄວນຍົກໃຫ້ເຫັນຄວາມຂັດແຍ່ງ ແລະ ວິທີແກ້ໄຂຂໍ້ຂັດແຍ່ງຢ່າງຈະແຈ້ງ, ໃຊ້ຂໍ້ມູນທີ່ຊັດເຈນ, ເວົ້າເຖິງບັນຫາຕົວຈິງ ແລະ ແຜ່ຫຼາຍເວົ້າເຖິງບົດຮຽນອັນດີ ແລະ ບົດຮຽນປະລາໄຊ ໃນການຈັດຕັ້ງປະຕິບັດຕົວຈິງ, ເວົ້າເຖິງແບບແຜນວິທີຊີ້ນຳ-ນຳພາ... ສຳຄັນແມ່ນໃຫ້ຮັບປະກັນລັກສະນະອັນແນ່ນອນໃນກົດເກນເຄື່ອນເໜັງພາວະວິໄສ.

### ③. ບົດນຳເພື່ອສະຫຼຸບສະພາບການ ແລະ ວິໄຈໂດຍສັງເຂບ.

ຂະບວນວິວັດແຫ່ງການເຄື່ອນໄຫວປະຕິວັດຂອງມະຫາຊົນ ແມ່ນຂະບວນວິວັດທີ່ມີການຫັນປ່ຽນຢ່າງເນື່ອງນິດລຽນຕິດຈາກຂອດນີ້ໄປສູ່ຂອດໃໝ່, ຈາກຍຸກນີ້ໄປສູ່ຍຸກໃໝ່ ເພື່ອເປັນການຊ່ວຍໜູນໃຫ້ແກ່ການເຄື່ອນເໜັງປະຕິວັດທີ່ນັບມື້ນັບຂະຫຍາຍຕົວນັ້ນ, ນອກຈາກວຽກງານຖະແຫຼງຂ່າວປຸກດົມແລ້ວສື່ມວນຊົນຄວນມີບົດນຳ ເພື່ອສະຫຼຸບໄປແຕ່ລະດ້ານຂອງສະພາບການຕົວຈິງໃນຂະບວນປະຕິວັດ ແລະ ມີການວິໄຈແບບສັງລວມ.

**ບົດນຳ** ເພື່ອສະຫຼຸບສະພາບການສັງລວມ ເອົາສະພາບການໃນຂົງເຂດການເຄື່ອນໄຫວທີ່ແນ່ນອນໃດໜຶ່ງໂດຍສັງເຂບ, ຍົກໃຫ້ເຫັນຂອດທີ່ເປັນຂໍກຸນແຈເພື່ອແກ້ສະຖານະການ ພ້ອມກັນນັ້ນ ກໍຕ້ອງວິໄຈແຍກສາເຫດທີ່ພາໃຫ້ເກີດບັນຫາ ແລະ ອະທິບາຍຜົນໄດ້ຮັບໃນລະດັບໃດລະດັບໜຶ່ງ. ຈາກນັ້ນ ຈຶ່ງຖອດຖອນເປັນບົດຮຽນທີ່ມີຄວາມໝາຍຕົວຈິງ ເພື່ອສືບຕໍ່ຊີ້ນຳຂະບວນການ, ນຳພາທາງສຽງຂອງມະຫາຊົນແນໃສ່ສູ້ຊົນໃຫ້ບັນລຸຜົນສຳເລັດໃໝ່ໃນຂັ້ນຕໍ່ໄປ. ບົດນຳປະເພດນີ້ອາດຈະໃສ່ຫົວຂໍ້ວ່າ: “ສ້າງຕົວແບບທີ່ດີໃຫ້ນັບມື້ນັບເພີ່ມຂຶ້ນ” ເນື້ອໃນຂອງບົດຈະໄດ້ສະເໜີຕົວແບບກ້າວໜ້າທີ່ພົ້ນເດັ່ນຂຶ້ນໃນຂະບວນການຂອງຂະແໜງການ, ອົງການຈັດຕັ້ງມະຫາຊົນ ແລະ ທ້ອງຖິ່ນຕ່າງໆຈະໄດ້ເວົ້າເຖິງຂອດຕົ້ນຕໍທີ່ພາໃຫ້ມີຕົວແບບທີ່ດີ, ໝາກຜົນຕົວຈິງໃນໄລຍະຜ່ານມາ, ເວົ້າເຖິງຄວາມໝາຍຄວາມສຳຄັນຂອງຂະບວນການແຂ່ງຂັນກັນ ເພື່ອໃຫ້ໄລ່ທັນ ແລະ ກາຍເປັນຕົວແບບອື່ນໆ, ແນໃສ່ພ້ອມກັນປະຕິບັດແຜນການທີ່ລັດວາງອອກໃຫ້ສຳເລັດຜົນເປັນຢ່າງດີ.

### ④. ບົດນຳເພື່ອຮຽກຮ້ອງ.

ບົດນຳເພື່ອຮຽກຮ້ອງຄວນປະກົດຕົວຂຶ້ນຜ່ານສື່ມວນຊົນໃນເມື່ອມີບັນຫາ (ຂໍ້ຂັດແຍ່ງ) ທີ່ເຫັນວ່າຈຳເປັນຕ້ອງໄດ້ສຸມໃສ່ເພື່ອແນ່ໃສ່ຊຸກຍູ້, ຊີ້ນຳການປະຕິວັດຂອງມະຫາຊົນໃຫ້ລວມສູນກວ່າເກົ່າ, ແຂງແຮງ ແລະ ມີບັນ ຍາກາດຟົດຟື້ນກວ່າເກົ່າ ເພື່ອໃຫ້ໄດ້ຮັບຜົນໃຫຍ່ຫຼວງກວ່າເກົ່າ ຫຼື ວ່າມີຄວາມຈຳເປັນຈະຕ້ອງໄດ້ບຸກບືນຜ່ານຜ່າຄວາມຫຍຸ້ງຍາກສະເພາະໜ້າ ເພື່ອບັນລຸເປົ້າໝາຍຕົວຈິງໃດໜຶ່ງ. ຫົວຂໍ້ບົດນຳປະເພດນີ້ອາດຕັ້ງຂຶ້ນວ່າ “ສ້າງຂະ ບວນການແຂ່ງຂັນຮັກຊາດໃນທົ່ວປະເທດ”, “ສົ່ງເສີມການຜະລິດເປັນສິນຄ້າ”...

ໃນບົດນຳເພື່ອຮຽກຮ້ອງນັ້ນເວລາເຂົ້າເລື່ອງ: ຄວນຍົກໃຫ້ເຫັນເຫດການໃດທີ່ເປັນບັນຫາຮີບດ່ວນ? ໃນເວລາດຳເນີນການຂຽນ (ເດີນເລື່ອງ): ຕົ້ນເຫດຂອງບັນຫາແມ່ນຫຍັງ? ບັນຫາໃດທີ່ຄວນໄດ້ຮັບການແກ້ໄຂດ່ວນ? ໃຜເປັນຜູ້ຮັບຜິດຊອບ? ບົດຮຽນທີ່ນຳມາເຜີຍແຜ່ມີຫຍັງແດ່? ແງ່ຂະຫຍາຍຂອງສະຖານະການຈະເປັນແນວໃດ? (ຕອນຮຽກຮ້ອງ) ທິດທາງຈະຕ້ອງແກ້ໄຂມີຫຍັງແດ່? ຕ້ອງມີສ່ວນຮ່ວມຂອງພາກສ່ວນໃດ?.

ບົດນຳ ທີ່ນຳໃຊ້ເພື່ອຮຽກຮ້ອງເປັນປະເພດບົດທີ່ສຳຄັນ ເພື່ອຊີ້ນຳວຽກງານໃນແຕ່ລະມື້ແຕ່ລະວັນ. ເຖິງວ່າບົດນຳປະເພດນີ້ມີລັກສະນະປຸກລະດົມສິ່ງເສີມ, ຊຸກຍູ້ໃຫ້ມີການກະທຳປະຕິວັດກໍຕາມ, ແຕ່ບໍ່ອະນຸຍາດໃຫ້ຜູ້ຂຽນນຳໃຊ້ສັບ ຫຼື ສຳນວນຮຽກຮ້ອງແບບລວມໆ. ຍິ່ງໄປກວ່ານັ້ນຈະຕ້ອງຕັ້ງບັນຫາ, ໄຈ້ແຍກບັນຫາບົນພື້ນຖານຫຼັກທິດສະດີມາກ-ເລນິນ ແລະ ແນວທາງຂອງພັກ-ລັດ, ຕິດພັນກັບຄວາມເປັນຈິງຂອງແຕ່ລະຂົງເຂດ ແລະ ຂອງແຕ່ລະເຫດການຂອງບົດນຳເວົ້າເຖິງ.

### ໕. ບົດນຳທີ່ນຳໃຊ້ທິດສະດີ.

ບົດນຳປະເພດນີ້ ຕົ້ນຕໍແມ່ນໂຄສະນາໃຫ້ແກ່ທິດສະດີມາກ-ເລນິນ ຫຼື ສະເໜີແຜນນະໂຍບາຍໃຫຍ່ຂອງພັກ ແລະ ລັດເຊັ່ນ: ໂຄສະນາກ່ຽວກັບທິດສະດີໃດໜຶ່ງທີ່ພວມຕັ້ງເປັນບັນຫາ ຫຼື ໂຄສະນາກ່ຽວກັບແຜນນະໂຍບາຍທີ່ສຳຄັນໂດຍໃຊ້ຫຼັກທິດສະດີມາອະທິບາຍ ແລະ ໃຫ້ຄຳຕອບທີ່ຖືກຕ້ອງ ແລະ ຊັດເຈນ.

ໂດຍທົ່ວໄປແລ້ວ ບົດນຳປະເພດໃດກໍມີລັກສະນະທິດສະດີທັງນັ້ນແຕ່ບົດນຳປະເພດນີ້ຕ້ອງມີລັກສະນະເລິກເຊິ່ງກວ່າ, ບັນຫາໄດ້ຮັບການວິໄຈລວມສູນກວ່າ, ການຍົກເຫດຍົກຜົນທີ່ຮັດກຸມກວ່າ. ດັ່ງນັ້ນ, ບົດນຳປະເພດນີ້ຈຶ່ງຄ້າຍຄືກັບບົດທິດສະດີເພື່ອພິສູດຢັ້ງຢືນກ່ຽວກັບບັນຫາໃດໜຶ່ງ.

## II. ຄວາມສຳຄັນ ແລະ ບົດບາດຂອງບົດນຳ.

ບົດນຳ ເປັນທັດສະນະຄວາມຄິດຂອງໜັງສືພິມແຕ່ລະສະບັບຕໍ່ເຫດການ ຫຼື ເລື່ອງລາວທີ່ເກີດຂຶ້ນ. ຈຸດເດັ່ນຂອງບົດນຳຄື: ຄວາມຄິດເຫັນຂອງບັນນາທິການສະແດງອອກຢ່າງອິດສະຫຼະກ່ຽວກັບຂ່າວ ຫຼື ເຫດການປັດຈຸບັນ ໂດຍຜ່ານການສຶກສາຂໍ້ມູນຢ່າງຮອບຄອບຍຸຕິທຳມີແນວຄິດຊີ້ນຳ ຫຼື ຫາທາງອອກທີ່ດີທີ່ສຸດໃນການວິນິດໄສແກ້ບັນຫາຢ່າງເປັນກາງ. ຄວາມສຳຄັນຂອງບົດນຳຢູ່ທີ່ການສະທ້ອນເຖິງນະໂຍບາຍ ແລະ ຈຸດຢືນຂອງໜັງສືພິມຕໍ່ເຫດການນັ້ນໆ ສ່ວນບົດບາດ ແລະ ໜ້າທີ່ຂອງບົດນຳແມ່ນມີບົດບາດຢ່າງຫຼວງຫຼາຍ ໃນຖານະເປັນຜູ້**ກະຕຸ້ນ**ໃຫ້ເກີດຄວາມຄິດທາງປັນຍາໃນກຸ່ມຜູ້ອ່ານໂດຍສະເໜີຂໍ້ເທັດຈິງໃນຫຼາຍໆດ້ານ ເພື່ອປະກອບການຕັດສິນໃຈໃນສິ່ງທີ່ກ່ຽວຂ້ອງ. ສະຫຼຸບໄດ້ວ່າບົດບາດ ແລະ ໜ້າທີ່ຂອງບົດນຳຄວນເປັນ ດັ່ງນີ້:

1. ແຫຼ່ງສະແດງຄວາມຄິດເຫັນສະທ້ອນນະໂຍບາຍ ແລະ ຈຸດຢືນຂອງໜັງສືພິມສະບັບນັ້ນ.
2. ສະແດງອອກເຊິ່ງຄວາມເປັນເອກະພາບກັບແນວທາງນະໂຍບາຍຂອງພັກ-ລັດ ແລະ ຕົ້ນສັງກັດຢູ່, ທັງເປັນຜູ້ນຳທາງຄວາມຄິດທັງເປັນແຫຼ່ງສະສົມທາງປັນຍາໃຫ້ແກ່ສັງຄົມ.

## III. ຜູ້ຮັບຜິດຊອບບົດນຳ.

**1. ໂດຍປົກກະຕິ ບ.ກ:** ຈະເປັນຜູ້ຂຽນບົດນຳ ແຕ່ບາງໂອກາດອາດມອບໃຫ້ບຸກຄົນອື່ນທີ່ມີຄວາມຮູ້ກ່ຽວກັບເລື່ອງນັ້ນ ໄປຂຽນແຕ່ຢ່າງໃດກໍຕາມຜູ້ຂຽນຈະຕ້ອງມີຄວາມເຂົ້າໃຈເລື່ອງລາວ ແລະ ມີຄຸນສົມບັດປະຈຳຕົວຄື:

- ມີຄວາມຮູ້, ຄວາມສາມາດກຳແໜ້ນແນວທາງນະໂຍບາຍຂອງພັກ-ລັດ ແລະ ລະບຽບກົດໝາຍຕ່າງໆມີຖານະເປັນບັນນາທິການ ຫຼື ຫົວໜ້າພະແນກການຂອງສຳນັກສື່ມວນຊົນດັ່ງກ່າວ.

- ສະແດງຄວາມເປັນກາງໃນການເບິ່ງບັນຫາໂດຍການພິຈາລະນາເຫດຜົນ ແລະ ຫຼັກຖານທີ່ມີຢູ່ຢ່າງຮອບຄອບ.

- ບໍ່ມີຜົນປະໂຫຍດແອບແຝງໃນເລື່ອງຂຽນ, ສາມາດສະເໜີຂໍ້ເທັດຈິງຢ່າງກົງໄປກົງມາ.

- ຕ້ອງເຂົ້າໃຈວ່າທຸກຄົນມີໂອກາດຜິດພາດໄດ້ ຈຶ່ງຄວນໃຫ້ໂອກາດໃນການສະແດງຄວາມຄິດເຫັນຕໍ່ບັນຫາຕ່າງໆທີ່ເກີດຂຶ້ນ.

- ໃຫ້ຄວາມເຄົາລົບຕໍ່ຄວາມຄິດເຫັນຂອງຄົນອື່ນໃນກໍລະນີທີ່ບໍ່ເຫັນດ້ວຍ.

- ມີຄວາມເຊື່ອໝັ້ນ ແລະ ສັດທາໃນການສະແດງອອກຢ່າງຊື່ກົງ.

### 2. ຜູ້ຂຽນບົດນຳຕ້ອງມີພອນສະຫວັນບາງຢ່າງ:

- ຂຽນບົດໄດ້ໄວ.

- ສາມາດວິເຄາະຊີ້ນຳ.

- ຮູ້ຈັກພົບປະໂອ້ລົມກັບຜູ້ມີຄວາມຮູ້ ແລະ ນັກວິຊາການ.

- ຮູ້ຈັກສຶກສາບັນຫາ.

- ຮູ້ຈັກຈິດຕະວິທະຍາສັງຄົມ ແລະ ຈິດຕະວິທະຍາການສື່ສານ.

- ຮູ້ຈັກໃຊ້ພາສາຖ່າຍທອດຄວາມຄິດຢ່າງເປັນລະບົບ ແລະ ເຂົ້າໃຈງ່າຍ.

- ຮູ້ຈັກໃຊ້ອາລົມຊ່ວຍໃຫ້ຜ່ອນຄາຍຄວາມຄຽດ ແລະ ເບິ່ງບັນຫາໄດ້ກວ້າງຂຶ້ນ.

## IV. ຂັ້ນຕອນກະກຽມ.

ການທີ່ຈະຂຽນບົດນຳຕ້ອງກະກຽມຂັ້ນຕອນເພື່ອເຮັດໃຫ້ບົດຂຽນໜ້າເຊື່ອຖືຫຼາຍຂຶ້ນຄື:
ການປະຊຸມກອງບັນນາທິການ.
ການຮອບຮອມຂໍ້ມູນ.
ການວິເຄາະຮຽບຮຽງຂໍ້ມູນ.
ການຂຽນ.

## V. ໂຄງສ້າງການຂຽນບົດນຳ.

ໂຄງສ້າງການຂຽນບົດນຳ ບໍ່ສາມາດກຳນົດຮູບແບບໄດ້ຢ່າງເດັ່ນຊັດເທົ່າກັບໂຄງສ້າງຂອງຂ່າວກໍຕາມ ແຕ່ການຂຽນບົດນຳມີລັກສະນະຄ້າຍຄືກັບການຂຽນບົດຄວາມທົ່ວໄປຄື: ພາກໄຂຫົວເລື່ອງ ເດີນເລື່ອງ ແລະ ພາກສະຫຼຸບ ແຕ່ບົດນຳພັດປະກອບດ້ວຍສ່ວນສຳຄັນ 3 ສ່ວນ ໄດ້ແກ່ຄວາມນຳ, ເນື້ອຫາ ແລະ ສະຫຼຸບ.

① **ຫົວເລື່ອງ:** ເປັນສ່ວນທີ່ບອກໃຫ້ຜູ້ອ່ານຊາບວ່າເລື່ອງທີ່ກຳລັງສະເໜີຕໍ່ຜູ້ອ່ານນັ້ນກ່ຽວກັບບັນຫາຫຍັງ, ສາມາດຂຽນໄດ້ຫຼາຍແບບເຊັ່ນ: ແບບຕັ້ງຄຳຖາມ, ແບບບອກເລົ່າ, ແບບສະຫຼຸບຄວາມ ເປັນຕົ້ນ (ພາກໄຂຫົວເລື່ອງ).

② **ຄວາມນຳ:** ຄືເປັນສ່ວນທີ່ຜູ້ຂຽນສະຫຼຸບເຫດການເລື່ອງລາວທີ່ເປັນຂ່າວທັງໝົດໃຫ້ຜູ້ອ່ານໄດ້ຊາບຄວາມເປັນມາຂອງເລື່ອງທີ່ຈະຂຽນກ່ອນທີ່ຈະສະແດງຄວາມຄິດເຫັນກ່ຽວກັບເລື່ອງນັ້ນໆ ໃນຫຍໍ້ໜ້າຕໍ່ໆໄປ (ກ່ອນຈະເຂົ້າສູ່ເດີນເລື່ອງ).

③ **ເດີນເລື່ອງ:** ຫຼືສ່ວນຄວາມຄິດເຫັນຂອງໜັງສືພິມວ່າມີທັດສະນະແນວໃດຕໍ່ປະເດັນຂ່າວ ຫຼື ເຫດການນັ້ນໆ.

④ **ສະຫຼຸບ:** ອາດຈະລົງທ້າຍເປັນຂໍ້ສະຫຼຸບທີ່ໜັກແໜ້ນ ແລະ ຊັດເຈນເຊິ່ງອາດມີຄວາມຍາວພຽງປະໂຫຍກດຽວກໍໄດ້. ບົດນຳຖືວ່າເປັນບົດຄວາມຊະນິດໜຶ່ງ ແຕ່ຈະມີຄວາມແຕກຕ່າງກັນທີ່ບົດນຳບໍ່ຕ້ອງໃສ່ຊື່ຜູ້ຂຽນເພາະຖືວ່າເປັນບົດຂຽນຂອງໜັງສືພິມສະບັບນັ້ນ. ຄວາມຄິດໃດໆທີ່ສະແດງອອກທາງບົດນຳຂອງ **ບ.ກ** ຈະເປັນຜູ້ຮັບຜິດຊອບທັງໝົດ. ດັ່ງນັ້ນ, ບົດນຳຈຶ່ງມີລັກສະນະພິເສດກວ່າບົດຄວາມທົ່ວໄປຄື: ຕ້ອງກຳແໜ້ນແນວທາງນະ

ໂຍບາຍຂອງພັກ-ລັດ ແລະ ມະຕິຕ່າງໆ ກໍຄື ກົດໝາຍກ່ຽວກັບບັນຫາທີ່ປິ່ນອ້ອມບົດຂຽນໃນພາສາສຸພາບ, ສະແດງຄວາມໜັກແໜ້ນຢືນຢັນໃນສິ່ງທີ່ເວົ້າເຖິງ, ມີລະບົບຖ່າຍທອດຄວາມຄິດທີ່ສາມາດໃຫ້ຜູ້ອ່ານຕິດຕາມເຂົ້າໃຈເລື່ອງນັ້ນຢ່າງເລິກເຊິ່ງ.

ຕົວຢ່າງ: ບົດນຳຮຽກຮ້ອງ. ບົດນີ້ຢູ່ຕົວຢ່າງຂອງການຂຽນບົດນຳ ໃນເອກະສານ "ລົງເລິກການຂຽນບົດນຳ-ບົດຄວາມ, ບົດວິຈານ". ຂຽນ, ຄົ້ນຄວ້າຮຽບຮຽງໂດຍ: ທ່ານ ຄຳວິສັນ ແກ້ວສຸວັນ ພິມປີ 2017 (ໜ້າ 8-10).

<u>**ຫົວຂໍ້:**</u>

**ຂໍ່ານັບຊົມເຊີຍກອງປະຊຸມໃຫຍ່ຜູ້ແທນ**
**ທົ່ວປະເທດຄັ້ງທີ X ຂອງພັກປະຊາຊົນປະຕິວັດລາວ ຢ່າງສຸດໃຈ.**

ມື້ນີ້ (18 ມັງກອນ 2016), ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດຄັ້ງທີ X ຂອງພັກປະຊາຊົນປະຕິວັດລາວ ທີ່ມີກຽດສະຫງ່າໄດ້ໄຂຂຶ້ນຢ່າງເປັນທາງການຢູ່ຫໍປະຊຸມແຫ່ງຊາດ ທີ່ນະຄອນຫຼວງວຽງຈັນ, ເຂົ້າຮ່ວມກອງປະຊຸມມີ ສະຫາຍ ຈູມມາລີ ໄຊຍະສອນ ເລຂາທິການໃຫຍ່, ປະທານປະເທດ, ບັນດາສະຫາຍກຳມະການກົມການເມືອງ, ຄະນະເລຂາທິການ ແລະ ກຳມະການສູນກາງພັກສະໄໝທີ IX ຮ່ວມກັບຜູ້ແທນສົມບູນຈາກຂະແໜງການ, ອົງການອ້ອມຂ້າງສູນກາງ ແລະ ທ້ອງຖິ່ນທົ່ວປະເທດ ຈຳນວນ 684 ສະຫາຍ, ຍິງ 82 ສະຫາຍ, ທີ່ຕາງໜ້າໃຫ້ສະມາຊິກພັກທັງໝົດ 2 ແສນກວ່າສະຫາຍໃນທົ່ວປະເທດ.

ພ້ອມນັ້ນຍັງມີສະຫາຍ ພົນເອກ ຄຳໄຕ ສີພັນດອນ ອະດີດປະທານພັກ, ປະທານປະເທດ, ສະຫາຍ ພົນໂທ ສະໝານ ວິຍະເກດ ອະດີດກຳມະການກົມການເມືອງ, ປະທານສະພາແຫ່ງຊາດ ແລະ ພົນເອກ ສີສະຫວາດ ແກ້ວບຸນພັນ ອະດີດປະທານສູນກາງແນວລາວສ້າງຊາດ ພ້ອມແຂກຜູ້ມີກຽດຈາກຂະແໜງການ, ອົງການ ແລະ ທ້ອງຖິ່ນທົ່ວປະເທດ ຈຳນວນ 400 ກວ່າສະຫາຍ, ຍິງ 60 ກວ່າສະຫາຍ.

ກອງປະຊຸມຜູ້ແທນທົ່ວປະເທດຄັ້ງທີ X ຂອງພັກເຮົາ ແມ່ນເຫດການປະຫວັດສາດທີ່ມີຄວາມໝາຍສຳຄັນເປັນພິເສດໃນຊີວິດການເມືອງຂອງພັກ, ຂອງຊາດ ແລະ ປະຊາຊົນລາວບັນດາເຜົ່າ, ແມ່ນຂີດໝາຍແຫ່ງການເຕີບໃຫຍ່ຂະຫຍາຍຕົວສູ່ປະລິມານ ແລະ ຄຸນນະພາບໃໝ່ຂອງພັກເຮົາ. ກອງປະຊຸມໄດ້ໄຂຂຶ້ນໃນທ່າມກາງບັນຍາກາດແຫ່ງຄວາມເບີກບານມ່ວນຊື່ນທີ່ທົ່ວພັກ, ທົ່ວລັດ, ກຳລັງປະກອບອາວຸດ ແລະ ປະຊາຊົນລາວບັນດາເຜົ່າຫາກໍສຳເລັດການສະເຫຼີມສະຫຼອງວັນສ້າງຕັ້ງພັກປະຊາຊົນປະຕິວັດລາວ ຄົບຮອບ 60 ປີ, ວັນຊາດທີ 2 ທັນວາຄົບຮອບ 40 ປີ ແລະ ວັນເກີດຂອງປະທານ ໄກສອນ ພົມວິຫານ ຜູ້ນຳທີ່ເຄົາລົບຮັກຂອງປະຊາຊົນເຮົາ ຄົບຮອບ 95 ປີ ຊຶ່ງແມ່ນໄລຍະເວລາທີ່ປະເທດຊາດຂອງພວກເຮົາ ໄດ້ຮັບການພັດທະນາທີ່ບໍ່ເຄີຍມີມາກ່ອນໃນປະຫວັດ ສາດຂອງຊາດເຮົາ ດັ່ງສະຫາຍ ຈູມມະລີ ໄຊຍະສອນ ເລຂາທິການໃຫຍ່, ປະທານປະເທດ ໄດ້ກ່າວໃນໂອກາດສະ ຫຼອງວັນຊາດທີ 2 ທັນວາ ຄົບຮອບ 40 ປີ ວ່າ: <u>**"ບໍ່ມີຍຸກໃດສະໄໝໃດທີ່ປະເທດຊາດອັນແສນຮັກຂອງພວກເຮົາໄດ້ມີຄວາມຮົ່ມເຢັນເປັນສຸກ, ໄດ້ຮັບການພັດທະນາຈະເລີນກ້າວໜ້າ ແລະ ຖານະບົດບາດຂອງປະເທດເຮົາ ໄດ້ນັບມື້ນັບສູງເດັ່ນຂຶ້ນໃນເວທີພາກພື້ນ ແລະ ສາກົນຄືສູ່ມື້ນີ້"**</u>.

ພາຍໃຕ້ການນຳພາຂອງພັກ ປະເທດຊາດຂອງພວກເຮົາໄດ້ມີເອກະລາດ, ອຳນາດອະທິປະໄຕ, ປະຊາຊົນເຮົາໄດ້ມີອິດສະລະພາບ ແລະ ເປັນເຈົ້າຂອງປະເທດຊາດຢ່າງແທ້ຈິງ, ພາຍໃນຊາດມີຄວາມສາມັກຄີເປັນປຶກແຜ່ນແໜ້ນແກ່ນ, ສັງຄົມມີຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍໂດຍພື້ນຖານ, ພື້ນຖານເສດຖະກິດແຫ່ງຊາດມີການຂະຫຍາຍຕົວຢ່າງເປັນລະບົບຄົບຊຸດ, ຍອດມູນຄ່າຜະລິດຕະພັນພາຍໃນ ເພີ່ມຂຶ້ນຢ່າງຕໍ່ເນື່ອງ, ລາຍຮັບສະເລ່ຍໃສ່ຫົວຄົນໃນປີ 2015 ບັນລຸໄດ້ 1.970 ໂດລາສະຫະລັດ, ລື່ນປີ 1985 ເຖິງ 16 ເທົ່າກວ່າ, ຄອບຄົວທຸກຍາກຫຼຸດລົງຍັງເຫຼືອພຽງ 6,59%, ອັດຕາຊົມໃຊ້ໄຟຟ້າໃນຄົວເຮືອນຂອງປະຊາຊົນໃນທົ່ວປະເທດກວມເອົາ 89%, ບັນດາເມືອງໃນທົ່ວປະເທດນຳໃຊ້ໂທລະສັບ 100%, ມີເສັ້ນທາງລົດທັງໝົດ 51.597 Km ແລະ ທຸກເມືອງມີເສັ້ນທາງລົດໄປໄດ້ສອງລະດູ. ພິເສດຜົນສຳເລັດທີ່ບໍ່ເຄີຍມີໃນປະຫວັດສາດຂອງຊາດລາວ ແມ່ນພວກເຮົາໄດ້ສຳເລັດການສົ່ງດາວທຽມສື່ສານດວງທຳອິດຂຶ້ນສູງວົງໂຄຈອນ ແລະ ໄດ້ສຳເລັດການວາງສີລາລຶກໂຄງການກໍ່ສ້າງທາງລົດໄຟ ລາວ-ຈີນ ໃນໂອກາດສະເຫຼີມສະຫຼອງວັນຊາດທີ 2 ທັນວາ ຄົບຮອບ 40 ປີຜ່ານມາ.

ໄປຄຽງຄູ່ກັບການຂະຫຍາຍເສດຖະກິດນັ້ນ, ພັກ ແລະ ລັດ ຍາມໃດກໍຖືສຳຄັນຕໍ່ການພັດທະນາວັດທະນະທຳ-ສັງຄົມ ໂດຍໄດ້ເອົາໃຈໃສ່ຢ່າງຈິດຈໍ່ຕໍ່ການພັດທະນາຊັບພະຍາກອນມະນຸດ, ຊຸກຍູ້ສົ່ງເສີມການສຶກສາແຫ່ງຊາດໃຫ້ຂະຫຍາຍຕົວ, ຕາມທິດທີ່ມີລັກສະນະຊາດ, ວິທະຍາສາດ ແລະ ມະຫາຊົນ. ການປະຕິຮູບການສຶກສາທີ່ຖືເອົາຄຸນນະພາບເປັນຕົ້ນຕໍໄດ້ມີຄວາມຄືບໜ້າໄວສົມຄວນ. ມາຮອດປີ 2015 ສປປ ລາວ ໄດ້ປະກາດຈົບຊັ້ນປະຖົມບຳລຸງທົ່ວປະເທດ ແລະ ຫຼາຍແຂວງກໍໄດ້ປະກາດ ແລະ ກຽມປະກາດເປັນແຂວງຈົບມັດທະຍົມຕົ້ນຢ່າງເປັນຂະບວນ. ຕາໜ່າງບໍລິການດ້ານສາທາລະນະສຸກທັງຂອງລັດ ແລະ ສັງຄົມໄດ້ຂະຫຍາຍກວ້າງອອກໄປສູ່ຮາກຖານ, ບ້ານແບບຢ່າງດ້ານສາທາລະນະສຸກກໍເພີ່ມຂຶ້ນ, ອັດຕາການຕາຍຂອງແມ່ ແລະ ເດັກຫຼຸດລົງຫຼາຍ, ອາຍຸຍືນສະເລ່ຍຂອງຄົນລາວກໍໄດ້ເພີ່ມຂຶ້ນ, ວຽກງານຖະແຫຼ່ງຂ່າວສື່ມວນຊົນທັງພາກລັດ ແລະ ສັງຄົມໄດ້ຮັບການຂະຫຍາຍຕົວທັງປະລິມານ ແລະ ຄຸນນະພາບກ້າວສູ່ຄວາມທັນສະໄໝ ເພື່ອການເຊື່ອມໂຍງ, ຄຽງຄູ່ກັນນັ້ນ ມູນມໍລະດົກວັດທະນະທຳອັນດີງາມຂອງຊາດໄດ້ຮັບການອະນຸລັກຮັກສາ ແລະ ສືບທອດເສີມຂະຫຍາຍໃຫ້ອຸດົມຮັ່ງມີໄປພ້ອມກັບການສ້າງແບບແຜນດຳລົງຊີວິດທີ່ສົດໃສກ້າວໜ້າ, ການກິລາ ແລະ ທ່ອງທ່ຽວໄດ້ຮັບການພັດທະນາ, ວຽກງານສະຫວັດດີການສັງຄົມໄດ້ຮັບຄວາມເອົາໃຈໃສ່ຫຼາຍຂຶ້ນ, ຄອບຄົວ ແລະ ຜູ້ທີ່ເສຍສະລະຊີວິດ, ເສຍອົງຄະທີ່ມີຜົນງານຕໍ່ປະເທດໄດ້ຮັບການເບິ່ງແຍງດູແລ, ການປະຕິບັດນະໂຍບາຍຕອບບຸນແທນຄຸນໄດ້ຮັບການປະຕິບັດເປັນຢ່າງດີ, ຄວາມຍຸຕິທຳທາງສັງຄົມນັບມື້ນັບດີຂຶ້ນ.

ໃນດ້ານວຽກງານພັກ ແລະ ປັບປຸງການຈັດຕັ້ງ ນັບແຕ່ມື້ສ້າງຕັ້ງພັກປະຊາຊົນປະຕິວັດລາວ ກໍຄື ພັກປະຊາຊົນລາວ ໃນວັນທີ 22 ມີນາ 1955 ມາຮອດປັດຈຸບັນ, ພັກເຮົາໄດ້ເຕີບໃຫຍ່ຂະຫຍາຍຕົວທັງດ້ານປະລິມານ, ຄຸນນະພາບ ແລະ ໄດ້ດຳເນີນກອງປະຊຸມໃຫຍ່ຂອງຕົນມາໄດ້ແລ້ວ 9 ຄັ້ງ ນັບທັງສະມາຊິກພັກໄດ້ເພີ່ມຂຶ້ນຢ່າງຕໍ່ເນື່ອງຈາກ 400 ສະຫາຍ ໃນປີ 1955 ມາເປັນ 2 ແສນກວ່າສະຫາຍ ໃນປີ 2015.

ທັງໝົດນັ້ນແມ່ນຜົນງານ ແລະ ໄຊຊະນະທີ່ຍາດມາໄດ້ພາຍໃຕ້ການຊີ້ນຳ ແລະ ນຳພາຂອງພັກປະຊາຊົນປະຕິວັດລາວ ໃນພາລະກິດປົກປັກຮັກສາ ແລະ ສ້າງສາປະເທດຊາດ ໂດຍສະເພາະ ໃນໄລຍະດຳເນີນພາລະກິດປ່ຽນແປງໃໝ່ ເປັນຕົ້ນມາ ຊຶ່ງແມ່ນປະທານ ໄກສອນ ພົມວິຫານ ເປັນຜູ້ນຳພາລິເລີ່ມ.

ສັງລວມແລ້ວ ກອງປະຊຸມໃຫຍ່ຂອງພັກແຕ່ລະຄັ້ງ ລ້ວນແລ້ວແຕ່ເປັນເຫດການອັນສຳຄັນຍິ່ງ ໃນຊີວິດການເມືອງ-ສັງຄົມຂອງປເທດເຮົາ ເພາະວ່າ ກອງປະຊຸມໃຫຍ່ແມ່ນອົງການນຳສູງສຸດຂອງພັກທີ່ຕົກລົງຮັບຮອງເອົາ

ແນວທາງການເມືອງ ແລະ ແນວທາງການຈັດຕັ້ງທີ່ເປັນຍຸດທະສາດຂອງການປະຕິວັດ ເພື່ອນຳພາປະເທດຊາດກ້າວສູ່ຄວາມມັ່ງຄັ່ງເຂັ້ມແຂງ, ນຳເອົາຄວາມຮັ່ງມີຜາສຸກມາສູ່ປະຊາຊົນ.

ຕະຫຼອດວາລະດຳເນີນກອງປະຊຸມ ທັງ 5 ວັນ (18-22 ມັງກອນ 2016) ຜູ້ແທນສົມບູນຈະໄດ້ຄົ້ນຄວ້າ ແລະ ຮັບຮອງເອົາລາຍງານການເມືອງຂອງຄະນະບໍລິຫານງານສູນກາງພັກ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີຄັ້ງທີ VIII ສຳລັບໄລຍະ 2016-2020 ດ້ວຍການສູ້ຊົນນຳເອົາປະເທດຊາດເຮົາຫຼຸດພົ້ນອອກຈາກຄວາມດ້ອຍພັດທະນາ ໃນປີ 2020, ໃນນັ້ນ ສູ້ຊົນເຮັດໃຫ້ລວມຍອດມູນຄ່າຜະລິດຕະພັນພາຍໃນ (GDP) ຂະຫຍາຍຕົວສະເລ່ຍບໍ່ໃຫ້ຫຼຸດ 7,5% ຕໍ່ປີ, ສ້າງໂຄງປະກອບເສດຖະກິດທີ່ມີຄວາມສົມສ່ວນ, ແທດກັບເງື່ອນໄຂຂອງບໍລິເວນເຂດແຄວ້ນຕ່າງໆ, ແກ້ໄຂຄອບຄົວທຸກຍາກໃນທົ່ວປະເທດໃຫ້ໄດ້ຢ່າງສົມບູນ ແນໃສ່ສ້າງປະເທດເຮົາໃຫ້ມີພື້ນຖານໂຄງການເສດຖະກິດ-ເຕັກນິກ, ວັດທະນະທຳ, ວິທະຍາສາດ ແລະ ບຸກຄະລາກອນ ເພື່ອຮັບຮອງການຫັນເປັນອຸດສາຫະກຳ ແລະ ທັນສະໄໝ.

ກອງປະຊຸມຍັງຈະໄດ້ຮັບຮອງເອົາກົດລະບຽບຂອງພັກສະບັບປັບປຸງ ແລະ ດຳເນີນການເລືອກຕັ້ງເອົາຄະນະບໍລິຫານງານສູນກາງພັກທີ່ມີມາດຖານຄົບຖ້ວນທີ່ປະກອບໄປດ້ວຍຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ, ແບບແຜນດຳລົງຊີວິດ ແລະ ປະກອບມີທັງລຸ້ນອາວຸໂສ, ກາງ ແລະ ໜຸ່ມ ເພື່ອສືບຕໍ່ນຳພາ ພາລະກິດປະຕິວັດປະເທດເຮົາໃຫ້ກ້າວຂຶ້ນຢ່າງຕໍ່ເນື່ອງໜັກແໜ້ນສູ່ຈຸດໝາຍທີ່ວາງໄວ້ດ້ວຍຈິດໃຈບຸກທະລຸຄື: “ຍົກສູງຄວາມສາມາດນຳພາ ແລະ ລັກສະນະນຳໜ້າຂອງພັກ, ເພີ່ມທະວີມະຫາສາມັກຄີທົ່ວປວງຊົນທັງຊາດ, ຢຶດໝັ້ນແນວທາງປ່ຽນແປງໃໝ່ຮອບດ້ານທີ່ມີຫຼັກການ, ປົກປັກຮັກສາ ແລະ ພັດທະນາປະເທດຊາດຕາມທິດຍືນຍົງ, ສືຂຽວສູ່ຈຸດໝາຍສັງຄົມນິຍົມ”. ທັງໝົດນີ້ແມ່ນໜ້າທີ່ສຳຄັນທີ່ກອງປະຊຸມໃຫຍ່ຂອງພັກເຮົາຄັ້ງນີ້ ຕ້ອງປະຕິບັດດ້ວຍຄວາມຮັບຜິດຊອບສູງ ແລະ ຕ້ອງປະຕິບັດໃຫ້ມີຜົນສຳເລັດອັນຈົບງາມ ເພື່ອການເຕີບໃຫຍ່ເຂັ້ມແຂງຂອງພັກ ແລະ ການຂະຫຍາຍຕົວຂອງປະເທດຊາດ. ສະນັ້ນ, ຜູ້ແທນກອງປະຊຸມໃຫຍ່ທຸກສະຫາຍຕ້ອງໄດ້ເຊີດຊູຄວາມເປັນເຈົ້າການ ແລະ ຄວາມຮັບຜິດຊອບໃນລະດັບສູງ, ສຸມສະຕິປັນຍາ ແລະ ປະສົບການເຂົ້າໃສ່ການຄົ້ນຄວ້າ-ຕົກລົງບັນຫາສຳຄັນໃຫ້ເລິກເຊິ່ງຖືກຕ້ອງ, ປະກອບສ່ວນເຮັດໃຫ້ກອງປະຊຸມໃຫຍ່ນີ້ດຳເນີນໄປດ້ວຍຄວາມສາມັກຄີ ເປັນເອກະພາບອັນໜັກແໜ້ນ ແລະ ມີຜົນສຳເລັດຢ່າງຈົບງາມ.

ທົ່ວພັກ, ທົ່ວລັດ, ທົ່ວກຳລັງປະກອບອາວຸດ ແລະ ທົ່ວປວງຊົນລາວທັງຊາດພວມອ່ວຍໜ້າເຂົ້າຫາກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດຄັ້ງທີ X ຂອງພັກປະຊາຊົນປະຕິວັດລາວ ດ້ວຍຄວາມເປັນເຈົ້າການຕິດຕາມຜົນການເຄື່ອນໄຫວຂອງກອງປະຊຸມໃຫຍ່ຢ່າງຈົດຈໍ່ ແລະ ສຸດກົກສຸດປາຍ, ພ້ອມທັງສະແດງຄວາມຂໍ່ານັບຊົມເຊີຍ ແລະ ອວຍພອນໃຫ້ກອງປະຊຸມໃຫຍ່ຄັ້ງທີ X ຂອງພັກ ຈົ່ງດຳເນີນໄປດ້ວຍຜົນສຳເລັດຕາມຈຸດປະສົງ ແລະ ລະດັບຄາດໝາຍທີ່ວາງໄວ້ທຸກປະການ ແນໃສ່ເຮັດໃຫ້ປະຊາຊົນຮັ່ງມີຜາສຸກ, ປະເທດຊາດມັ່ງຄັ່ງເຂັ້ມແຂງ, ສັງຄົມສາມັກຄີປອງດອງ, ປະຊາທິປະໄຕ, ຍຸຕິທຳ ແລະ ສີວິໄລ.

ຂໍ່ານັບຊົມເຊີຍກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດຄັ້ງທີ X ຂອງພັກປະຊາຊົນປະຕິວັດລາວ ຢ່າງສຸດໃຈ !.

ຕົວຢ່າງ: ບົດນຳຕາມກາລະ (ປີໃໝ່ລາວ), ລົງໃນໜັງສືພິມ ວຽງຈັນໃໝ່ ສະບັບວັນທີ 13 ເມສາ 2018.

## ອວຍພອນໃຫ້ປີໃໝ່ 2561
## ເປັນປີທີ່ເຕັມໄປດ້ວຍຜົນງານ ແລະ ໄຊຊະນະໃໝ່ ທີ່ໃຫຍ່ຫຼວງກວ່າເກົ່າ.

ໃນປັດຈຸບັນນີ້ ທົ່ວພັກ ກຳລັງປະກອບອາວຸດ ແລະ ທົ່ວປວງຊົນເຮົາ ພວມພ້ອມກັນກະກຽມ ເພື່ອສົ່ງທ້າຍປີເກົ່າ 2560 ແລະ ກ້າວເຂົ້າສູ່ປີໃໝ່ 2561 ດ້ວຍບັນຍາກາດທີ່ເບີກບານມ່ວນຊື່ນເປັນຢ່າງຍິ່ງ.

ພວກເຮົາມີຄວາມພາກພູມໃຈເປັນຢ່າງຍິ່ງທີ່ເຫັນວ່າ: ປີ 2560 ທີ່ພວມຈະຜ່ານກາຍໄປນີ້ແມ່ນປີໜຶ່ງທີ່ທົ່ວພັກ, ທົ່ວລັດ ແລະ ທົ່ວປວງຊົນເຮົາ ໄດ້ເສີມຂະຫຍາຍຈິດໃຈເປັນເຈົ້າປະເທດຊາດ ຮັດແໜ້ນຄວາມສາມັກຄີເປັນປຶກແຜ່ນແໜ້ນໜາ ເປັນເຈົ້າການຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ X ຂອງພັກ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ເທື່ອທີ VIII ດ້ວຍຈິດໃຈບຸກທະລຸ່ງແຂງແຮງ ແລະ ຕໍ່ເນື່ອງ ສາມາດຍາດໄດ້ຜົນສຳເລັດທີ່ສຳຄັນ ເປັນພື້ນຖານຫຼາຍປະການ ເຮັດໃຫ້ການພັດທະນາປະເທດຊາດຂອງພວກເຮົາ ດຳເນີນໄປຕາມທິດຍືນຍົງສູ່ຈຸດໝາຍສັງຄົມນິຍົມຢ່າງໜັກແໜ້ນ.

ຜົນສຳເລັດທີ່ພົ້ນເດັ່ນໃນປີ 2560 ທີ່ຜ່ານມາແມ່ນ: ການດຳເນີນພາລະກິດປົກປັກຮັກສາ ແລະ ພັດທະນາປະເທດຊາດຂອງພວກເຮົາໄດ້ສືບຕໍ່ຂະຫຍາຍຕົວດ້ວຍຈັງຫວະທີ່ຕໍ່ເນື່ອງໜັກແໜ້ນ ໃນນີ້ ອັນທີ່ເປັນພື້ນຖານກວ່າ ໝູ່ແມ່ນ: ດ້ານການເມືອງໄດ້ສືບຕໍ່ມີສະຖຽນລະພາບໝັ້ນຄົງ ເສດຖະກິດຍັງສືບຕໍ່ຂະຫຍາຍຕົວດ້ວຍຄວາມໜັກແໜ້ນ ພາຍໃນສັງຄົມມີຄວາມສະຫງົບເປັນລະບຽບຮຽບຮ້ອຍ ແລະ ມີຄວາມປອດໄພໂດຍພື້ນຖານປະຊາຊົນບັນດາຊົນເຜົ່າ ແລະ ເຜົ່າຕ່າງໆມີຄວາມສາມັກຄີເປັນປຶກແຜ່ນຢູ່ອ້ອມຂ້າງພັກ ແລະ ລັດ, ບົດບາດຂອງ ສປປ ລາວ ໃນເວທີສາກົນນັບມື້ກວ້າງຂວາງໜັກແໜ້ນ.

ສຳລັບນະຄອນຫຼວງວຽງຈັນແລ້ວ ພວກເຮົາຍິ່ງມີຄວາມເອກອ້າງທະນົງໃຈເປັນຢ່າງຍິ່ງທີ່ເຫັນວ່າ: ປີ 2560 ທີ່ຜ່ານມາ ນອກຈາກໄດ້ເຮັດຫຼ້ອນບົດບາດ ແລະ ໜ້າທີ່ເປັນໃຈກາງປະກອບສ່ວນເຂົ້າໃນຜົນສຳເລັດລວມຂອງປະເທດຊາດແລ້ວ ໜຶ່ງປີທີ່ຜ່ານມາຊາວນະຄອນຫຼວງວຽງຈັນ ຍັງສືບຕໍ່ໄດ້ຜົນສຳເລັດທີ່ສຳຄັນຫຼາຍປະການໃນການດຳເນີນພາລະກິດປົກປັກຮັກສາ ແລະ ພັດທະນານະຄອນຫຼວງວຽງຈັນ ບົນພື້ນຖານການຈັດຕັ້ງປະຕິບັດ 6 ວິໄສທັດ, 6 ຍຸດທະສາດ, 18 ຄາດໝາຍ, 6 ໂຄງການບຸກທະລຸ ແລະ 16 ໂຄງການໃຫຍ່ລະດັບຊາດ ຊຶ່ງໄດ້ວາງອອກຢູ່ໃນມະຕິກອງປະຊຸມໃຫຍ່ ຄັ້ງທີ VI ຂອງອົງຄະນະພັກ ແລະ ແຜນພັດທະນານະຄອນຫຼວງວຽງຈັນ ໄລຍະ 5 ປີ ຄັ້ງທີ VIII (2016-2020) ໄດ້ມີຜົນສຳເລັດທີ່ຕໍ່ເນື່ອງ ແລະ ໜັກແໜ້ນ.

ປີ 2561 ທີ່ພວມຈະກ້າວເຂົ້າມານີ້ ແມ່ນປີທີ່ມີຄວາມສຳຄັນເປັນຢ່າງຍິ່ງ ຊຶ່ງທົ່ວພັກ ທົ່ວລັດ ແລະ ທົ່ວປວງຊົນເຮົາຈະໄດ້ສືບຕໍ່ຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ X ຂອງພັກ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII ໃຫ້ແຂງແຮງກວ່າເກົ່າ ເພື່ອສືບຕໍ່ພັດທະນາປະເທດຊາດຂອງພວກເຮົາກ້າວຂຶ້ນຕາມທິດຍືນຍົງ ສູ່ຈຸດໝາຍສັງຄົມນິຍົມ ດ້ວຍບາດກ້າວທີ່ໜັກແໜ້ນ.

ສຳລັບຊາວນະຄອນຫຼວງວຽງຈັນ ກໍແມ່ນການສືບຕໍ່ການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ VI ຂອງອົງຄະນະພັກ ແລະ ແຜນພັດທະນານະຄອນຫຼວງວຽງຈັນ ໄລຍະ 5 ປີ ຄັ້ງທີ VIII ແນໃສ່ສູ້ຊົນເພື່ອບັນລຸໜ້າທີ່ພື້ນຖານ ແລະ ຄວາມຮັບຜິດຊອບການເມືອງຂອງຕົນໃນຖານະທີ່ເປັນນະຄອນຫຼວງຂອງປະເທດຊາດນັ້ນ ຄື: ປົກ

ປົກຮັກສາ ແລະ ພັດທະນານະຄອນຫຼວງວຽງຈັນຕາມນະໂຍບາຍຂອງພັກ ແລະ ລັດ ເຮັດໃຫ້ເມືອງຫຼວງ ກາຍເປັນນະຄອນທີ່ຈະເລີນວັດທະນາ ໜ້າຢູ່ສີວິໄລ ທັນສະໄໝ ແລະ ເປັນຕົວແບບໃຫ້ແກ່ທ້ອງຖິ່ນຕ່າງໆສົມກັບເປັນໝາກຫົວໃຈຂອງປະເທດຊາດໃນໄລຍະໃໝ່ຢ່າງສົມກຽດ.

ໃນໂອກາດປີໃໝ່ປີ 2561 ນີ້ ຂໍອວຍພອນໃຫ້ເປັນປີທີ່ມີໂຊກມີໄຊ ເປັນປີທີ່ປະເທດຊາດ ກໍຄື ນະຄອນຫຼວງວຽງຈັນພວກເຮົາສືບຕໍ່ມີຄວາມສະຫງົບທີ່ໜັກແໜ້ນ ມີສະຖຽນລະພາບ ແລະ ຄວາມໝັ້ນຄົງ, ເສດຖະກິດສືບຕໍ່ຂະຫຍາຍຕົວ, ການດຳລົງຊີວິດ ແລະ ທຳມາຫາກິນຂອງປະຊາຊົນບັນດາເຜົ່າສືບຕໍ່ໄດ້ຮັບການປັບປຸງດີຂຶ້ນເປັນກ້າວໆ.

ຂໍອວຍພອນໃຫ້ບັນດາທ່ານຜູ້ນຳພັກ-ລັດທຸກທ່ານ ທຸກຂັ້ນຈົ່ງມີສຸຂະພາບ ພະລານາໄມສົມບູນແຂງແຮງເພື່ອສືບຕໍ່ຊີ້ນຳ-ນຳພາທົ່ວພັກ, ທົ່ວລັດ, ທົ່ວປວງຊົນ ພັດທະນາປະເທດຊາດກ້າວຂຶ້ນຕາມແນວທາງ ແລະ ອຸດົມຄະຕິທີ່ພວກເຮົາໄດ້ກຳນົດໄວ້.

ຂໍອວຍພອນໃຫ້ຖັນແຖວພະນັກງານ, ທະຫານ, ຕຳຫຼວດ, ລັດຖະກອນ, ກຳມະກອນ ແລະ ປະຊາຊົນທຸກຊັ້ນຄົນ ທຸກເຜົ່າ ຈົ່ງມີຄວາມສຸກ, ມີຄວາມເຂັ້ມແຂງ ນັບທັງດ້ານຈິດໃຈ ແລະ ຮ່າງກາຍມີຄວາມເບີກບານມ່ວນຊື່ນບຸກບືນຫ້າວຫັນ ເພື່ອເຮັດສຳເລັດໜ້າທີ່ວຽກງານ ມີໂຊກ ມີໄຊ ໃນການດຳລົງຊີວິດ ມີຜົນສຳເລັດໃນການຜະລິດ, ການດຳເນີນທຸລະກິດ, ການທຳມາຫາກິນ ຮັດແໜ້ນຄວາມສາມັກຄີເປັນປຶກແຜ່ນຢູ່ອ້ອມຂ້າງພັກ ແລະ ລັດ ເພື່ອສືບຕໍ່ພັດທະນາປະເທດຊາດອັນແສນຮັກຂອງພວກເຮົາກ້າວຂຶ້ນດ້ວຍບາດກ້າວທີ່ໜັກແໜ້ນ.

ທົ່ວພັກ ທົ່ວກຳລັງປະກອບອາວຸດ ແລະ ທົ່ວປວງຊົນເຮົາ ຈົ່ງພ້ອມກັນສ້າງທຸກເງື່ອນໄຂ ແລະ ຄວາມພ້ອມ ເພື່ອກ້າວເຂົ້າສູ່ປີ 2561 ດ້ວຍບາດກ້າວ ແລະ ທ່ວງທ່າໃໝ່ ເພື່ອຍາດເອົາໄຊຊະນະໃໝ່ ທີ່ໃຫຍ່ຫຼວງກວ່າເກົ່າ.

## ຄຳຖາມຄົ້ນຄວ້າ.

1. ບົດນຳມີຄວາມສຳຄັນແນວໃດໃນໜັງສືພິມ ແລະ ສື່ວິທະຍຸ, ໂທລະພາບ?.
2. ເປັນຫຍັງຈຶ່ງແມ່ນຄະນະບັນນາທິການເປັນຜູ້ຂຽນບົດນຳ?.

# ບົດທີ 5

# ການຂຽນບົດວິຈານ.

## 1. ຄວາມເຂົ້າໃຈທີ່ຖືກຕ້ອງກ່ຽວກັບບົດວິຈານ.

ພວກເຮົາຮູ້ວ່າບົດວິຈານມີຫຼາຍຮູບແບບ, ມີເນື້ອໃນແຕກຕ່າງກັນ ຊຶ່ງການວິຈານລ້ວນແລ້ວແຕ່ເປັນການໃຫ້ເຫດຜົນ (ຢັ້ງຢືນ, ຊີ້ແຈງ) ໝາຍຄວາມວ່າເປັນການທ້ອນໂຮມເຫດຜົນ ເພື່ອມາຢັ້ງຢືນຄວາມຄິດເຫັນກ່ຽວກັບບັນຫາໃດບັນຫາໜຶ່ງ.

ການໃຫ້ເຫດ, ຜົນ ຫຼື ການວິຈານນັ້ນ ແມ່ນສະແດງອອກດ້ວຍເຫດການຕົວຈິງ (ເອົາເຫດການຕົວຈິງມາເວົ້າ, ຍົກຄຳເວົ້າຂອງຜູ້ຮ່ວມເຫດການ, ເອົາແຫຼ່ງຂ່າວທີ່ເຊື່ອຖືມາອ້າງອີງ ເອົາລະບຽບກົດໝາຍຮີດຄອງປະເພນີ ຫຼື ຄຸນສົມບັດຈັນຍາບັນໃດໜຶ່ງມາອ້າງອີງ). ສະນັ້ນ ການຍົກເອົາເຫດ ແລະ ຜົນແມ່ນພາກສ່ວນສຳຄັນຂອງບົດວິຈານ ຍ້ອນການໃຫ້ເຫດຜົນບໍ່ແມ່ນເລື່ອງງ່າຍ. ສະນັ້ນ, ຜູ້ຂຽນຕ້ອງຊອກຮູ້ແຫຼ່ງຂໍ້ມູນຈາກຫຼາຍແຫຼ່ງເພື່ອມາອ້າງອີງ; ເພື່ອໃຫ້ເຂົ້າໃຈກ່ຽວກັບເລື່ອງນີ້ ເຮົາມາຕັ້ງຄຳຖາມວ່າ:

- ເປັນຫຍັງຈຶ່ງມີການຂຽນບົດວິຈານຕໍ່ໜ້າໜັງສືພິມ?.

- **ຄຳຕອບ:** ຍ້ອນເຫດການທີ່ສຳຄັນຕ່າງໆ ເຫຼົ່ານັ້ນກຳລັງຢູ່ໃນຄວາມສົນໃຈແຕ່ຕ້ອງເຂົ້າໃຈວ່າການວິຈານຜ່ານຄໍລຳຕ່າງໆ ໃນໜ້າໜັງສືພິມເປັນການວິຈານຢ່າງມີເຫດ, ຜົນ, ມີຫຼັກມີເກນ, ມີຂໍ້ສະເໜີ ແລະ ວິທີແກ້ໄຂ.

- ການວິຈານເປັນການວິເຄາະບັນຫາທີ່ຜູ້ອ່ານຮູ້ໃນລະດັບໃດໜຶ່ງແລ້ວ.

- ຂໍ້ສຳຄັນແມ່ນການໃຊ້ຄຳເວົ້າສຳນວນທີ່ຖືກຕ້ອງ.

- ຜູ້ວິຈານຕ້ອງມີຄວາມຮູ້, ຄວາມເຂົ້າໃຈຕໍ່ບັນຫານັ້ນຢ່າງເລິກເຊິ່ງ.

ດັ່ງນັ້ນ, ການວິຈານຈຶ່ງບໍ່ເປັນພຽງການນຳມາເລົ່າສູ່ກັນຟັງ ແຕ່ເປັນການເລົ່າແບບມີເຫດ, ຜົນມີຫຼັກການ. ຕ້ອງຈຳແນກໃຫ້ແຈ້ງລະຫວ່າງ:

- ວິຈານ: Critique

- ເລົ່າຄືນ: Review

## 2. ສິ່ງທີ່ຈຳເປັນໃນການຂຽນ "ບົດວິຈານ".

ຜູ້ວິຈານຕ້ອງມີຄວາມຮູ້, ຄວາມຊຳນານໃນເລື່ອງນັ້ນໆ ທັງທາງເລິກ ແລະ ທາງກວ້າງ.

## 3. ຫຼັກການພື້ນຖານໃນການຂຽນບົດວິຈານ.

ຕ້ອງຄຳນຶງຢູ່ສະເໝີວ່າເປົ້າໝາຍຂອງການວິຈານຄືການແນະນຳໃຫ້ຜູ້ອ່ານໄດ້ເຂົ້າໃຈບັນຫາທັງແງ່ລົບ ແລະ ແງ່ບວກ, ຄວາມຈຳເປັນຂອງເຫດ, ຜົນ ແລະ ຄວນໃຫ້ຂໍ້ຄິດທີ່ເປັນປະໂຫຍດ.

## 4. ຮູບແບບ: (ການຂຽນບົດວິຈານມີຫຼາຍຮູບແບບຄື:)

- ວິຈານຕາມຮູບແບບດັ້ງເດີມ (Classical method)

- ວິຈານຕາມວິທີທີ່ປະຕິບັດມາເປັນປະເພນີຄືປະຕິບັດກັນມາຈົນເປັນບັນທັດຖານວັດແທກຜົນສືບຕໍ່ມາ.

- ວິຈານຕາມຮູບແບບລາຍງານ (Reportorialmethod)

- ວິຈານແບບລາຍງານລະອຽດ ແລະ ຕອນທ້າຍຜູ້ວິຈານອາດໃຫ້ທັດສະນະດ້ານດີ, ດ້ານອ່ອນຕໍ່ບັນຫາດັ່ງກ່າວ.

- ວິຈານຕາມລັກສະນະຂອງຜົນງານ (Panoramicmethod) ເປັນການວິຈານຜົນງານສະເພາະຂອງມັນເອງ ໝາຍຄວາມວ່າ ວິຈານຕາມເນື້ອຫາສາລະ ແລະ ເຫດຜົນຂອງມັນ, ເຈາະເລິກເຖິງເຫດ, ຜົນແລ້ວຈຶ່ງປະເມີນຜົນ ຫຼື ປຽບທຽບກັບຜົນງານປະເພດດຽວກັນ.

- ວິຈານຕາມຄວາມປະທັບໃຈ (Impressionisticmethod); ໝາຍຄວາມວ່າວິຈານຕາມຄວາມປະທັບໃຈຂອງຜູ້ວິຈານເອງເປັນຫຼັກ. ການວິຈານໃນລັກສະນະນີ້ ຈຶ່ງເປັນການເບິ່ງບັນຫາໃນແງ່ປຸຖຸຊົນວິໄສຫຼາຍກວ່າແງ່ຫຼັກການ ແລະ ກໍຂຶ້ນຢູ່ກັບຜູ້ວິຈານເອງວ່າ ຈະມີຄວາມສາມາດຫຼາຍໜ້ອຍເທົ່າໃດໃນການເຂົ້າໃຈ ແລະ ອະທິບາຍບັນຫາ. ຖ້າຂາດຄວາມເຂົ້າໃຈແລ້ວກໍຈະຂາດຄວາມເປັນທຳຕໍ່ສິ່ງທີ່ກຳລັງຖືກວິຈານ. ຕ້ອງເຂົ້າໃຈວ່າວິຈານເພື່ອໃຫ້ມີພັດທະນາການ (ຕິເພື່ອກໍ) ວິຈານບໍ່ແມ່ນພຽງແຕ່ຕຳນິຕິຕຽນແຕ່ຢ່າງດຽວ. ຖ້າບໍ່ດັ່ງນັ້ນຈະເຮັດໃຫ້ຜູ້ຖືກວິ ຈານທໍ້ຖອຍໝົດກຳລັງໃຈ.

### 5. ໂຄງສ້າງຂອງບົດວິຈານ ດັ່ງນີ້:

① **ການເປີດຫົວເລື່ອງ:** ແມ່ນການຕອບບັນຫາທີ່ຕັ້ງຂຶ້ນເພື່ອວິຈານ.

② **ການເດີນເລື່ອງ:** ແມ່ນການຕອບບັນຫາທີ່ຕັ້ງຂຶ້ນດ້ວຍເຫດ ແລະ ຜົນ ຊຶ່ງກ່ອນຈະເປັນເຫດເປັນຜົນໄດ້ກໍຕໍ່ເມື່ອມັນມີຈຸດຢືນທີ່ຕິດພັນກັບຈຸດທີ່ເຮົາກຳນົດຫົວຂໍ້ເອົາໄວ້ແລ້ວ.

③ **ພາກສະຫຼຸບ:** ແມ່ນການສະຫຼຸບຄຳຕອບໃນບັນຫາທີ່ຕັ້ງຂຶ້ນ ຊຶ່ງການສະຫຼຸບນີ້ອາດກົງກັບແນວຄິດ ຫຼື ບັນຫາທີ່ຕັ້ງຂຶ້ນ ຫຼື ອາດເປັນຄຳຮຽກຮ້ອງ, ຄຳເຊື້ອເຊີນໃຫ້ຄົ້ນຄິດໃຫ້ມີການເຄື່ອນໄຫວ.

### 6. ໜ້າທີ່ໃນການຂຽນບົດວິຈານ.

- ເພື່ອສ້າງຄວາມສົນໃຈໃຫ້ຜູ້ອ່ານຕິດຕາມເຫດການທີ່ເກີດຂຶ້ນ, ທັງເປັນການຂະຫຍາຍແນວຄິດທີ່ກ້າວໜ້າໃຫ້ຜູ້ອ່ານຕໍ່ບັນຫາໃດໜຶ່ງ.

- ເພື່ອໃຫ້ຜູ້ອ່ານເຂົ້າໃຈ ແລະ ອະທິບາຍບັນຫາທີ່ເກີດຂຶ້ນໃຫ້ຜູ້ອື່ນຕາມທັດສະນະ ແລະ ນະໂຍບາຍຂອງພັກ-ລັດ.

- ການຍົກເຫດ, ຍົກຜົນສາມາດສ້າງຄວາມເຂົ້າໃຈໃຫ້ຜູ້ອ່ານຕື່ມ ໃນການແກ້ໄຂບັນຫາທີ່ພວມຜັນແປໃນສັງຄົມ ຫຼື ສາກົນຕາມແນວທາງຂອງພັກ-ລັດ ທັງເປັນການຕໍ່ຕ້ານຖ້ອຍທຳນອງບິດເບືອນຂອງຄົນບໍ່ດີ.

- ເຫດ, ຜົນທີ່ຍົກຂຶ້ນມາແມ່ນການຖົກຖຽງທາງດ້ານແນວຄິດໃນໝູ່ຜູ້ອ່ານ ແລະ ສາມາດຊັກຈູງໃຫ້ຜູ້ອ່ານເປັນເອກະພາບກັບແນວທາງ ແລະ ທັດສະນະຂອງພັກ-ລັດ ຕໍ່ບັນຫາທີ່ເຮົານຳມາວິຈານ.

- ສະຫຼຸບຄວາມສຳຄັນຂອງເນື້ອໃນ ເພື່ອດຶງດູດຄວາມສົນໃຈຂອງຜູ້ອ່ານ, ແຕ່ຢ່າຟ້າວໃຫ້ລາຍລະອຽດຈົນເກີນໄປ. ຄວນວິຈານບາງຈຸດທີ່ມີຄວາມສຳຄັນ, ແຕ່ບໍ່ທັນເວົ້າເຖິງຈຸດສຳຄັນສຸດຍອດ.

- ຂຽນດ້ວຍສັບສຳນວນທີ່ດຶງດູດຈັບໃຈຜູ້ອ່ານ ເພື່ອເຮັດໃຫ້ຜູ້ອ່ານເກີດຄວາມກະຕືລືລົ້ນຢາກຕິດຕາມ.

- ໃຊ້ພາສາເຂົ້າໃຈງ່າຍ ເພື່ອຄົນຫຼາຍລະດັບ, ຫຼີກເວັ້ນການໃຊ້ສັບວິຊາສະເພາະກັບ (ເຕັກນິກ) ຫຼາຍເກີນໄປ.

- ຍົກຈຸດເດັ່ນຂອງເລື່ອງທີ່ວິຈານນັ້ນໃຫ້ຈະແຈ້ງຊັດເຈນ.

- ໃຫ້ເຫດ, ຜົນໃນສ່ວນທີ່ຜູ້ວິຈານເຫັນວ່າດີ ແລະ ສ່ວນທີ່ຈະຕ້ອງປັບປຸງແກ້ໄຂ.

- ຍົກ ຫຼື ອ້າງອີງຂໍ້ຄວາມເດັ່ນໆບາງຕອນ (ຄວາມເວົ້າຂອງການນໍານັກຄົ້ນຄວ້າ...) ເພື່ອສະແດງໃຫ້ເຫັນວ່າ ນອກຈາກເພີ່ມສີສັນ ແລະ ສ້າງຄວາມຈູງໃຈແລ້ວຍັງສະແດງວ່າຜູ້ຂຽນບົດວິຈານນັ້ນໄດ້ມີການຄົ້ນຄວ້າຄັກແນ່.

- ຄໍານຶງຢູ່ສະເໝີເຖິງຄວາມບໍລິສຸດຈິງໃຈ, ບໍ່ເຮັດວຽກເພື່ອຕົນເອງ, ແຕ່ຫາກເຮັດວຽກເພື່ອສັງຄົມ ເພື່ອຄວາມຖືກຕ້ອງເປັນທໍາ. ດັ່ງນັ້ນ, ຈຶ່ງມີຈັນຍາບັນຂອງສື່ມວນຊົນ.

ຕ້ອງເຂົ້າໃຈວ່າການວິຈານເປັນວິທີໜຶ່ງ, ເປັນຮູບແບບການຂຽນຊະນິດໜຶ່ງທີ່ຈະຊ່ວຍແນະນໍາໃຫ້ຜູ້ອ່ານຕີລາຄາຕັດສິນບັນຫາໄດ້ຖືກຕ້ອງ. ດັ່ງນັ້ນ, ຖ້າຜູ້ວິຈານຂາດຄວາມຮັບຜິດຊອບ, ຂາດຄວາມຖືກຕ້ອງເປັນທໍາກໍຈະເຮັດໃຫ້ບົດຂຽນປະເພດນີ້ຂາດຄວາມນິຍົມບໍ່ວ່າຕໍ່ສື່ ຫຼື ໜັງສືພິມ ກໍຄື ຕົວຜູ້ຂຽນເອງ.

**ສະຫຼຸບແລ້ວ**, ການຂຽນບົດວິຈານ ກໍຄື ກັບການຂຽນບົດທົ່ວໄປໂດຍຈະມີພາກເປີດຫົວເລື່ອງ, ພາກເດີນເລື່ອງ ແລະ ສະຫຼຸບ. ແຕ່ອັນສໍາຄັນແມ່ນການໃຊ້ພາສາຈະປະກອບໄປດ້ວຍພາສາທີ່ເຂັ້ມແຂງ, ສຽດສີປະປົນກັນໄປ. ເຖິງວ່າຈະມີການກໍານົດຮູບແບບໃນການຂຽນກໍຕາມ, ແຕ່ບົດວິຈານຈະໂດດເດັ່ນໄດ້ນັ້ນ ຜູ້ຂຽນບົດວິຈານທີ່ພົ້ນເດັ່ນອາດມີວິທີຂຽນທີ່ແປກອອກຈາກຮູບແບບເດີມກໍເປັນອີກຕົວແບບໜຶ່ງທີ່ຊ່ວຍໃຫ້ບົດຂຽນໂດດເດັ່ນ.

ພື້ນຖານສໍາຄັນຂອງຄົນຂຽນຍັງຄົງແມ່ນຜູ້ອ່ານທັງຫຼາຍ, ມີຄວາມຮູ້ກວ້າງຂວາງ, ຊ່າງສັງເກດ ແລະ ສໍ່າຖາມຖືເປັນແຫຼ່ງມູນທີ່ສໍາຄັນໃນການຂຽນ.

ຕົວຢ່າງ: ບົດວິຈານ ດ້ານທິດສະດີວຽກງານການເມືອງ-ແນວຄິດ.

ບົດຕົວຢ່າງໃນການຂຽນບົດວິຈານໃນເອກະສານ "ລົງເລິກການຂຽນບົດນໍາ, ບົດຄວາມ, ບົດວິຈານ" ຄົ້ນຄວ້າຮຽບຮຽງໂດຍ ທ່ານ ຄໍາວິສັນ ແກ້ວສຸວັນ ພິມປີ 2017 (ໜ້າ 23-24).

## ບົດວິຈານ ຫົວຂໍ້: ເດັດດ່ຽວແກ້ໄຂພະຍາດອາດຍາສິດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ.

ໃນຊຸມປີຜ່ານມາ ພາຍໃຕ້ການນໍາພາຂອງພັກ, ປະເທດຊາດເຮົາໄດ້ມີສະຖຽນລະພາບທາງດ້ານການເມືອງຢ່າງໜັກແໜ້ນ, ສັງຄົມມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍໂດຍພື້ນຖານ, ເສດຖະກິດຂະຫຍາຍຕົວຢ່າງຕໍ່ເນື່ອງ, ຖານະບົດບາດຂອງປະເທດເຮົານັບມື້ສູງເດັ່ນຂຶ້ນໃນເວທີພາກພື້ນ ແລະ ສາກົນ. ແຕ່ພ້ອມກັນນັ້ນ, ກໍປະເຊີນກັບສິ່ງທ້າທາຍທົດສອບຫຼາຍປະການ ເຊັ່ນ: ການຂຸດຄົ້ນ ແລະ ການນໍາໃຊ້ດ້ານທ່າແຮງຊັບພະຍາກອນຍັງມີລັກສະນະຊະຊາຍປະສິດທິຜົນຕໍ່າ, ຄວາມອ່ອນແອໃນວຽກງານແຜນການ, ການຄຸ້ມຄອງລາຍຮັບ-ລາຍຈ່າຍງົບປະມານ, ບັນຫາໜີ້ສິນຂອງລັດຢ່າງໜັກໜ່ວງ, ການສ້າງພັກ-ພະນັກງານບໍ່ຕິດພັນກັບໜ້າທີ່ການເມືອງຕົວຈິງ, ທັງຍັງມີການລະເມີດບັນດາຫຼັກການພື້ນຖານຂອງພັກ. ທັງໝົດນັ້ນ ລ້ວນແຕ່ພົວພັນໂດຍກົງກັບພະຍາດອາດຍາສິດ ແລະ ການສໍ້ລາດບັງຫຼວງທີ່ນັບມື້ເພີ່ມຂຶ້ນເລື້ອຍໆ.

ພັກ ແລະ ລັດເຮົາຍາມໃດກໍຊີ້ໃຫ້ເຫັນເຖິງໄພອັນຕະລາຍຂອງພະຍາດອາດຍາສິດ ແລະ ການສໍ້ລາດບັງຫຼວງ, ໄດ້ນໍາພາສຶກສາອົບຮົມໃຫ້ສະມາຊິກພັກ-ພະນັກງານຮັບຮູ້-ເຂົ້າໃຈ ແລະ ປຸກລະດົມເຂົ້າຮ່ວມຕ້ານ, ສະກັດກັ້ນພະຍາດອາດຍາສິດ ກໍຄື ການສໍ້ລາດບັງຫຼວງ. ແຕ່ກໍຕ້ອງຮັບຮູ້ວ່າ: ຄວາມຮັບຮູ້ເຂົ້າໃຈຕໍ່ຜົນຮ້າຍ ແລະ ຄວາມອັນຕະລາຍຂອງພະຍາດອາດຍາສິດ, ການສໍ້ລາດບັງຫຼວງບໍ່ທັນເລິກເຊິ່ງເຖິງຖອງ, ຕົວຈິງຍັງມີປະກົດການຖືເບົາການແກ້ໄຂ ຫຼື ແກ້ບັນຫາບໍ່ຕິດພັນກັບຕົວຈິງ, ບໍ່ມີຈຸດສຸມ, ບໍ່ອີງໃສ່ກໍາລັງແຮງຂອງປະຊາຊົນ, ຫຼາຍບ່ອນຍັງລະເມີດຫຼັກການຂອງພັກ ແລະ ກົດໝາຍຂອງລັດ.

ແນວຄິດເອກະຊົນ ແລະ ພະຍາດອາດຍາສິດໃນປັດຈະບັນ ສະແດງອອກຢູ່ບ່ອນວ່າ ການນຳພາ-ຊີ້ນຳຫ່າງເຫີນຈາກຕົວຈິງ, ເວົ້າແບບລວມໆ, ຊີ້ນຳແບບຜິວເຜີນ, ມັກໃຊ້ແຕ່ຄຳສັ່ງ, ບໍ່ຟັງຄວາມເຫັນຂອງໝູ່ຄະນະ ແລະ ຂັ້ນລຸ່ມ, ຂາດການວິເຄາະໄຈ້ແຍກບັນຫາເລິກເຊິ່ງ, ບໍ່ຮອບຄອບ, ບໍ່ເລີ່ມຈາກຄວາມເປັນຈິງ, ເຂົ້າໃຈເປົ້າໝາຍແບບລວມໆ, ພິຈາລະນາ ແລະ ຕົກລົງແກ້ໄຂບັນຫາຕາມໃຈມັກ ບັນຫາຂອງຕົນເອງ, ບໍ່ແທດຕົວຈິງ, ມີການສຶກສາຫາລືໄດ້ແຕ່ຮູບການ, ບໍ່ຖືສຳຄັນການຕິດຕາມກວດກາ, ຊຸກຍູ້ປະເມີນ ແລະ ຖອດຖອນບົດຮຽນຈາກພຶດຕິກຳ. ຈາກນັ້ນ ມີສະພາບຄວາມເປັນເອກະພາບໃນບໍ່ສູງ, ຄວາມສາມັກຄີບໍ່ແໜ້ນ, ຈຳກັດປະຊາທິປະໄຕ, ເກີດມີຄວາມລະແວງສົງໃສກັນ ກ້າວໄປເຖິງມີການກະທຳຜິດພາດ ແລະ ອື່ນໆ.

ການສໍ້ລາດບັງຫຼວງ ໃນປັດຈຸບັນສະແດງອອກໃນຫຼາຍຮູບແບບ, ຫຼາຍລະດັບ, ອັນພົ້ນເດັ່ນແມ່ນການສວຍໃຊ້ອຳນາດໜ້າທີ່ ເພື່ອີດໜ່ວງຖ່ວງດຶງຕໍ່ລອງຜົນປະໂຫຍດຈາກຜູ້ໃຊ້ບໍລິການຂອງການຈັດຕັ້ງພັກ-ລັດ, ໃຊ້ຊ່ອງຫວ່າງຂອງລະບຽບກົດໝາຍ, ອອກຂໍ້ຕົກລົງຂອງບຸກຄົນ ຫຼື ລວມໝູ່ ເພື່ອສ້າງລະບອບນະໂຍບາຍ ສະເພາະເອື້ອປະໂຫຍດແກ່ຕົນ ແລະ ພັກພວກເຮັດໃຫ້ການຍັກຍອກຊັບສົມບັດສ່ວນລວມເປັນອັນຊອບທຳ. ນອກນັ້ນ, ຍັງໄດ້ຈົງໃຈລະເມີດລະບຽບກົດໝາຍ ເພື່ອຫາຜົນປະໂຫຍດແກ່ຕົນເອງ. ສິ່ງເຫຼົ່ານັ້ນກະທົບໂດຍກົງໃສ່ປະສິດທິຜົນ ແລະ ຄຸນນະພາບການນຳພາຂອງພັກ ແລະ ການຄຸ້ມຄອງບໍລິຫານລັດຂອງພວກເຮົາ.

ອາດເວົ້າໄດ້ວ່າ: ແນວຄິດເອກະຊົນ, ພະຍາດອາດຍາສິດໃນແບບແຜນນຳພາ-ຄຸ້ມຄອງ ແລະ ການສໍ້ລາດບັງຫຼວງທີ່ນັບມື້ຮ້າຍແຮງໃນປັດຈຸບັນພວມກາຍເປັນສິ່ງທີ່ທົ່ວສັງຄົມໃຫ້ຄວາມສົນໃຈຫຼາຍ ທັງກຳລັງສ້າງຜົນກະທົບຕໍ່ບົດບາດ ແລະ ຄວາມສາມາດຂອງການນຳພາຂອງພັກ ກໍຄື ຄວາມເຊື່ອໝັ້ນຂອງປະຊາຊົນຕໍ່ລະບອບໃໝ່, ເປັນອຸປະສັກກີດໜ່ວງການພັດທະນາ, ເປັນຊ່ອງຫວ່າງທີ່ອິດທິກຳລັງປໍລະປັກ ແລະ ພວກຄົນບໍ່ດີສວຍໃຊ້ເພື່ອທັບຖົມໂຈມຕີຕໍ່ການນຳພາ, ຕໍ່ພັກ ແລະ ລະບອບການເມືອງຂອງພວກເຮົາ. ຍ້ອນແນວນັ້ນ ການແກ້ໄຂແນວຄິດເອກະຊົນ, ພະຍາດອາດຍາສິດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ແມ່ນຄວາມຈຳເປັນພາວະວິໄສ, ຄະນະພັກ ແລະ ອຳນາດການປົກຄອງທຸກຂັ້ນ, ທຸກພາກສ່ວນຕ້ອງເປັນເຈົ້າການຈັດຕັ້ງນຳພາແກ້ໄຂບັນຫາດັ່ງກ່າວຢ່າງຕັ້ງໜ້າ ແລະ ດ້ວຍຄວາມຮັບຜິດຊອບສູງ ໂດຍສະເພາະແມ່ນໃນຂັ້ນປັບປຸງປັບປຸງທົ່ວພັກ 2017 ນີ້ຍັງຈະຕ້ອງຂຸດເກົາເຜົາລ້າງພະຍາດອາດຍາສິດ, ທັງສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງໃຫ້ຫຼຸດໜ້ອຍຖອຍລົງກ້າວໄປເຖິງຂັ້ນຈຳກັດຢ່າງສິ້ນເຊີງ. ບັນຫານີ້ເປັນໜ້າທີ່ຂອງສະມາຊິກພັກ, ພະນັກງານ, ທະຫານ, ຕຳຫຼວດທີ່ຈະຕ້ອງໄດ້ຈົງໃຈສຳຫຼວດກວດກາ ແລະ ດຳເນີນການຕຳນິກໍ່ສ້າງກັນຢ່າງເຂັ້ມງວດ ບໍ່ດັ່ງນັ້ນຈະເຮັດໃຫ້ພະຍາດຂ້າງເທິງນັ້ນກາຍເປັນມະເຮັງຮ້າຍແຮງທຳລາຍຊີວິດຂອງພວກເຮົາ, ທຳລາຍພັກ ແລະ ປະເທດຊາດຂອງພວກເຮົາ.

ຕົວຢ່າງ: ບົດວິຈານແບບເລົ່າຄືນ Review. ລົງພິມໃນ ໜັງສືພິມເສດຖະກິດ-ການຄ້າ, ລົງວັນທີ 23 ຕຸລາ 2018, ຄໍລຳມຸມຫຼັກແປດ.

**<u>ຫົວຂໍ້</u>: ຍຸດທະສາດຫັນປ່ຽນໂດຍສັນຕິຍັງບໍ່ປ່ຽນແປງ.**

ໃນຍຸກແຫ່ງຂໍ້ມູນ-ຂ່າວສານນີ້ມັນມີຄວາມຈຳເປັນຕ້ອງໄດ້ເບິ່ງຄືນວ່າ ໃນສັງຄົມໂລກທີ່ມີຫຼາຍຂົ້ວນັ້ນ ມີຫຍັງເປັນຜົນດີຕໍ່ປະເທດເຮົາ, ມີຫຍັງມີຜົນສະທ້ອນຍາວນານໃນການສ້າງສາພັດທະນາປະເທດຊາດ ໂດຍສະເພາະແມ່ນເຈດຈຳນົງມ້າງເພທຳລາຍຂອງອິດທິກຳລັງປໍລະປັກທີ່ມີຕໍ່ລະບອບຂອງພວກເຮົາ.

ເຈດຈຳນົງທັງຫຼາຍທັງປວງນັ້ນ ລ້ວນແລ້ວແຕ່ຜ່ານຍຸດທະສາດຫັນປ່ຽນໂດຍສັນຕິ.

ຍຸດທະສາດຫັນປ່ຽນໂດຍສັນຕິ ແມ່ນຮູບການໜຶ່ງຂອງການຕໍ່ສູ້ຊົນຊັ້ນທີ່ຂ້ຽວຂາດເອົາເປັນເອົາຕາຍລະຫວ່າງລັດທິຈັກກະພັດ ແລະ ສັງຄົມນິຍົມໃນເມື່ອກ່ອນ ຕາມຂໍ້ມູນຂອງຫຼາຍພາກສ່ວນໃຫ້ຮູ້ວ່າ: ໃນເດືອນ ມັງກອນ 1953 ລັດຖະມົນຕີກະຊວງການຕ່າງປະເທດອາເມຣິກາດາແລັດ ໄດ້ຖະແຫຼງວ່າ: “ການທັບມ້າງປະເທດສັງຄົມນິຍົມສາມາດເຮັດໄດ້ດ້ວຍວິທີສັນຕິວິທີຄື: ນຳໃຊ້ວິທີທາງດ້ານແນວຄິດ ແລະ ຈິດຕະສາດເພື່ອບັນລຸເປົ້າໝາຍສົມທົບວິທີການຕ່າງໆນັບທັງດ້ານການທະຫານ” ນັ້ນຄືຈຸດເລີ່ມຕົ້ນຂອງຍຸດທະສາດຫັນປ່ຽນໂດຍສັນຕິ. ຈາກນັ້ນ, ບໍ່ພໍເທົ່າໃດປີເຂົາກໍເຮັດທົດລອງກັບປະເທດຮົງກາລີ (1956), ເຊັກໂກສະໂລວາກີ (1968), ໂປໂລຍ (1980), ສະ ຫະພາບໂຊຫວຽດ (1991) ແລະ ແລ້ວລະບົບສັງຄົມນິຍົມໃນປະເທດເຫຼົ່ານັ້ນກໍແຕກສະຫຼາຍ.

ຍຸດທະສາດຫັນປ່ຽນໂດຍສັນຕິ ແມ່ນການຕໍ່ສູ້ທີ່ດຳເນີນຢູ່ພາຍໃນຂອງປະເທດໃດໜຶ່ງທີ່ບໍ່ເດີນຕາມເສັ້ນທາງຂອງມະຫາອຳນາດຕາເວັນຕົກ ຊຶ່ງວິທີການຕົ້ນຕໍແມ່ນໃຊ້ຈິດຕະວິທະຍາ ເພື່ອຊວນເຊື່ອໃຫ້ປະລະທາດແທ້ ແລະ ອຸດົມການ, ແບ່ງແຍກຄວາມສາມັກຄີພາຍໃນ ຊຶ່ງສ່ວນຫຼາຍແມ່ນຜ່ານສື່ຕ່າງໆ.

ການດຳເນີນຍຸດທະສາດຫັນປ່ຽນໂດຍສັນຕິ ໃນທີ່ຜ່ານມາຢູ່ແຕ່ລະປະເທດ ສ່ວນຫຼາຍແມ່ນຜ່ານສອງບາດກ້າວ ເຊັ່ນ: **ບາດກ້າວທີໜຶ່ງ:** ສ້າງການຫັນປ່ຽນ ແລະ ພັນແຍກຢູ່ພາຍໃນ, ສ້າງວິກິດການທາງດ້ານເສດຖະກິດ-ສັງຄົມກ້າວໄປເຖິງວິທີທາງການເມືອງ ເພື່ອປຸກລະດົມມະຫາຊົນຕໍ່ສູ້ທວງເອົາປະຊາທິປະໄຕ, ຫຼາຍພັກ, ຫຼາຍເຄົ້າ, ທວງໃຫ້ແກ້ໄຂຊີວິດການເປັນຢູ່ອັນເກີນຄວາມສາມາດຕົວຈິງຂອງອຳນາດການປົກຄອງ ກ້າວໄປສ້າງເສດຖະກິດຕາມທ່າອ່ຽງນິຍົມຂອງປະເທດມະຫາອຳນາດ, **ບາດກ້າວທີສອງ:** ໃນເມື່ອຫັນປ່ຽນບໍ່ໄດ້ຮັບຜົນ ຫຼື ບໍ່ບັນລຸລະດັບໃດໜຶ່ງ ເມື່ອມີໂອກາດອຳນວຍຈະປຸກລະດົມຂະບວນການລຸກຮືຂຶ້ນໂຄ່ນລົ້ມລະບອບການປົກຄອງ ຫຼື ດ້ວຍຮູບການລັດຖະປະຫານ.

ເຖິງແມ່ນວ່າສະຖານະການຂອງໂລກຈະປ່ຽນໄປແນວໃດກໍຕາມ ແຕ່ບັນດາອິດທິກຳລັງປໍລະປັກກໍຍັງຄົງສືບຕໍ່ດຳເນີນຍຸດທະສາດຫັນປ່ຽນໂດຍສັນຕິບໍ່ມີຫຍັງປ່ຽນແປງ, ກົງກັນຂ້າມ ຍິ່ງເພີ່ມທະວີໂດຍແນໃສ່ກໍ່ສ້າງໃຫ້ເກີດປັດໄຈ ແລະ ເງື່ອນໄຂຈາກພາຍໃນ ເພື່ອລໍຖ້າໂອກາດອັນສຸກງອມ ແລ້ວກໍຊຸກຍູ້ປຸກລະດົມການລຸກຮື້ຂຶ້ນແຫ່ຂະບວນປະທ້ວງ ແລະ ໂຄ່ນລົ້ມຜູ້ນຳ ຫຼື ລະບອບການເມືອງຂອງປະເທດນັ້ນ. ອັນນີ້ແມ່ນເປົ້າໝາຍສູງສຸດຂອງພວກເຂົາ ຊຶ່ງໄດ້ຮັບຜົນສຳເລັດມາແລ້ວຢູ່ບາງປະເທດໃນເຂດຕາເວັນອອກກາງ ແລະ ອາຟຣິກາເໜືອ.

ໃນຍຸກແຫ່ງຂໍ້ມູນ-ຂ່າວສານ ການປະກົດຕົວສື່ແບບໃໝ່ ຕ້ອງຍອມຮັບວ່າເປັນແຫຼ່ງກະຈາຍທີ່ສຳຄັນຂອງຍຸດທະສາດຫັນປ່ຽນໂດຍສັນຕິ. ສະນັ້ນ, ການເສບສື່ໃນປັດຈຸບັນມັນຮຽກຮ້ອງໃຫ້ທຸກຄົນໃນສັງຄົມ ຕ້ອງມີສະຕິຮິ່ນຕອງ ແລະ ພິຈາລະນາວ່າ ອັນໃດຄວນເຊື່ອ ແລະ ອັນໃດຄວນປະຕິເສດ. ໄປຄຽງຄູ່ກັນນັ້ນ, ກໍຕ້ອງມີການອະທິບາຍຕໍ່ທຸກບັນຫາທີ່ສັງຄົມຕັ້ງຂຶ້ນຜ່ານສື່ແບບໃໝ່, ທຸກບັນຫາມີທາງອອກ ເຮົາບໍ່ອະທິບາຍຜູ້ອື່ນກໍອະທິບາຍ, ເຮົາ ບໍ່ກຳເອົາຜູ້ອື່ນກໍກຳເອົາ.

ຕົວຢ່າງ: ບົດວິຈານປະກົດການຫຍໍ້ທໍ້ ແບບ Critigne. ລົງໜັງສືພິມວຽງຈັນໃໝ່ ສະບັບວັນທີ 3 ເມສາ 2018 (ໜ້າ 2).

**<u>ຫົວຂໍ້</u>: ການຄຸ້ມຄອງລາຄາສິນຄ້າໄລຍະປີໃໝ່ລາວຄືງລຳບາກ…**

ເປັນບັນຫາທີ່ສັງຄົມໃຫ້ຄວາມສົນໃຈຫຼາຍເລື່ອງ ການຄຸ້ມຄອງ**ລາຄາສິນຄ້າໄລຍະໃໝ່ລາວ** ເພາະໃນທຸກປີລາຄາສິນຄ້າມີການເໜັງຕີງ… ສຳລັບປີນີ້ ໃນອາທິດຕົ້ນເດືອນເມສາ ລາຄາຜັກຢູ່ບາງຕະຫຼາດເໜັງຕີງ ແລ້ວມີການຂຶ້ນລາຄາຈາກເກົ່າເຖິງ 5 ພັນກີບຕໍ່ກິໂລ… ສ່ວນຊີ້ນ, ປາ, ໄກ່, ໄຂ່ ຍັງປົກກະຕິຢູ່.

ການດຳເນີນມາດຕະການຄຸ້ມຄອງລາຄາສິນຄ້າເລີ່ມກວດເຂັ້ມ ໂດຍມີການອອກແຈ້ງການຈາກກະຊວງກ່ຽວຂ້ອງ ບັນດາແຂວງ, ເມືອງໄດ້ລົງກວດກາ ແລະ ບາງເມືອງກໍມີການເຊັນສັນຍາກັບຊາວຄ້າ-ຂາຍ ກໍຄື ຈັດສັນຕະຫຼາດໃນການຄຸ້ມຄອງລາຄາສິນຄ້າ ເປັນຕົ້ນ ແມ່ນປະເພດສະບຽງອາຫານໃຫ້ຢູ່ໃນເກນປົກກະຕິ… ຂະບວນການນີ້ດຳເນີນໄປຢ່າງກວ້າງຂວາງ ແລະ ມີຜົນຕອບຮັບທີ່ດີຈາກຊາວຄ້າ-ຂາຍ ກໍຄື ສັງຄົມທົ່ວໄປ ແຕ່ໃນຄວາມເປັນຈິງແລ້ວ ການຄຸ້ມຄອງລາຄາສິນຄ້າ**ຄືງເຮັດໄດ້ລຳບາກ** ໃນໄລຍະບຸນປີໃໝ່ລາວນີ້ ຍ້ອນສາເຫດຫຼັກຂອງມັນແມ່ນການເໜັງຕີງຂຶ້ນຂອງລາຄານ້ຳມັນນີ້ ຈະສົ່ງຜົນສະທ້ອນໂດຍກົງເຖິງລາຄາສິນຄ້າ ມັນເປັນກົດເກນຕາຍຕົວ. ສະນັ້ນ, ການຂຶ້ນລາຄານ້ຳມັນເຊື້ອໄຟຈະຫຼາຍຈະໜ້ອຍກໍມີຜົນຕໍ່ລາຄາສິນຄ້າ.

ໃນຖານະເຮົາເປັນປະເທດນຳເຂົ້ານ້ຳມັນຮ້ອຍສ່ວນຮ້ອຍ **ຄວນປັບໂຄງສ້າງ**ລາຄານ້ຳມັນຢ່າງໃດໃຫ້ມັນເໝາະສົມ ບໍ່ພຽງແຕ່ບໍ່ເກັບພາສີ-ອາກອນຈາກນ້ຳມັນເທົ່ານັ້ນ ອາດກ້າວໄປເຖິງການມີງົບອຸດໜູນລາຄານ້ຳມັນ.

ເດືອນເມສານີ້ ຄຽງຄູ່ກັບການເໜັງຕີງຂຶ້ນ**ຂອງລາຄານ້ຳມັນ** ແມ່ນອັດຕາແລກປ່ຽນເງິນຕາ ໂດຍສະເພາະ **ແມ່ນເງິນບາດ-ເງິນໂດລາບໍ່ຄົງທີ່** ບວກເຂົ້າກັນຈະເປັນຕົວຢູ່ໃຫ້ລາຄາສິນຄ້າເໜັງຕີງ… ມີຜົນກະທົບຕໍ່ຊີວິດການເປັນຢູ່ແນ່ນອນ **ການປະຢັດມັດທະຍັດເທົ່ານັ້ນຄືທາງອອກຂອງບັນຫາ** ຕໍ່ປະກົດການບາງໜ່ວຍງານເກັບເງິນນຳອ້າຍນ້ອງພະນັກງານ ເພື່ອກິນລ້ຽງຊຸມແຊວ ຊື້ກະຕ່າຂອງຂວັນມອບໃຫ້ຂັ້ນເທິງ ເພື່ອອວຍພອນຄົງໄດ້ຄິດກັນໃໝ່ ວ່າສົມມາພາຄວນ ຫຼື ບໍ? ໃນເວລາທີ່ສະພາບເສດຖະກິດເປັນແນວນີ້?.

## ຄຳຖາມຄົ້ນຄວ້າ.

1. ບົດວິຈານແຕກຕ່າງກັບບົດຄວາມ ແລະ ບົດນຳຢູ່ບ່ອນໃດ?.
2. ຍົກຕົວຢ່າງ 3 ປະເພດບົດມາວິເຄາະ?.

# ບົດທີ 6

# ການຂຽນບົດສາລະຄະດີ.

ການຂຽນສາລະຄະດີ ກໍມີລັກສະນະຄືກັບບົດຂຽນທົ່ວໄປ, ແຕ່ມັນແຕກຕ່າງຢູ່ບ່ອນວ່າ ເປັນການຂຽນແບບວິຊາການ.

## I. ຄວາມສໍານຶກກ່ຽວກັບບົດສາລະຄະດີ.

**ຄໍາວ່າ "ສາລະຄະດີ"** (Nontiction) ສາລະ+ຄະດີ. ສາລະແມ່ນຄໍານາມມາຈາກພາສາບາລີແປວ່າ: ແກ່ນ; ສ່ວນສໍາຄັນ; ເນື້ອແທ້; ຖ້ອຍຄໍາໜັງສື. ຄະດີແມ່ນເລື່ອງ, ເລື່ອງທີ່ມີແນວບໍ່ດີ, ແນວຕ້ອງຄວາມ, ມີຄວາມ. ສ່ວນສາລະຄະດີແປວ່າ: ເລື່ອງທີ່ມີແທ້, ເລື່ອງທີ່ມີປະໂຫຍດ, ເລື່ອງ ຫຼື ບົດຄວາມທີ່ຂຽນຂຶ້ນຈາກຂໍ້ມູນຄວາມຈິງບໍ່ແມ່ນຈາກຈິນຕະນາການ; ອ້າງອີງຈາກປຶ້ມວັດຈະນານຸກົມພາສາລາວທີ່ຄົ້ນຄວ້າ ແລະ ຮຽບຮຽງໂດຍ ດຣ ທອງຄໍາ ອ່ອນມະນີສອນ ພິມປີ 1992 ໄດ້ແປຄໍາວ່າ "ສາລະຄະດີ" ເລື່ອງ ຫຼື ບົດຄວາມທີ່ຂຽນຂຶ້ນຈາກຂໍ້ມູນຄວາມຈິງທີ່ມີບໍ່ແມ່ນມາຈາກຈິນຕະນາການ.

ສະນັ້ນ, ສາລະຄະດີ ຈຶ່ງມີສ່ວນໜຶ່ງຂອງການຂຽນທີ່ມີເນື້ອຫາແບບວິຊາການບໍ່ແມ່ນແບບເພີ້ຝັນ.

## II. ປະເພດຂອງບົດສາລະຄະດີ.

**ບົດສາລະຄະດີມີ 3 ປະເພດຄື:** ສາລະຄະດີທົ່ວໄປ, ສາລະຄະດີຊີວະປະຫວັດ, ສາລະຄະດີທ່ອງທ່ຽວ.

**1. ສາລະຄະດີທົ່ວໄປ:** ມີເນື້ອໃນທາງດ້ານວິຊາການຕ່າງໆເຊັ່ນ: ດ້ານທໍາມະຊາດສິ່ງແວດລ້ອມ, ຄວາມຮູ້ທາງດ້ານເຕັກນິກວິທະຍາສາດ, ດ້ານສຸຂະພາບອານາໄມ, ດ້ານການສຶກສາ-ວັດທະນະທໍາ.

**2. ສະລະຄະດີຊີວະປະຫວັດ:** ເນື້ອໃນເນັ້ນໃສ່ວິລະບຸລຸດຂອງຊາດ, ຜູ້ນໍາ, ບຸກຄົນດີເດັ່ນທີ່ເປັນແບບຢ່າງໃນການທໍາມາຫາກິນ, ການເຄື່ອນໄຫວສັງຄົມເຊັ່ນ: ຄອບຄົວຕົວແບບໃນການຜະລິດ, ການແກ້ໄຂຄວາມທຸກຈົນ, ການສ້າງຮັ່ງມີດ້ວຍຄວາມຊອບທໍາພາຍໃຕ້ກົດໝາຍບ້ານເມືອງ.

**3. ສາລະຄະດີທ່ອງທ່ຽວ:** ເນື້ອໃນຈະເນັ້ນໃສ່ການທ່ອງທ່ຽວວັດທະນະທໍາ, ການທ່ອງທ່ຽວທໍາມະຊາດແຊກຊ້ອນຄວາມຮູ້ກັບສິ່ງໄດ້ເຫັນ ແລະ ປູກຈິດສໍານຶກໃຫ້ມີແນວຄິດອະນຸລັກຮັກສາ.

## III. ການຂຽນບົດສາລະຄະດີ.

ມີຈຸດປະສົງມຸ່ງໝາຍ ເພື່ອເຂົ້າເຖິງກຸ່ມເປົ້າໝາຍທີ່ແຕກຕ່າງກັນ ຊຶ່ງກຸ່ມເປົ້າໝາຍອາດກວ້າງຂວາງທີ່ສຸດ ກໍເປັນໄດ້ຖ້າການຂຽນເນັ້ນເນື້ອໃນດຶງດູດໄດ້ດີ.

ສາລະຄະດີໂດຍທົ່ວໄປມີຈຸດມຸ່ງໝາຍ ດັ່ງນີ້:

**1. ເພື່ອໃຫ້ຄວາມຮູ້ເຊັ່ນ:** ການຂຽນສາລະຄະດີການທ່ອງທ່ຽວສາລະຄະດີສັດປ່າ ແລະ ອື່ນໆ.

**2. ເພື່ອໃຫ້ຂໍ້ເທັດຈິງໂດຍລັກສະນະທົ່ວໄປ**: ບົດສາລະຄະດີແມ່ນການເອົາຄວາມຈິງ ເອົາປະສົບການມາຂຽນ ຫຼື ຕາມການບອກເລົ່າເຊັ່ນ: ສາລະຄະດີຊີວິດສັດປ່າຜູ້ຂຽນອາດເວົ້າເຖິງວ່າ ໄດ້ໄປນອນຈອບເບິ່ງສັດຢູ່ຕາມປັ່ງໃນຄືນເດືອນເພັງມີສັດຫຼາຍຊະນິດມາລົງປັ່ງ, ກິລິຍາທ່າທາງເປັນແນວໃດ...

**3. ການຂຽນເພື່ອສະແດງຄວາມເຫັນ:** ສາລະຄະດີບໍ່ພຽງແຕ່ຂຽນຕາມປະສົບການແຕ່ຍັງອາດສາມາດສະແດງຄວາມຄິດເຫັນເຂົ້າໄປໄດ້ເຊັ່ນວ່າ: ຖ້າຫາກເລື່ອງຊີວິດສັດປ່າກໍອາດຈະວ່າ: ຄວນລ່າສັດປ່າແນວໃດ? ຍ້ອນເຫດຜົນຫຍັງ?.

**4. ເພື່ອໃຫ້ຄວາມເພີດເພີນເຊັ່ນ:** ພັນລະນາເລື່ອງຈິບໆງາມໆມ່ວນຊື່ນໂຮແຊວ ຫຼື ມີການປະຈົນໄພໄປນຳ.

## IV. ການຂຽນສາລະຄະດີ.

ການຂຽນສາລະຄະດີ ມີລັກສະນະຮູບແບບຂຽນຄ້າຍຄືກັນກັບບົດຂຽນໂດຍທົ່ວໄປປະກອບມີ: ພາກໄຂ ຫົວເລື່ອງ, ເດີນເລື່ອງ ແລະ ພາກສະຫຼຸບ.

### 1. ຫົວເລື່ອງເປັນສ່ວນສຳຄັນໃນການຂຽນສາລະຄະດີ.

ເພາະມັນເປັນໂຕບົ່ງບອກເຖິງຄວາມສຳເລັດຂອງຜູ້ຂຽນ. ຫົວເລື່ອງດີຈະເຮັດໃຫ້ຜູ້ອ່ານມີຄວາມສົນໃຈຢາກຕິດຕາມ ກົງກັນຂ້າມຖ້າຫົວເລື່ອງບໍ່ເຂົ້າໃຈກໍຈະພາໃຫ້ຜູ້ອ່ານເບື່ອແຕ່ເລີ່ມຕົ້ນ. ການຂຽນຫົວເລື່ອງຈະບໍ່ມີກົດ ເກນຕາຍໂຕແຕ່ສັງລວມແລ້ວມີ ດັ່ງນີ້:

- ໃຊ້ວິທີອະທິບາຍແບບກວມລວມໃຫ້ຜູ້ອ່ານສະຫຼຸບເອົາເອງເຊັ່ນ: ການຂຽນສາລະຄະດີທ່ອງທ່ຽວຕ່າງໆແຕ່ອອກຈາກເຮືອນຈົນເຖິງເວລາກັບແລ້ວຈຶ່ງນຳເອົາຜູ້ອ່ານເຂົ້າເນື້ອເລື່ອງ.

**- ໃຊ້ຄຳສັບງ່າຍໆ** ສື່ຄວາມໝາຍແບບຊັດເຈນອາດຂຽນແບບເລົ່າເລື່ອງ ຫຼື ຕັ້ງຄຳຖາມແບບສ້າງຄວາມຈຸດສົນໃຈໃຫ້ຜູ້ອ່ານໄດ້ຕິດຕາມ.

**- ໃຊ້ພາສາຢ່າງອ່ອນຊ້ອຍ:** ລະມຸນລະໄມຕະຫຼົກເຮຮາເພື່ອໃຫ້ຜູ້ອ່ານອາລົມແຈ່ມໃສ.

**- ໃຊ້ສຳນວນພັນລະນາ:** ໃຫ້ເກີດຄວາມກະຕືລືລົ້ນ ຫຼື ສ້າງຄວາມສົນໃຈໃຫ້ຜູ້ອ່ານຢາກຮູ້ເລື່ອງລີ້ລັບທີ່ຜູ້ຂຽນສ້າງຂຶ້ນ.

- ການຂຽນສາລະຄະດີຊີວະປະຫວັດ, ປະຫວັດສາດ, ຕຳນານ, ນິທານ, ຜູ້ຂຽນສາມາດໃຊ້ພາສາທີ່ເຄັ່ງຂຶມແບບວິຊາການ ເພື່ອສ້າງຄວາມສົນໃຈໃຫ້ແກ່ຜູ້ອ່ານກໍໄດ້ຂຶ້ນກັບຄວາມສາມາດ ແລະ ວິທີການຂອງຜູ້ຂຽນ. ເປັນຕົ້ນແມ່ນປະສົບການ, ຄວາມຮູ້ກ່ຽວກັບເລື່ອງນັ້ນໆ.

### 2. ເດີນເລື່ອງ.

ເນື້ອເລື່ອງເປັນສ່ວນທີ່ມີລາຍລະອຽດ ສະນັ້ນ ຈຶ່ງຕ້ອງແບ່ງອອກເປັນຕອນໆ ແຕ່ລະຕອນຈະຕ້ອງຊີ້ແຈງອະທິບາຍຊວນເຊື່ອໃຫ້ຜູ້ອ່ານເກີດຄວາມສົນໃຈຢາກຮູ້, ຢາກຕິດຕາມ ຊຶ່ງພໍສັງລວມໄດ້ ດັ່ງນີ້:

- ກ່ອນຂຽນຜູ້ຂຽນຕ້ອງສຳຫຼວດຕົວເອງວ່າ ມີຄວາມຮູ້ ແລະ ປະສົບການພຽງພໍສຳລັບການຂຽນ ຫຼື ບໍ? ເພາະຄວາມຮູ້ ແລະ ປະສົບການຈະຊ່ວຍໃຫ້ຜູ້ຂຽນເຂົ້າເຖິງເນື້ອໃນໄດ້ເປັນຢ່າງດີ ແລະ ມີຄວາມເຊື່ອໝັ້ນໃນການຂຽນ. ຜູ້ມີປະສົບການຫຼາຍກວ້າງຂວາງຈະຂຽນໄດ້ດີກວ່າຜູ້ມີປະສົບການໜ້ອຍ. ຄວາມຮູ້ທີ່ປະກອບໃນການຂຽນແມ່ນມາຈາກການສຶກສາຄົ້ນຄວ້າ ສະນັ້ນ ຜູ້ຂຽນຕ້ອງເປັນຄົນມັກອ່ານເພື່ອຊອກຫາຫຼັກຖານມາອ້າງອີງ.

**- ສ້າງແຮງຈູງໃຈໃນການຂຽນ** ແຮງຈູງໃຈແຕ່ລະຄົນບໍ່ຄືກັນບາງຄົນຂຽນຍ້ອນອຸດົມການສິ່ງບັນດານໃຈ, ສິ່ງກະຕຸ້ນໃຈ, ປະສົບການ... ແຮງຈູງໃຈເປັນສິ່ງກະທົບຈາກພາຍນອກສູ່ຜູ້ຂຽນ ຖືໄດ້ວ່າເປັນສິ່ງສຳຄັນທີ່ຈະຊ່ວຍໃຫ້ມີຄວາມຕັ້ງໃຈໃນການຂຽນ.

**- ຄວາມສາມາດ ແລະ ທັກສະໃນການຂຽນ** ທັງສອງຢ່າງນີ້ຢູ່ໃນກະໂຕຂອງຜູ້ຂຽນເອງ. ບາງເທື່ອຜູ້ຂຽນມີທັດສະນະໃນການຂຽນກໍຄວນຝຶກຝົນຈົນເປັນທີ່ຍອມຮັບຂອງຜູ້ອ່ານຄວາມສາມາດກໍເຊັ່ນດຽວກັນ.

**- ການຈັດວາງແຕ່ລະຕອນຄວນກຳນົດແນວຄວາມຄິດແບບກວ້າງໆ** ແລ້ວຈຶ່ງຂະຫຍາຍລາຍລະອຽດຕ່າງໆ ອອກມາເປັນໂຄງເລື່ອງຈົນໄດ້ລາຍລະອຽດຄົບຖ້ວນ.

**3. ພາກສະຫຼຸບ.**

ເປັນສ່ວນສຸດທ້າຍທີ່ມີຄວາມສຳຄັນສຳລັບການຂຽນສາລະຄະດີ ຜູ້ຂຽນຕ້ອງສ້າງຄວາມປະທັບໃຈໃຫ້ແກ່ຜູ້ອ່ານໃຫ້ໄດ້ ເຊິ່ງການສ້າງຄວາມປະທັບໃຈອາດເຮັດໄດ້ດ້ວຍການຍົກເອົາປະເດັນສຳຄັນມາເນັ້ນ ດ້ວຍສຳນວນໂວຫານຊີ້ແຈງອະທິບາຍຊວນເຊື່ອສ້າງຄວາມປະທັບໃຈແກ່ຜູ້ອ່ານ ຫຼື ການສະຫຼຸບເລື່ອງອາດຕັ້ງເປັນບັນຫາໃຫ້ຜູ້ອ່ານຄົ້ນຄິດນຳໄປແກ້ໄຂຊອກຫາຄຳຕອບເອົາເອງ. ຈຶ່ງຄຳນຶງສະເໝີວ່າ ການຂຽນສະຫຼຸບເລື່ອງບໍ່ແມ່ນການຫຍໍ້ເລື່ອງທັງໝົດແຕ່ເປັນການຍົກເອົາປະເດັນສຳຄັນເທົ່ານັ້ນຂຶ້ນຊີ້ແຈງ.

ການຂຽນສາລະຄະດີເປັນການຂຽນເລື່ອງຈິງ ຫຼື ເລື່ອງແອບແຝງຄວາມຈິງເຮັດໃຫ້ຜູ້ອ່ານເກີດຄວາມເພີດເພີນໄດ້ຄວາມຮູ້ດ້ານວິຊາການ, ຮູ້ຄວາມຈິງຂອງບັນຫາ ເພື່ອສະແດງຄວາມຄິດເຫັນອອກມາໃຫ້ຖືກຕ້ອງຫາກບໍ່ແມ່ນການເພີ້ຝັນ.

## V. ບົດສາລະຄະດີສັງເກດລວມແລ້ວເຫັນວ່າ ມີແບບວິທີຂຽນສາມລັກສະນະຄື:

1. ການຂຽນແບບພັນລະນາ.
2. ການຂຽນແບບເລົ່າເລື່ອງ.
3. ການຂຽນແບບຮວບຮວມເລື່ອງ.

ການຂຽນແບບພັນລະນາຈະມີການໃຊ້ພາສາຢ່າງອ່ອນຊ້ອຍລະມຸນລະໄມຈະເປັນການພັນລະນາປະຫວັດ ຫຼື ຕາມລັກສະນະຂອງເລື່ອງ ສ່ວນການຂຽນແບບເລົ່າເລື່ອງແມ່ນການຂຽນທີ່ຜູ້ຂຽນໆໄປຕາມເລື່ອງທີ່ໄດ້ປະສົບພົບພໍ້ມາໃຊ້ພາສາຕາມສະບາຍໄປເລີຍສຳລັບການຂຽນແບບຮວບຮວມນັ້ນ ແມ່ນການຂຽນບົດຂຽນຂອງຫຼາຍຄົນມາລົງໃນບົດດຽວ ຫຼື ຖ້າແມ່ນບົດຂຽນຂອງຜູ້ດຽວກໍຈະແມ່ນປະສົບການຄວາມຮູ້ຂອງນັກຂຽນຜູ້ນັ້ນກ່ຽວກັບເລື່ອງໃດເລື່ອງໜຶ່ງ ການຂຽນນີ້ຕ້ອງແບ່ງເປັນຂັ້ນຕອນຊີ້ແຈງອະທິບາຍຊວນເຊື່ອ.

ຕົວຢ່າງ: ບົດສາລະຄະດີທ່ອງທ່ຽວ ອອກໃນໜັງສືພິມ ເສດຖະກິດ-ການຄ້າ ລົງວັນທີ 20 ເມສາ 2018.

**<u>ຫົວຂໍ້</u>: ພະທາດອຸມຸງໜຶ່ງໃນສະຖານທີ່ສູນລວມແຫ່ງຈິດໃຈຊາວເມືອງສອງຄອນ.**

ເມື່ອເວົ້າເຖິງ ພະທາດອຸມຸງ ເປັນອີກສະຖານທີ່ໜຶ່ງເປັນບ່ອນຢຶດໜ່ຽວຈິດໃຈຂອງຊາວບ້ານ ແຕ່ນອກເໜືອຈາກນັ້ນ ກໍຖືວ່າເປັນບ່ອນເຕົ້າໂຮມຜູ້ຄົນໃນຍາມບຸນສິນກິນທານ, ເປັນບ່ອນເຕົ້າໂຮມຄວາມສາມັກຄີຂອງຊາວບ້ານ, ພະທາດແຫ່ງນີ້ມີປະຫວັດບໍ່ແນ່ນອນ ວ່າສ້າງຂຶ້ນຍ້ອນເຫດຜົນໃດ?, ແຕ່ສະຖານທີ່ແຫ່ງນີ້ກໍເປັນບ່ອນທີ່ເຄົາລົບບູຊາສຳລັບຄົນທີ່ມາເມືອງສອງຄອນ ຊຶ່ງຕ້ອງໄດ້ໄປກາບໄຫວ້ພະທາດແຫ່ງນີ້ ແລະ ກໍກາຍມາເປັນຈຸດເດັ່ນຂອງເມືອງສອງຄອນ ຈົນມາຮອດປັດຈຸບັນ.

ວັດອຸມຸງ ຫຼື ພະທາດອຸມຸງ ຕັ້ງຢູ່ທາງທິດຕາເວັນອອກຂອງບ້ານລະຫາໂຄກ ຫ່າງຈາກຕົວເມືອງສອງຄອນໄປທາງທິດເໜືອປະມານ 7 ກິໂລແມັດ ແລະ ຫ່າງຈາກເທດສະບານແຂວງສະຫວັນນະເຂດປະມານ 75 ກິໂລແມັດ.

**"ເມືອງສອງຄອນ ອູ່ເຂົ້າອູ່ປາ ຜ້າມົນນ້ຳຄາມງາມທຳມະຊາດ ແກ້ງຕາດຫາດຊາຍຂາວ ປະເພນີລາວ ຄູນຂວັນເຂົ້າ ເຜົ່າຜູ້ໄທ ໄປໄຫວ້ພະທາດອຸມຸງ ມຸ່ງຂວັນຊາວເມືອງ"** ນີ້ແມ່ນຄຳຂວັນຂອງເມືອງສອງຄອນທີ່ສະແດງໃຫ້

ເຫັນເຖິງຄວາມອຸດົມສົມບູນຂອງທຳມະຊາດໃນມູນເມືອງ, ມີເອກະລັກສະເພາະຂອງແຂວງ ກໍຄື ຜ້ານິນນໍ້າຄານ ແລະ ກໍຍັງມີສະຖານທີ່ສັກສິດທີ່ເປັນບ່ອນເຄົ້າໂຮມຄວາມສາມັກຄີກັນອີກດ້ວຍ.

ວັດແຫ່ງນີ້ຖືກຍົກໃຫ້ເປັນສະຖານທີ່ທ່ອງທ່ຽວທາງດ້ານວັດທະນະທຳ ເພາະມີຈຸດເດັ່ນຢູ່ທີ່ພະທາດອຸມຸງ ທີ່ມີລັກສະນະຄ້າຍຄືກັບພະທາດອີງຮັງ ແລະ ຍັງເປັນທາດໜຶ່ງທີ່ມີຊື່ຢູ່ໃນຄຳຂວັນຂອງເມືອງອີກດ້ວຍ, ພະທາດແຫ່ງນີ້ສູງປະມານ 10 ແມັດ, ໃນທຸກໆປີ ເມື່ອຮອດເດືອນຍີ່ເພັງ ກໍໄດ້ມີງານສະເຫຼີມສະຫຼອງໃນວັນຂຶ້ນ 14 ຄໍ່າ ເປັນມື້ສີເພັ້ງສິທຽນ, ສ່ວນມື້ຂຶ້ນ 15 ຄໍ່າ ແມ່ນມື້ເຄົ້າໂຮມຫົວບ້ານ ແລະ ທ້າຍບ້ານ ເພື່ອທຳພິທີທາງສາສະໜາ ແລະ ເປີດກວ້າງໃຫ້ຊາວພຸດທັງຫຼາຍພາຍໃນເມືອງ ແລະ ແຂວງ ກໍຄື ທົ່ວປະເທດໄດ້ມາສັກກາລະບູຊາກາບໄຫວ້, ສ່ວນໃນມື້ແຮມ 1 ຄໍ່າ ເດືອນຍີ່ ແມ່ນເປັນມື້ຕັກບາດຖວາຍເຄື່ອງປັດໄຈໄຊຍະທານໃຫ້ແກ່ພະສົງ.

ນີ້ກໍເປັນອີກສະຖານທີ່ໜຶ່ງທີ່ໄດ້ກາຍມາເປັນສະຖານທີ່ ທີ່ມີຄຸນຄ່າທາງດ້ານຈິດໃຈຂອງຊາວເມືອງສອງຄອນ ແລະ ຊາວພຸດທັງຫຼາຍ, ເປັນສະຖານທີ່ທ່ອງທ່ຽວທາງດ້ານວັດທະນະທຳອີກແຫ່ງຂອງເມືອງ ກໍຄື ຂອງແຂວງສະຫວັນນະເຂດ. ນອກຈາກສິ່ງທີ່ເລົ່າມາຂ້າງເທິງນີ້ແລ້ວ ເມືອງສອງຄອນ ກໍຍັງມີອີກຫຼາຍສະຖານທີ່ ທີ່ໜ້າສົນໃຈ ທີ່ທ່ານຄວນຈະຫາໂອກາດໄປຢ້ຽມຢາມຈັກຄັ້ງໃນຊີວິດ.

ມາຮອດປັດຈຸບັນ ແຂວງສະຫວັນນະເຂດ ແມ່ນໄດ້ມີການປັບປຸງຄຸນນະພາບຂອງການບໍລິການໃຫ້ດີຂຶ້ນເລື້ອຍໆ ເປັນຕົ້ນແມ່ນການພັດທະນາທັກສະດ້ານການບໍລິການຂອງພະນັກງານນໍາທ່ຽວຂັ້ນແຂວງ, ຂັ້ນບ້ານ, ເປີດຊຸດຝຶກອົບຮົມໃຫ້ພະນັກງານໃນຂົງເຂດທຸລະກິດຂອງໂຮງແຮມ, ເຮືອນພັກ ແລະ ຮ້ານອາຫານ ພ້ອມທັງພັດທະນາ ແລະ ປັບປຸງຜະລິດຕະພັນເຄືອຂ່າຍຂອງການທ່ອງທ່ຽວທີ່ເປັນເອກະລັກຂອງແຂວງ ທີ່ໂດດເດັ່ນຕາມວົງຈອນການທ່ອງທ່ຽວ, ມີເສັ້ນທາງຫຼາຍສາຍໄດ້ຕິດຈອດກັນເຮັດໃຫ້ການຄົມມະນາຄົມໄປ-ມາຫາແຫຼ່ງທ່ອງທ່ຽວຕ່າງໆງ່າຍຂຶ້ນ ແລະ ໄດ້ເຮັດໃຫ້ສະຖານທີ່ທ່ອງທ່ຽວຂອງແຂວງກາຍເປັນຈຸດໝາຍປາຍທາງຂອງນັກທ່ອງທ່ຽວທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດມຸ່ງໝາຍດຽວກັນຄືການສົ່ງເສີມການທ່ອງທ່ຽວຂອງລາວ.

ນອກຈາກເມືອງສອງຄອນແລ້ວ ແຂວງສະຫວັນນະເຂດ ຍັງມີແຫຼ່ງທ່ອງທ່ຽວອີກຫຼາກຫຼາຍບ່ອນທີ່ສາມາດດຶງດູດນັກທ່ອງທ່ຽວໃຫ້ເຂົ້າມາທ່ຽວຊົມທີ່ແຂວງສະຫວັນນະເຂດ ເປັນຕົ້ນແມ່ນພະທາດອີງຮັງ, ພະທາດໂພ່ນ, ພິພິທະພັນໄດໂນເສົາ, ດົງລີງ, ຖໍ້າພະ, ບຶງຊ້າງ, ທໍາໄຕປິດົກ ແລະ ສະຖານທີ່ອື່ນໆ ທັງທາງດ້ານທຳມະຊາດ, ວັດທະນະທຳ ແລະ ປະຫວັດສາດ ທີ່ລໍຖ້ານັກທ່ອງທ່ຽວມາຢ້ຽມຢາມ.

ໃຜຍັງບໍ່ທັນໄດ້ມາຢ້ຽມຢາມທ່ຽວຊົມແຫຼ່ງທ່ອງທ່ຽວທີ່ ແຂວງສະຫວັນນະເຂດ ກໍຫາໂອກາດໄປໃຫ້ໄດ້ ເພາະຍັງມີຫຼາຍສິ່ງຫຼາຍຢ່າງໃຫ້ທ່ານໄດ້ຮຽນຮູ້ ອີກຢ່າງໜຶ່ງ ປີ 2018 ກໍເປັນປີທ່ອງທ່ຽວລາວ ຊຶ່ງຄົນລາວເຮົາຄວນຈະຫາໂອກາດທ່ອງທ່ຽວປະເທດລາວໃຫ້ຫຼາຍຂຶ້ນ ເພື່ອສົ່ງເສີມການທ່ອງທ່ຽວຂອງລາວໃຫ້ມີຄວາມຄຶກຄື້ນ ທັງເຊີນຊວນນັກທ່ອງທ່ຽວຊາວຕ່າງປະເທດ ໃຫ້ເຂົ້າມາທ່ຽວໃຫ້ຫຼາຍຂຶ້ນ ເພື່ອເປັນການສ້າງລາຍຮັບເຂົ້າມາປະເທດ ພ້ອມທັງສົ່ງເສີມເສດຖະກິດ-ສັງຄົມຂອງລາວ ໃຫ້ນັບມື້ຂະຫຍາຍຕົວຂຶ້ນໄປເລື້ອຍໆ.

**ຄຳຖາມຄົ້ນຄວ້າ.**

1. ການຂຽນບົດສາລະຄະດີມີຈັກປະເພດ?.
2. ຢາກຂຽນບົດສາລະຄະດີໃຫ້ໄດ້ດີຕ້ອງເຮັດຫຍັງແດ່?.

# ບົດທີ 7

# ການຂຽນບົດຕຳນິ.

## I. ການຕຳນິຕິຊົມແມ່ນເພື່ອຫຍັງ?.

ການຕຳນິແມ່ນການຍູ້ໜູນການປະຕິບັດແນວທາງແຜນນະໂຍບາຍຂອງພັກ ແລະ ລັດ ເຊີດຊູຄວາມເປັນເອກະສັນກ່ຽວກັບການເມືອງ ແລະ ສະຕິສັງຄົມ, ປັບປຸງຄວາມສາມັກຄີອັນເປັນປຶກແຜ່ນທົ່ວປວງຊົນ, ເພີ່ມທະວີຄວາມສາມັກຄີ ເປັນເອກະສານຂອງບັນດາການຈັດຕັ້ງພັກ-ລັດ ບົນພື້ນຖານແຫ່ງການປະຕິບັດທຸກໜ້າທີ່ວຽກງານເປັນຢ່າງດີ.

ເພີ່ມທະວີກຳລັງແຮງສູ້ຮົບ ແລະ ຄວາມສາມາດໃນການສ້າງສາ ແລະ ຄຸ້ມຄອງເສດຖະກິດ-ສັງຄົມຂອງບັນດາການຈັດຕັ້ງລັດ, ຮູ້ດັດແປງວຽກງານພັກ ແລະ ລັດໃນທຸກດ້ານ, ຊຸກຍູ້ຜາລະກິດປະຕິວັດຂອງປະຊາຊົນກ້າວຂຶ້ນບໍ່ຢຸດຢັ້ງ.

ຮັດແໜ້ນການພົວພັນລະຫວ່າງພັກກັບອຳນາດການປົກຄອງ ແລະ ມະຫາຊົນ, ເສີມຂະຫຍາຍສິດເປັນເຈົ້າຂອງປະຊາຊົນ. ຊ່ວຍເຫຼືອພະນັກງານ, ສະມາຊິກພັກ ແລະ ປະຊາຊົນເຮົາໃຫ້ມີຄວາມກ້າວໜ້າຢ່າງໄວວາປະ ກອບສ່ວນກໍ່ສ້າງຄົນລາວໃຫ້ຂະຫຍາຍຕົວຮອບດ້ານ.

### 1. ການຕຳນິລວມມີ 2 ດ້ານຄື:

ຍ້ອງ ແລະ ຕິ, ຍ້ອນວ່າລະບອບເຮົາເປັນທຳ, ພະນັກງານສ່ວນຫຼວງຫຼາຍເປັນຄົນດີ, ປະຊາຊົນມີມູນເຊື້ອ ແລະ ຄຸນສົມບັດ, ນິໄສໃຈຄໍດີງາມ. ສະນັ້ນ, ການຍ້ອງຍໍດ້ານດີແມ່ນພື້ນຖານແຕ່ການຕຳນິດ້ານຫຍໍ້ທໍ້ກໍສຳຄັນທີ່ສຸດ ເພາະວ່າມີການຕໍ່ສູ້ກັບສິ່ງຫຍໍ້ທໍ້ຈຶ່ງຈະພັນແຍກໄດ້ອັນຜິດກັບອັນຖືກເຮັດໃຫ້ສັດຈະທຳກະຈ່າງແຈ້ງ, ດ້ານດີ, ດ້ານຕັ້ງໜ້າຈຶ່ງຈະໄດ້ຮັບການເສີມຂະຫຍາຍປັດໄຈໃໝ່, ແກ້ໄຂຈຸດບົກຜ່ອງຜິດພາດ, ກໍ່ສ້າງຄົນໃຫ້ມີຄຸນນະພາບໃໝ່, ເຮັດໃຫ້ຜູ້ຄົນ ຫຼື ກົມກອງທີ່ຖືກຕຳນິ, ເຫັນຈຸດດີ, ແລະ ຈຸດບົກຜ່ອງ, ເຫັນສາເຫດຂອງຈຸດດີ, ຈຸດບົກຜ່ອງ , ເຫັນທິດທາງສູ້ຊົນ ເພື່ອເສີມຂະຫຍາຍຈຸດດີ ແລະ ແກ້ໄຂຈຸດບົກຜ່ອງ, ມີຄວາມເຊື່ອໝັ້ນ ແລະ ຫ້າວຫັນກ້າວໜ້າຂຶ້ນ.

### 2. ສຳລັບທິດນຳການຕຳນິ.

ຕ້ອງເຄົາລົບຄວາມຈິງ, ບໍ່ເຂົ້າຂ້າງອອກຂາ, ມີເຫດ, ມີຜົນ, ມີລັກສະນະກໍ່ສ້າງເສີມຂະຫຍາຍຈຸດດີ, ບໍ່ເປີດເຜີຍຄວາມລັບຂອງຊາດ ແລະ ທັງແມ່ນຈັນຍາບັນຂອງສື່ມວນຊົນອີກດ້ວຍ.

ໃນປັດຈຸບັນນີ້ ການຕຳນິໃນສື່ມວນຊົນຄວນສຸມໃສ່ສອງໜ້າທີ່ຍຸດທະສາດຄື: ປົກປັກຮັກສາປະເທດຊາດ ແລະ ການປັບປຸງບູລະນະລະບອບປະຊາທິປະໄຕ ການເສີມຂະຫຍາຍສິດເປັນເຈົ້າຂອງປະຊາຊົນໃນການຄຸ້ມຄອງເສດຖະກິດ, ຄຸ້ມຄອງລັດ, ການປົກປັກຮັກສາຄວາມສະຫງົບພາຍໃນ, ເຊີດຊູຄຸນທາດຂອງສະມາຊິກພັກ ແລະ ຄວາມຮັບຜິດຊອບຂອງພະນັກງານໃນການຈັດຕັ້ງປະຕິບັດແນວທາງນະໂຍບາຍຂອງພັກ ແລະ ກົດໝາຍຂອງລັດ, ເພີ່ມທະວີການພົວພັນລະຫວ່າງພັກກັບມະຫາຊົນ, ຕ້ານບັນດາປະກົດການອາດຍາສິດ, ການລະເມີດປະ ຊາທິປະໄຕ , ສິດທິພິເສດຜົນປະໂຫຍດພິເສດ, ເຊີດຊູສະຕິລະວັງຕົວປະຕິວັດ, ປົກປັກຮັກສາຊັບສົມບັດຂອງລັດ, ຂອງປະເທດຊາດ, ຕ້ານທຸກການກະທຳແບບເສລີບໍ່ມີການຈັດຕັ້ງໄຮ້ລະບຽບວິໄນ, ຂີ້ຄ້ານມັກງ່າຍ, ສໍ້ລາດບັງຫຼວງ, ກິນສິນບົນ.

ພະນັກງານທຸກຄົນ, ສະມາຊິກພັກ, ພົນລະເມືອງທຸກຄົນ, ລ້ວນແຕ່ມີສິດຕຳນິຜ່ານສື່ມວນຊົນແຕ່ຕ້ອງໄດ້ຮັບການເຫັນດີ ຈາກຄະນະຮັບຜິດຊອບສື່ມວນຊົນເສຍກ່ອນ ໂດຍປະຕິບັດຕາມກົດໝາຍສື່ມວນຊົນສະບັບເລກທີ 01/ສພຊ ລົງວັນທີ 25 ກໍລະກົດ 2008 ຢ່າງເຄັ່ງຄັດ.

**3. ບັນດາສື່ມວນຊົນຕ້ອງໃຫ້ຄວາມສຳຄັນຕໍ່ຄວາມເຫັນຂອງບັນດາຜູ້ຂຽນບົດຕຳນິ.**

ແຕ່ກ່ອນເວລານຳໃຊ້ຕ້ອງກວດກາ, ຄົ້ນຄວ້າໃຫ້ຄົບຖ້ວນ. ໃນກໍລະນີບໍ່ສາມາດລົງພິມໄດ້ ກໍຕ້ອງຕອບດ້ວຍຈົດໝາຍສະເພາະ ຫຼື ສົ່ງໃຫ້ສຳນັກງານທີ່ມີບົດບາດຮັບຜິດຊອບກວດກາ ແລະ ແກ້ໄຂ, ສຳນັກງານເຫຼົ່ານັ້ນມີໜ້າທີ່ຊີ້ແຈງຕໍ່ຄຳຕຳນິຕິຊົມເຫຼົ່ານັ້ນ, ພ້ອມກັນນັ້ນ ກໍບອກໃຫ້ສຳນັກງານທີ່ຮັບຜິດຊອບໜັງສືພິມຮູ້, ຜູ້ຂຽນຈົດໝາຍ ຫຼື ຂຽນບົດຕຳນິໃນໜັງສືພິມອາດຂຽນຊື່ແທ້ ແລະ ບ່ອນຢູ່ ຫຼື ໃນນາມແຝງ, ບໍ່ແຈ້ງທີ່ຢູ່, ແຕ່ໃຫ້ສຳນັກງານໜັງສືພິມຮູ້ບ່ອນຢູ່ຂອງຕົນ. ສຳນັກງານສື່ມວນຊົນຈະບໍ່ພິຈາລະນາຕໍ່ບົດ ຫຼື ຈົດໝາຍທີ່ບໍ່ມີທີ່ຢູ່ຂອງຜູ້ຂຽນຢ່າງຊັດເຈນ.

## II. ຄວາມຮັບຜິດຊອບຂອງຜູ້ຂຽນບົດຕຳນິໃນສື່ມວນຊົນມີ ດັ່ງນີ້:

1. ບໍ່ວ່າບົດຕຳນິໃດໆກໍຕາມຕ້ອງມີຈຸດປະສົງກໍ່ສ້າງຢ່າງຈະແຈ້ງ:

ເອກະສານທີ່ຍົກຂຶ້ນມາຕ້ອງຊັດເຈນສ່ອງແສງເຖິງອັນຜິດກັບແນວທາງນະໂຍບາຍຂອງພັກ ແລະ ລັດການວາດສີດຳໃສ່ຮ້າຍລະບອບ, ໂຈມຕີບຸກຄົນ, ກໍ່ຄວາມແບ່ງແຍກ, ປັ້ນແຕ່ງໃສ່ຮ້າຍ, ເປີດເຜີຍຄວາມລັບທັງໝົດນັ້ນເປັນສິ່ງທີ່ຜິດກັບຈຸດປະສົງຂອງການຕຳນິ, ກົງກັນຂ້າມກັບຄຸນສົມບັດຂອງສັງຄົມ ແລະ ຈັນຍາບັນຂອງສື່ມວນຊົນເປັນການລະເມີດກົດໝາຍຂອງລັດ.

**2. ຫຼັງຈາກຕຳນິແລ້ວກໍຕ້ອງຕິດຕາມຜົນກະທົບ ແລະ ສ່ອງແສງເຖິງຄວາມກ້າວໜ້າຜ່ານພາຫານະສື່ມວນຊົນ:**

ໃນກໍລະນີຕຳນິບໍ່ຖືກບຸກຄົນ ຫຼື ລວມໝູ່ຂຽນບົດຕຳນິ ແລະ ສື່ມວນຊົນທີ່ໄດ້ອອກບົດຕຳນິທີ່ບໍ່ຖືກຕ້ອງນັ້ນກໍຕ້ອງຮັບຜິດຊອບ ແລະ ຕ້ອງຕຳນິຕົນເອງຕໍ່ພາຫະນະສື່ມວນຊົນ.

**3. ລວມໝູ່ ຫຼື ສ່ວນບຸກຄົນທີ່ຖືກຕຳນິຕິຕຽນລ້ວນແຕ່ມີສິດຕອບຄືນ:**

ສຳລັບການຕຳນິນັ້ນຖືກຕ້ອງກໍຕ້ອງຮັບເອົາ ແລະ ຍົກຂຶ້ນເຖິງວິທີການແກ້ໄຂຄວາມຜິດພາດ, ສຳລັບການຕຳນິຜິດສ່ວນໜຶ່ງ ຫຼື ຜິດທັງໝົດ ບຸກຄົນນັ້ນ ຫຼື ລວມໝູ່ທີ່ຖືກຕຳນິນັ້ນມີສິດຂຽນບົດແກ້ຄືນ ເພື່ອເຮັດໃຫ້ຄວາມຈິງກະຈ່າງແຈ້ງ ແລະ ອະທິບາຍການສັງເກດຂອງຕົນ. ບໍ່ຕອບໂຕ້ຄືນດ້ວຍການແກ້ແຄ້ນຜູ້ຕຳນິ ຊຶ່ງເປັນການກໍ່ຄວາມຫຍຸ້ງຍາກແກ່ການເຄື່ອນໄຫວຂອງບັນດາສື່ມວນຊົນ, ຖ້າເຮັດແນວນັ້ນ ຈະຖືວ່າເປັນການຕ້ານຄືນການຕຳນິ, ຜິດກັບຫຼັກການ ແລະ ລະບຽບວິໄນການເຄື່ອນໄຫວຊີວິດພັກ ແລະ ລະບຽບການຂອງສັງຄົມ.

ການຕຳນິໃນສື່ມວນຊົນ ກໍແມ່ນໜຶ່ງໃນການປະຕິບັດແນວທາງຂອງພັກ ໃນການເສີມຂະຫຍາຍປະຊາທິປະໄຕ ແລະ ສິດເປັນເຈົ້າຂອງປະຊາຊົນບັນດາເຜົ່າຕໍ່ປະເທດຊາດ. ຮັບປະກັນສິດໄດ້ຮັບຂ່າວ ແລະ ສິດໄດ້ຮັບຖະແຫຼງຂ່າວຂອງປະຊາຊົນ ເຮັດໃຫ້ການຖະແຫຼງຂ່າວມີຊີວິດຊີວາ.

ການຂຽນບົດຕຳນິກໍມີໂຄງສ້າງຄືກັບບົດສະເໜີຄື:

- ພາກເປີດຫົວເລື່ອງ
- ພາກເດີນເລື່ອງ
- ພາກສະຫຼຸບ

ຕົວຢ່າງ: ບັນດາບົດຕຳນິ ທີ່ລົງໜັງສືພິມໃນຄໍລຳ "ມຸມຫຼັກແປດ" ຂອງໜັງສືພິມເສດຖະກິດ-ການຄ້າ (ໜ້າ 2), ລົງວັນທີ 30 ກໍລະກົດ 2019, 24 ກັນຍາ 2019, 1 ຕຸລາ 2019.

**ຕ້ອງໃຊ້ເຄື່ອງມືທັນສະໄໝ.**

ຕ້ອງຍອມຮັບວ່າການໃຊ້ເຄື່ອງມືທັນສະໄໝເຂົ້າໃນການເກັບລາຍຮັບ ໄດ້ເຮັດໃຫ້ການເກັບລາຍຮັບຈາກພາສີ-ອາກອນ, ການເສຍຄ່າທຳນຽມທາງ ເຂົ້າງົບປະມານເຫັນຕົວເລກເງິນເຂົ້າເປັນກອບເປັນກຳລື່ນເກົ່າຫຼາຍແທ້ໆ.

**ສະນັ້ນ ຈຶ່ງມີຜູ້ສະເໜີວ່າ:**

ເພື່ອແກ້ຫາງສຽງທາງວິພາກວິຈານຂອງສັງຄົມຕໍ່ເຈົ້າໜ້າທີ່ເກັບຄ່າທຳນຽມທາງ ແລະ ຄ່າບໍລິການຂຶ້ນທະບຽນສຳມະໂນຄົວແບບທັນສະໄໝ, ຄ່າເຮັດບັດປະຈຳຕົວແບບໃໝ່ສູງເກີນຂໍ້ຕົກລົງທາງການນັ້ນ ມີຄວາມຈຳເປັນນຳເຄື່ອງມືທັນສະໄໝເຂົ້າຊ່ວຍ ຄືດັ່ງກໍລະນີທີ່ກ່າວມາຂ້າງເທິງນັ້ນຈະດີທີ່ສຸດ.

ຜູ້ຂຽນໄດ້ຂໍ້ມູນຈາກນັກຂ່າວປ້ອງກັນຄວາມສະຫງົບ ທີ່ສຳພາດຫົວໜ້າກົມຄຸ້ມຄອງສຳມະໂນຄົວ ແລະ ກໍ່ສ້າງຮາກຖານ ກະຊວງປ້ອງກັນຄວາມສະຫງົບ ໃນວັນທີ 19 ກໍລະກົດ 2019 ຜ່ານມານີ້ເອງ ຈຶ່ງຮູ້ວ່າ: ຂໍ້ຕົກລົງຂອງລັດຖະມົນຕີກະຊວງ ປກສ ເລກທີ 1234/ປກສ, ລົງວັນທີ 24 ມິຖຸນາ 2019 ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ ໃນວຽກງານວິຊາສະເພາະຄຸ້ມຄອງສຳມະໂນຄົວ ແລະ ກໍ່ສ້າງຮາກຖານ. ໄດ້ກຳນົດຄ່າທຳນຽມ ແລະ ຄ່າບໍລິການ ຄື: ຄ່າບໍລິການຈົດທະບຽນສຳມະໂນຄົວໃຫ້ພົນລະເມືອງລາວ 5.000 ກີບຕໍ່ໜຶ່ງຊຸດ, ການຈົດທະບຽນສຳມະໂນຄົວຄົນຕ່າງດ້າວ 10.000 ກີບຕໍ່ໜຶ່ງຊຸດ, ການອອກບັດໃໝ່, ປ່ຽນ ແລະ ຕໍ່ບັດປະຈຳຕົວຂອງພົນລະເມືອງລາວ 2.000 ກີບຕໍ່ໜຶ່ງຊຸດ, ການອອກບັດໃໝ່, ປ່ຽນ ແລະ ຕໍ່ບັດປະຈຳຕົວຂອງພົນລະເມືອງຄົນຕ່າງດ້າວ 2.000 ກີບຕໍ່ໜຶ່ງຊຸດ, ການອະນຸຍາດຢູ່ລາວຖາວອນຂອງຄົນຕ່າງດ້າວແຕ່ອາຍຸ 15 ປີ-59 ປີ 100.000 ກີບຕໍ່ໜຶ່ງຊຸດ, ການຈົດທະບຽນຝາກເຊົ່າຊົ່ວຄາວຂອງພົນລະເມືອງລາວ ແລະ ຕ່າງດ້າວ 2.000 ກີບຕໍ່ໜຶ່ງຊຸດ, ຄ່າບໍລິການທະບຽນ ຂຶ້ນທະບຽນສຳມະໂນຄົວລາວ 45.000 ກີບຕໍ່ໜຶ່ງຊຸດ, ຄ່າບໍລິການທະບຽນຂຶ້ນທະບຽນສຳມະໂນຄົວຄົນຕ່າງດ້າວ 55.000 ກີບຕໍ່ໜຶ່ງຊຸດ, ຄ່າຄຳຮ້ອງຂໍອອກໃບຍົກຍ້າຍຂອງຄົນລາວ 5.000 ກີບຕໍ່ໜຶ່ງຊຸດ, ຄຳຮ້ອງຂໍອອກໃບຍົກຍ້າຍຄົນຕ່າງດ້າວ 10.000 ກີບຕໍ່ໜຶ່ງຊຸດ, ປຶ້ມທະບຽນປະຫວັດບຸກຄົນ 5.000 ກີບຕໍ່ໜຶ່ງຫົວ, ຄ່າປ່ຽນປຶ້ມສຳມະໂນຄົວໃໝ່ໃນກໍລະນີເສຍຫາຍ, ຈີກຂາດ, ເປິເປື້ອນ ແລະ ອື່ນໆ ສຳລັບຄົນລາວ 45.000 ກີບຕໍ່ໜຶ່ງຫົວ, ຄົນຕ່າງດ້າວ 55.000 ກີບຕໍ່ໜຶ່ງຫົວ, ຄ່າເອກະສານ ແລະ ບັດປະຈຳຕົວຄົນລາວ ຫຼື ຄົນຕ່າງດ້າວ 58.000 ກີບຕໍ່ໜຶ່ງຫົວ, ຄ່າໃບຢັ້ງຢືນບັດປະຈຳຕົວຊົ່ວຄາວຄົນລາວ ຫຼື ຄົນຕ່າງດ້າວ 6.000 ກີບ.

ສ່ວນໃນພາກຈັດຕັ້ງປະຕິບັດນັ້ນ ມີເພື່ອນຜູ້ອ່ານຈາກນະຄອນຫຼວງວຽງຈັນ ສ່ອງແສງມາວ່າ: ຢູ່ແຕ່ລະກອງບັນຊາການ ປກສ ເມືອງ ແຕ່ລະບ່ອນແມ່ນເກັບຄ່າບໍລິການເກີນຂໍ້ກຳນົດ ແລະ ຊັກຊ້າ ໂດຍສະເພາະການປ່ຽນປຶ້ມສຳມະໂນຄົວໃໝ່ ຕ້ອງໃຊ້ເວລາ 2-6 ເດືອນຈຶ່ງແລ້ວ.

ຕໍ່ບັນຫາດັ່ງກ່າວນີ້ ທາງການຈັດຕັ້ງກໍບໍ່ໄດ້ນິ້ງນອນໃຈ ໂດຍສະເພາະແມ່ນກົມກອງກ່ຽວຂ້ອງ ຊຶ່ງໃນບົດສຳພາດນັ້ນ ທ່ານຫົວໜ້າກົມຄຸ້ມຄອງສຳມະໂນຄົວ ແລະ ກໍ່ສ້າງຮາກຖານ ທ່ານ ພົນຈັດຕະວາ ຄຳສາຍ ຈັນທະວົງ ກ່າວວ່າ: ໃນໄລຍະຜ່ານມາສັງຄົມໄດ້ວິພາກວິຈານຕໍ່ກັບການເກັບຄ່າທຳນຽມ ແລະ ຄ່າບໍລິການຈົດທະບຽນຂຶ້ນສຳມະໂນຄົວ ແລະ ບັດປະຈຳຕົວ ທີ່ສູງເກີນໄປຂອງເຈົ້າໜ້າທີ່ວິຊາສະເພາະຈຳນວນໜຶ່ງ ຊຶ່ງເປັນການລະເມີດຕໍ່ລະບຽບກົດໝາຍ ແລະ ຂໍ້ຕົກລົງຕ່າງໆທີ່ໄດ້ກຳນົດໄວ້. ຕໍ່ກັບວຽກງານດັ່ງກ່າວນີ້ ກົມຄຸ້ມຄອງສຳມະໂນຄົວ ແລະ ກໍ່ສ້າງຮາກຖານ ໄດ້ລົງຕິດຕາມ, ກວດກາຢ່າງໃກ້ຊິດຕິດແທດ ແລະ ໄດ້ເອົາໃຈໃສ່ແກ້ໄຂຢ່າງຈິງຈັງ ໃນໄລຍະ

ຜ່ານມາ ພ້ອມທັງໄດ້ເຜີຍແຜ່ ແລະ ຊຸກຍູ້ການຈັດຕັ້ງປະຕິບັດຂໍ້ຕົກລົງຂອງລັດຖະມົນຕີກະຊວງ ປກສ ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ ໃນວຽກງານວິຊາສະເພາະຄຸ້ມຄອງສຳມະໂນຄົວ ແລະ ກໍ່ສ້າງຮາກຖານ ໃຫ້ພະນັກງານນັກຮົບທີ່ເຮັດວຽກງານດັ່ງກ່າວຢ່າງທົ່ວເຖິງ ໃນຂອບເຂດທົ່ວປະເທດ.

ເພື່ອແກ້ໄຂບັນຫາດັ່ງກ່າວຢ່າງຈິງຈັງ ຫົວໜ້າກົມຄຸ້ມຄອງສຳມະໂນຄົວ ແລະ ກໍ່ສ້າງຮາກຖານ ຢືນຢັນວ່າ: ຈະສືບຕໍ່ຊີ້ນຳກອງບັນຊາການ ປກສ ແຂວງ, ເມືອງ ໃນຂອບເຂດທົ່ວປະເທດ ຈັດຕັ້ງປະຕິບັດຂໍ້ກຳນົດກ່ຽວກັບການເກັບຄ່າທຳນຽມ ແລະ ຄ່າບໍລິການໃນວຽກງານຄຸ້ມຄອງສຳມະໂນຄົວ ແລະ ກໍ່ສ້າງຮາກຖານຢ່າງເຂັ້ມງວດ. ພ້ອມດຽວກັນນັ້ນ, ກໍຈະສົ່ງພະນັກງານລົງສືບສວນ, ຕິດຕາມ, ກວດກາການຈັດຕັ້ງປະຕິບັດດັ່ງກ່າວຢ່າງຕໍ່ເນື່ອງ ແລະ ເປັນປົກກະຕິ ຖ້າຫາກພົບເຫັນຍັງມີການເກັບຄ່າທຳນຽມ-ຄ່າບໍລິການສູງເກີນກຳນົດຈະໄດ້ມີມາດຕະການແກ້ໄຂຕໍ່ຜູ້ລະເມີດຢ່າງເດັດຂາດຕາມລະບຽບກົດໝາຍ.

ເລື່ອງນີ້ຂໍໃຫ້ສັງຄົມຈົ່ງເຊື່ອໝັ້ນການຈັດຕັ້ງ, ຄິດວ່າປະກົດການຫຍໍ້ທໍ້ຈະຖືກແກ້ໄຂ ແລະ ຕິຖອຍໄປເທື່ອລະກ້າວ, ເຄື່ອງມືທັນສະໄໝເຂົ້າໄປຍາມໃດລະແມ່ນປະກົດການຫາກິນນຳຊ່ອງຫວ່າງຈະຖືກອັດຕັນທັນທີ.

ຕົວຢ່າງ: **<u>ຫົວຂໍ້</u>: ບັນຫາເອກະສານໂປໂລໜ້າເຟສບຸ໊ກ.**

ເຄີຍຂຽນບັນຫານີ້ຫຼາຍເທື່ອ ຫຼ້າສຸດແມ່ນຂຽນໃນປີ 2014 ເພາະເຫັນເອກະສານຫຼຸດອອກມາຈາກສຳນັກງານສຳຄັນຂອງປະເທດ... ຕໍ່ມາກໍເຫັນເອກະສານຫຼຸດອອກມາ ເຊັ່ນ: ເອກະສານລົງວິໄນພະນັກງານຂອງບາງແຂວງ ແລະ ບາງກະຊວງ ກ່ອນທີ່ກະຊວງກ່ຽວຂ້ອງຈະມີການເຜີຍແຜ່.

ມາເດືອນ ກັນຍາ 2019 ນີ້ ປະກົດເຫັນບາງເອກະສານຫຼຸດອອກມາກ່ອນທີ່ທາງການຈະເຜີຍແຜ່ ຫຼື ບາງເອກະສານໃຊ້ເປັນຄວາມລັບລະຫວ່າງສຳນັກງານໜຶ່ງສົ່ງເຖິງອີກສຳນັກງານໜຶ່ງທີ່ພົວພັນເຖິງບັນຫາຄວາມໝັ້ນຄົງຂອງປະເທດຊາດກໍມີ, ເຫັນບັນຫານີ້ຕົກໃຈວ່າມັນອອກມາໄດ້ແນວໃດ? ເພາະມັນເປັນເລື່ອງອ່ອນໄຫວແລ້ວພາກສ່ວນກ່ຽວຂ້ອງຄືເຮັດເສີຍຢູ່.

ຕາມລົມກັນກັບຫຼາຍຄົນໃນວົງການສື່ມວນຊົນ ຕ່າງກໍສະແດງຄວາມເປັນຫວ່ງ ເພາະບາງເທື່ອສື່ທາງການຍັງບໍ່ໄດ້ຮັບຂໍ້ມູນ ແຕ່ຢູ່ໜ້າເຟສບຸ໊ກຂໍ້ມູນເຫຼົ່ານັ້ນມັນໂປໂລອອກແລ້ວ. ແລ້ວຊິເຮັດແນວໃດ? ເພາະໃນຄວາມເປັນຈິງເວລານັກຂ່າວສະເໜີຂ່າວທີ່ມີຂໍ້ມູນບໍ່ຊັດເຈນ ຫຼື ຂໍ້ມູນບອບບາງແຕະພຸ້ນຕຳພີ້ກໍມັກຖືກທ້ວງຈາກບາງພາກ ສ່ວນກ່ຽວຂ້ອງ ວ່າບໍ່ເໝາະບໍ່ສົມຄວນທີ່ຈະຂຽນອອກ. ສະນັ້ນ, ຈຶ່ງຕັ້ງເປັນບັນຫາວ່າຄວນປາບການນຳເອົາເອກະ ສານສຳຄັນ Post ຂຶ້ນໜ້າ Face Book ຫຼື ບໍ່?

ວິທີຂອງມັນແມ່ນໃຫ້ອົງການຄຸ້ມຄອງເບິ່ງຄືນວ່າ ໃຜເປັນຜູ້ Post ຂຶ້ນ? ຜູ້ຮູ້ ແລະ ກຳຂໍ້ມູນຂອງເອກະສານນັ້ນມີໃຜແດ່? ແນ່ນອນບໍ່ພາດສາຍຕາຂອງອົງການກ່ຽວຂ້ອງໄດ້? ຮູ້ແລ້ວກໍສົ່ງຂ່າວຫາອົງການກ່ຽວຂ້ອງ ວ່າຂໍ້ ມູນ Post ນັ້ນແມ່ນມາຈາກພາກສ່ວນຜູ້ໃດ? ຕໍ່ຈາກນັ້ນ ຈະດຳເນີນການສຶກສາອົບຮົມ ແລະ ດຳເນີນການລົງວິໄນຕາມລະບຽບກົດໝາຍ.

ສັງຄົມສັບສົນ ແລະ ຕັ້ງບັນຫາເລື່ອງເອກະສານ ເພາະບາງເທື່ອເປັນຫຍັງຈຶ່ງມາເປີດເຜີຍໃນໜ້າ Face Book .

ທີ່ນຳສະເໜີບັນຫານີ້ ເພາະເປັນຫວ່ງຫາກບໍ່ແມ່ນເຈາະຈົ້ມຫຍັງດອກ! ຢ່າລືມວ່າການຫັນປ່ຽນໂດຍສັນຕິນັ້ນມັນເລີ່ມຈາກພາຍໃນພວກເອງ.

## ຕົວຢ່າງ ຫົວຂໍ້: ຄວາມສຳຄັນຂອງການຫຸ້ມຫໍ່.

ຫົວຂໍ້ບົດນີ້ເພື່ອຜູ້ອ່ານອາດປະຫຼາດໃຈວ່າ: ຊິຂຽນເລື່ອງຫຍັງກັນນໍ? ບາງທ່ານອາດຈະນຶກເຖິງສິນຄ້າ ເພາະດຽວນີ້ການແຂ່ງຂັນໃນທ້ອງຕະຫຼາດສູງຫຼາຍ...ໃຜຫຸ້ມຫໍ່ດີມີຈຸດເດັ່ນດຶງດູດລູກຄ້າກໍເປັນທີ່ນິຍົມ...ເປັນຈຸດ ສົນໃຈ...?.

ການຫຸ້ມຫໍ່ທີ່ຈະເວົ້າເຖິງໃນທີ່ນີ້ ແມ່ນການຫຸ້ມຫໍ່ເຄື່ອງຊ່ວຍເຫຼືອໃນຍາມເກີດໄພພິບັດທີ່ບໍ່ເພິ່ງປາຖະໜາ ເປັນຕົ້ນແມ່ນ: ໄຟໄໝ້ ຫຼື ນໍ້າຖ້ວມ.

ຫາກທ່ານເປັນຜູ້ສັງເກດຈະເຫັນວ່າ ເຄື່ອງຊ່ວຍເຫຼືອປະເພດໝີ່, ປາກະປ໋ອງ, ເຂົ້າສານ, ອາຫານແຫ້ງ ຫຼື ຢາປິ່ນປົວພະຍາດຕ່າງໆນັ້ນ ລ້ວນແຕ່ແມ່ນສິນຄ້ານຳເຂົ້າຈາກຕ່າງປະເທດ... ຄັນແມ່ນບໍ່ມີການຫຸ້ມຫໍ່ຈະເຫັນວ່າ ເປັນການໂຄສະນາສິນຄ້າໃຫ້ແກ່ເຂົາຢ່າງບໍ່ນຶກບໍ່ຝັນ... ກົງກັນຂ້າມກັບນະໂຍບາຍສົ່ງເສີມການຜະລິດພາຍໃນທີ່ ພວກເຮົາຕັ້ງເປັນບັນຫາກັນຢູ່... ຫາກວ່າພວກເຮົານຳເອົາສິນຄ້າພາຍໃນໄປຊ່ວຍເຫຼືອກັນຈະດີບໍ? ນີ້ແມ່ນບັນຫາ ທີ່ຫຼາຍຝ່າຍຕັ້ງຂຶ້ນ? ຜະລິດຕະພັນພາຍໃນຂອງເຮົາ ເປັນຕົ້ນຢາປິ່ນປົວພະຍາດມີຫຼາຍຊະນິດທຽບເທົ່າຄຸນນະພາບ ສາກົນເປັນຕົ້ນຢາດີຖອກທ້ອງ, ດີເຈັບຫົວ, ຢາດົມ... ສ່ວນອາຫານການກິນປະເພດແຈ່ວ, ຊີ້ນແຫ້ງ-ປາຕາຍ ຄິດ ວ່າເໝາະສົມກັບຄົນລາວ ໄປຄຽງຄູ່ກັບຖົງເຂົ້າສານໜຽວ ຫຼື ເຂົ້າສານຈ້າວ.

ເວົ້າເລື່ອງເຄື່ອງຊ່ວຍເຫຼືອນີ້ ຕ່າງປະເທດເຂົາຖືສຳຄັນ ເລື່ອງຫຸ້ມຫໍ່ ໂດຍສະເພາະແມ່ນລະດັບການນຳ, ຄົນ ມີຊື່ສຽງເຂົາຈະມີການໃສ່ຖົງຄັກແນ່? ມີຕົວໜັງສືບອກທີ່ໄປທີ່ມາຂອງອົງການຊ່ວຍເຫຼືອ.

ທີ່ຍົກເລື່ອງຜະລິດຕະພັນພາຍໃນນີ້ກໍຍ້ອນວ່າ ເຮົາມີນະໂຍບາຍສົ່ງເສີມການຜະລິດພາຍໃນ ແຕ່ໃນພາກ ປະຕິບັດຕົວຈິງເຮົາຊໍ້າພັດນິຍົມແຕ່ສິນຄ້າຕ່າງປະເທດ ມັນກໍຈະເປັນການສວນທາງກັນເທົ່ານັ້ນຕີ໋? ບໍ່ເທົ່ານັ້ນມັນ ຍັງສະແດງໃຫ້ເຫັນເຖິງຈິດສຳນຶກຂອງຜູ້ຄົນທີ່ມີຕໍ່ປະເທດຊາດ-ບ້ານເມືອງ, ເຫັນບໍ່ອັດຕາແລກປ່ຽນຖີບຕົວສູງຂຶ້ນ ຫວ່າງແລ້ວນີ້ ກໍມີເຫດຜົນຈາກການທີ່ຄົນເຮົາເຮີ່ສິນຄ້າຕ່າງປະເທດໂພດ, ທັງໆທີ່ບາງອັນເຮົາສາມາດຜະລິດຢູ່ພາຍ ໃນ... ຄຸນນະພາບກໍບໍ່ຕໍ່າຕ້ອຍທຽບໃສ່ຕ່າງປະເທດ.

ຜູ້ປະສົບກັບຕົວຈິງເລື່ອງເຄື່ອງຊ່ວຍເຫຼືອກັບການຫຸ້ມຫໍ່ນີ້ແມ່ນນັກຂ່າວພວກເຮົາ ເພາະເວລາບັນທຶກຂໍ້ ມູນລາຍງານຮູບພາບຫາກບໍ່ມີການຫຸ້ມຫໍ່ແລ້ວ ຈະແນມເຫັນສິນຄ້າຢ່າງຈະແຈ້ງ ສໍ່າກັບວ່າໄປເຮັດໂຄສະນາສິນຄ້າ ໃຫ້ເຂົາຢ່າງຈະແຈ້ງ...

ເວົ້າເລື່ອງການຊ່ວຍເຫຼືອຍາມເກີດໄພພິບັດດີທັງນັ້ນ ຈະຫຸ້ມ ຫຼື ບໍ່ກໍດີ ແຕ່ທີ່ຍົກຂຶ້ນມາແລກປ່ຽນນີ້ແມ່ນ ຢາກເວົ້າໃນກໍລະນີລະດັບການຊ່ວຍເຫຼືອມີມູນຄ່າສູງ, ມີເຄື່ອງຫຼາຍ, ມີຜູ້ສຳຄັນ, ຜູ້ມີຊື່ສຽງເຂົ້າຮ່ວມໃນເຫດການ ນັ້ນ? ເລື່ອງເບິ່ງຄືນ້ອຍແຕ່ມັນຍິ່ງໃຫຍ່ຫາກເວົ້າເຖິງຄວາມເປັນຊາດ...?.

### ຄຳຖາມຄົ້ນຄວ້າ

1. ຢາກຂຽນບົດຕຳນິໄດ້ດີຕ້ອງກຳໄດ້ບັນຫາຫຍັງແດ່?.
2. ຂຽນບົດຕຳນິຕ້ອງຍຶດໝັ້ນຫັດສະນະຂອງພັກຄືແນວໃດ?.

# ບົດທີ 8

# ການຂຽນບົດລົງພິມໃນວາລະສານໂຄສະນາ.

## I. ຈຸດປະສົງ-ລະດັບຄາດໝາຍ.

**+ ຈຸດປະສົງ:** ເພື່ອໃຫ້ນັກສຶກສາກຳໄດ້ປະເພດບົດຕ່າງໆທີ່ສຳຄັນລົງພິມໃນວາລະສານໂຄສະນາໃນແຕ່ລະສະບັບ.

**+ ລະດັບຄາດໝາຍ:** ພາຍຫຼັງຮຽນບົດນີ້ແລ້ວ ຈະຊ່ວຍໃຫ້ນັກສຶກສາຮູ້ຈຸດພິເສດຂອງບັນດາບົດເຫຼົ່ານັ້ນ ທັງເປັນການທວນຄືນບົດຕ່າງໆທີ່ໄດ້ຮຽນຜ່ານມາ; ພ້ອມກັນນັ້ນ ກໍຊ່ວຍໃຫ້ນັກສຶກສາຮູ້ວິທີຂຽນບົດທີ່ຖືກ ຕ້ອງຕາມໂຄງສ້າງລົງພິມໃນວາລະສານໂຄສະນາ.

## II. ທີ່ຕັ້ງ, ພາລະບົດບາດຂອງວາລະສານໂຄສະນາ.

ຄະນະບັນນາທິການວາລະສານໂຄສະນາ ມີຖານະເທົ່າກັບບັນດາກົມທີ່ສັງກັດຢູ່ຄະນະໂຄສະນາອົບຮົມສູນກາງພັກ; ປະຕິບັດພາລະບົດບາດເປັນເສນາທິການຊ່ວຍຄະນະໂຄສະນອົບຮົມສູນກາງພັກ ໃນການໂຄສະນາເຜີຍແຜ່ ແລະ ອະທິບາຍແນວທາງນະໂຍບາຍຂອງພັກ ແລະ ທິດທາງຈຸດສຸມຂອງລັດ, ກົດໝາຍ, ນິຕິກຳຕ່າງໆ ກໍຄື ແຜນການ, ແຜນງານຂອງລັດ; ເຜີຍແຜ່ຂໍ້ມູນຂ່າວສານອັນເປັນປະໂຫຍດຢູ່ພາຍໃນ ແລະ ຕ່າງປະເທດໃຫ້ແກ່ຜູ້ທີ່ເຮັດວຽກງານການເມືອງ-ແນວຄິດຢູ່ຂັ້ນທ້ອງຖິ່ນ, ເຜີຍແຜ່ບົດຮຽນ, ຕົວແບບດ້ານຕ່າງໆພ້ອມທັງຕຳນິວິ ຈານສິ່ງຫຍໍ້ທໍ້ທີ່ເກີດຂຶ້ນໃນສັງຄົມ.

## III. ບັນດາບົດທີ່ລົງພິມໃນວາລະສານໂຄສະນາ.

ໃນວາລະສານໂຄສະນາແຕ່ລະສະບັບຈະມີຄໍລຳຕ່າງໆ ດັ່ງນີ້:

**ຄໍລຳໃຫຍ່ ມີ 5 ຫົວຂໍ້ ຄື:**

1. ເຂົ້າໃຈມະຕິກອງປະຊຸມໃຫຍ່ຂອງພັກ ແລະ ໂຄສະນາວັນສຳຄັນຕ່າງໆຂອງຊາດ, ສາກົນ.
2. ໂຄສະນາເຜີຍແຜ່ແນວທາງ ແລະ ການຈັດຕັ້ງປະຕິບັດແນວທາງນະໂຍບາຍຂອງພັກ-ລັດ.
3. ວຽກດີຄົນເດັ່ນ; ໜ່ວຍພັກແຂງ-ຮູ້ນຳພາຮອບດ້ານ; ຄອບຄົວຕົວແບບ.
4. ປະມວນເຫດການເດັ່ນທາງພາຍໃນ ແລະ ຕ່າງປະເທດ.
5. ໂຄສະນາແບບແຜນດຳລົງຊີວິດທີ່ດີງາມ ແລະ ຕຳນິວິຈານສິ່ງຫຍໍ້ທໍ້.

**ຄໍລຳນ້ອຍ ປະກອບມີ 6 ຫົວຂໍ້ ຄື:**

1. ຄວາມຮູ້ພື້ນຖານໃນວຽກງານໂຄສະນາ.
2. ແລກປ່ຽນທັດສະນະ.
3. ສາລະໜ້າຮູ້.
4. ວັນນະກຳສ້າງສັນ.
5. ເບິ່ງໂລກກວ້າງ.
6. ກາຕູນສຽດສີສັງຄົມ.

## IV. ບັນດາຫົວບົດທີ່ສຳຄັນ.

1. ຄໍລຳເຂົ້າໃຈມະຕິກອງປະຊຸມໃຫຍ່ຂອງພັກ ແລະ ໂຄສະນາວັນສຳຄັນຕ່າງໆຂອງຊາດ, ສາກົນ. ໃນຄໍລຳນີ້ ບົດຈະຂຽນແບບບົດນຳ (ເບິ່ງລາຍລະອຽດວິທີຂຽນບົດນຳ).

ຍົກຕົວຢ່າງ:

- ບົດຂຽນກ່ຽວກັບເຂົ້າໃຈມະຕິຂອງພັກ.

- ບົດຂຽນກ່ຽວກັບວັນສຳຄັນຂອງຊາດ.

- ບົດຂຽນກ່ຽວກັບວັນສຳຄັນສາກົນ.

2. ໃນຄໍລຳໂຄສະນາເຜີຍແຜ່ແນວທາງ ແລະ ການຈັດຕັ້ງປະຕິບັດແນວທາງນະໂຍບາຍຂອງພັກ-ລັດ. ໃນຄໍລຳນີ້ ບົດຈະຂຽນແບບບົດສະເໜີ (ເບິ່ງລາຍລະອຽດໃນການຂຽນບົດສະເໜີ).

ຍົກຕົວຢ່າງ:

- ບົດຂຽນໃຊ້ເອກະສານ.

- ບົດຂຽນໄປເຫັນດ້ວຍຕົນເອງ (ລົງເກັບກຳຂໍ້ມູນ).

3. ຄໍລຳວຽກດີຄົນເດັ່ນ; ໜ່ວຍພັກ ເຂັ້ມແຂງ; ປອດໃສ; ໜັກແໜ້ນ; ຄອບຄົວຕົວແບບ. ບົດນີ້ຈະຂຽນຄືບົດສະເໜີ ແຕ່ເອກະລັກສະເພາະ.

ຍົກຕົວຢ່າງ:

- ບົດວຽກດີ-ຄົນເດັ່ນ.

- ບົດໜ່ວຍພັກເຂັ້ມແຂງ; ປອດໃສ; ໜັກແໜ້ນ.

- ບົດຄອບຄົວຕົວແບບໃນການປູກ-ການລ້ຽງ.

4. ເບິ່ງໂລກກວ້າງ+ແລກປ່ຽນທັດສະນະ. ໃນຄໍລຳນີ້ບົດຂຽນແບບບົດຄວາມ ແລະ ບົດວິຈານ (ເບິ່ງລາຍລະອຽດການຂຽນບົດຄວາມ ແລະ ບົດວິຈານ).

ຍົກຕົວຢ່າງ:

- ບົດຄວາມ.

- ບົດວິຈານ.

## V. ຢາກຂຽນບົດໃຫ້ໄດ້ດີຕ້ອງເຮັດຫຍັງແດ່?.

- ຊອກຂໍ້ມູນຈາກເອກະສານ.

- ຊອກຂໍ້ມູນຈາກພຶດຕິກຳຕົວຈິງ (ລົງເກັບກຳຂໍ້ມູນ).

- ສ້າງໂຄງຮ່າງຂອງບົດແລ້ວຈຶ່ງຂຽນ.

- ຂຽນແລ້ວຕ້ອງເຮັດໜ້າທີ່ບັນນາທິການດ້ວຍຕົນເອງ.

## VI. ຮູ້ຖອດຖອນບົດຮຽນຈາກຄະນະບັນນາທິການ.

- ວຽກນີ້ສຳຄັນຫຼາຍ ເພາະຜູ້ຂຽນບໍ່ສາມາດກຳໄດ້ຢ່າງກວ້າງຂວາງກ່ຽວກັບແນວທາງຂອງພັກ-ລັດ ໂດຍສະເພາະບັນຫາກ່ຽວກັບການເມືອງ-ແນວຄິດ; ມະຕິສຳຄັນຂອງພັກໃນວຽກງານສະເພາະດ້ານ; ເທົ່າກັບຜູ້ເປັນບັນນາທິການ.

- ບັນນາທິການເປັນຜູ້ມີປະສົບການ; ເຮັດວຽກມາຫຼາຍປີ; ເປັນຜູ້ຊຳນານວຽກ.

- ບັນນາທິການເປັນພໍ່ຄົວໃຫຍ່ໃນວຽກງານວາລະສານ.

### ຄຳຖາມຄົ້ນຄວ້າ.

1. ວາລະສານໂຄສະນາແມ່ນວາລະສານແນວໃດ? ມີພາລະບົດບາດແນວໃດ?.

2. ບັນດາບົດລົງພິມໃນວາລະສານໂຄສະນາແມ່ນບົດແນວໃດ? ແລະ ຢາກຂຽນບົດໃຫ້ໄດ້ດີຈະຕ້ອງເຮັດແນວໃດ?.

# ບົດທີ 9

# ການຂຽນບົດລົງໃນວາລະສານອະລຸນໃໝ່.

ວາລະສານອະລຸນໃໝ່ ເປັນວາລະສານທິດສະດີ ແລະ ການເມືອງຂອງພັກ, ໜ້າທີ່ຕົ້ນຕໍແມ່ນຄົ້ນຄວ້າຂຽນບົດ, ບັນນາທິການ, ແປ ແລະ ຮຽບຮຽງບົດ ເພື່ອໂຄສະນາເຜີຍແຜ່ບັນດາທັດສະນະ, ແນວທາງແຜນນະໂຍ ບາຍດ້ານຕ່າງໆຂອງພັກ ແລະ ລະບຽບກົດໝາຍຂອງລັດໃຫ້ແກ່ພະນັກງານ, ສະມາຊິກພັກ ແລະ ປະຊາຊົນບັນດາ ເຜົ່າຢ່າງກວ້າງຂວາງ, ສະເໜີບົດຮຽນ, ຜົນສຳເລັດອັນພົ້ນເດັ່ນຂອງບັນດາປະເທດອ້າຍນ້ອງ ແລະ ເພື່ອນມິດສາ ກົນ, ປະກອບສ່ວນໃນການສະຫຼຸບສັງລວມພຶດຕິກຳ-ບົດຮຽນໃນດ້ານຕ່າງໆ ເພື່ອປັບປຸງບູລະນະແນວທາງແຜນນະ ໂຍບາຍຂອງພັກ.

ວາລະສານອະລຸນໃໝ່ ກໍຄື ສື່ສິ່ງພິມອື່ນໆ ເປັນກະບອກສຽງຂອງພັກ, ຂອງລັດ, ເປັນສາຍໄຍຜູກພັນມະຫາຊົນກັບພັກ-ລັດ, ເປັນເວທີໃຫ້ມະຫາຊົນສະແດງຄວາມຄິດເຫັນ, ທັດສະນະອັນສ້າງສັນກ່ຽວກັບການນຳພາຂອງພັກ ແລະ ການຄຸ້ມຄອງຂອງລັດເຮົາ, ທັງປະກອບສ່ວນໃຫ້ປະຊາຊົນລາວບັນດາເຜົ່າປະຕິບັດສິດໄດ້ຮັບຂ່າວ ສານ ແລະ ສິດໄດ້ຖະແຫຼງຂ່າວຂອງຕົນ.

ສະນັ້ນ, ການຂຽນບົດລົງໃນວາລະສານອະລຸນໃໝ່ ກ່ອນອື່ນໝົດ ຜູ້ທີ່ຈະຂຽນບົດຕ້ອງຊອກຮູ້ກ່ຽວກັບພາລະບົດບາດ, ໜ້າທີ່, ຈຸດພິເສດ ແລະ ຄວາມສຳຄັນຂອງວາລະສານອະລຸນໃໝ່ ດັ່ງທີ່ກ່າວມາຂ້າງເທິງທັງຈຳແນກໄດ້ຄວາມແຕກຕ່າງລະຫວ່າງວາລະສານນີ້ກັບວາລະສານອື່ນຢູ່ບ່ອນໃດ, ກຳໄດ້ຄວາມຮຽກຮ້ອງຕ້ອງການຂອງວາ ລະສານອະລຸນໃໝ່ ຕໍ່ຮູບການ ແລະ ເນື້ອໃນບົດປະເພດຕ່າງໆ ທີ່ພິມລົງໃນໜ້າວາລະສານ.

## I. ບັນດາປະເພດບົດທີ່ພິມລົງໃນວາລະສານ.

ບົດທີ່ລົງພິມໃນວາລະສານອະລຸນໃໝ່ ປະກອບມີບົດປະເພດຕ່າງໆ ກ່ຽວກັບຂົງເຂດການເມືອງ-ແນວຄິດ-ທິດສະດີ, ພັກ-ພະນັກງານ, ລັດ ແລະ ກົດໝາຍ, ເສດຖະກິດ, ວັດທະນະທຳ-ສັງຄົມ, ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ວຽກງານຕ່າງປະເທດ ແລະ ສາລະໜ້າຮູ້ຕ່າງໆທັງພາຍໃນ ແລະ ຕ່າງປະເທດ ເຊິ່ງມີບັນດາປະເພດບົດເຊັ່ນ:

1. ບົດຂອງການນຳ (ສູນກາງ, ທ້ອງຖິ່ນ).
2. ບົດກ່ຽວກັບເຫດການສຳຄັນຂອງຊາດ, ຂອງພັກ, ຂອງຜູ້ນຳ.
3. ບົດນຳ.
4. ບົດຄວາມ.
5. ບົດວິຈານ.
6. ບົດສະເໜີ.
7. ບົດຄົ້ນຄວ້າ ແລະ ບົດອື່ນໆ.

### ✱ ການຂຽນບົດນຳ.

ບົດນຳວາລະສານອະລຸນໃໝ່ ເປັນບົດກ່ຽວກັບບັນຫາສຳຄັນ, ເຫດການສຳຄັນຂອງຊາດ, ຂອງພັກ, ບັນຫາພົ້ນເດັ່ນຕ່າງໆ ໃນແຕ່ລະໄລຍະກ່ຽວກັບຫຼາຍຂົງເຂດຊີວິດສັງຄົມ, ປະກອບສ່ວນໃນການຊີ້ນຳວຽກງານ, ຊີ້ນຳແນວຄິດ, ແນະນຳຄວາມຮູ້ ແລະ ການກະທຳຂອງທຸກຄົນໃຫ້ຖືກຕ້ອງ. ການຂຽນບົດນຳລົງພິມໃນວາລະສານຕ້ອງເອົາໃຈໃສ່ບາງບັນຫາ ດັ່ງນີ້:

- ເລືອກບັນຫາ ເພື່ອຂຽນເປັນບົດນຳໃຫ້ຖືກກັບກາລະເວລາ ຫຼື ເຫດການທີ່ກຳລັງຈະເກີດຂຶ້ນໃນຕໍ່ໜ້າໄລຍະມໍ່ໆນີ້ (ເພາະວ່າວາລະສານພິມສະບັບລາຍເດືອນ).

- ສ້າງໂຄງຮ່າງບົດ ຫຼື ໂຄງປະກອບບົດຈະເວົ້າອັນໃດກ່ອນ, ອັນໃດນຳຫຼັງ. ການຂຽນບົດນຳແມ່ນໃຫ້ເຂົ້າບັນຫາໂດຍກົງເພື່ອໃຫ້ບົດຂຽນສັ້ນ, ກະທັດຮັດ ແລະ ແໜ້ນແຟ້ນ. ຂຽນກ່ຽວກັບບັນຫາໃດ, ເຫດການໃດກໍຕ້ອງໃຫ້ຖືກກັບແນວທາງ, ທັດສະນະຂອງພັກ ແລະ ລັດຕໍ່ກັບບັນຫາ ແລະ ເຫດການດັ່ງກ່າວ, ບາງບັນຫາຍັງຕ້ອງມີລັກສະນະທິດສະດີຕື່ມອີກ ເພື່ອເປັນບ່ອນອີງວິທະຍາສາດໃນການອະທິບາຍ.

- ຂຽນຕ້ອງລົງເລິກບັນຫາ, ຕ້ອງເວົ້າເຖິງ ແລະ ອະທິບາຍບັນຫາທີ່ເປັນພື້ນຖານ ເພື່ອຊີ້ນຳ, ຍົກສູງຄວາມຮັບຮູ້ ແລະ ຊີ້ແນະບັນດາວຽກງານອັນຮີບດ່ວນທີ່ຕ້ອງໄດ້ເຮັດ, ຍົກບາງຮູບການ, ວິທີການ ແລະ ມາດຕະການໃນການຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນສຳເລັດ.

**✱ ການຂຽນບົດຄວາມ.**

ກ່ອນອື່ນໝົດແມ່ນກຳນົດຫົວບົດ ຫຼື ບັນຫາທີ່ຈະຂຽນ ແລະ ມີການຂຶ້ນໂຄງຮ່າງບົດ.

- ໃນບົດຕ້ອງມີການຕັ້ງບັນຫາ ແລະ ແກ້ໄຂບັນຫາ. ການແກ້ໄຂບັນຫາຕ້ອງມີລັກສະນະສົມສ່ວນລະຫວ່າງທິດສະດີ ແລະ ພຶດຕິກຳ.

- ກຳນົດບັນຫາຕົ້ນຕໍ ຫຼື ໃຈຄວາມຂອງບົດທີ່ຈະຂຽນ, ກຳນົດພື້ນຖານບ່ອນອີງ, ຈັດວາງບັນຫາໃຫ້ເກາະກ່າຍ, ໃຊ້ຄຳສັບສຳນວນທີ່ຈະແຈ້ງ, ຖືກຫຼັກໄວຍະກອນ...

- ບົດຄວາມ ແຕ່ລະບົດຕ້ອງມີທັງລັກສະນະທິດສະດີການເມືອງ ແລະ ພຶດຕິກຳຕົວຈິງເພື່ອພິສູດ ເຮັດໃຫ້ທິດສະດີກະຈ່າງແຈ້ງຂຶ້ນ.

- ບົດຄວາມຕ້ອງຢືນຢັນບັນດາທ່າອ່ຽງ ແລະ ການກະທຳ ຫຼື ພຶດຕິກຳທີ່ຖືກຕ້ອງ, ຕຳນິວິຈານຢ່າງມີເຫດ, ຜົນ ແລະ ມີບ່ອນອີງຕໍ່ທ່າອ່ຽງທີ່ບໍ່ດີ. ສະນັ້ນ, ຜູ້ຂຽນຕ້ອງມີພື້ນຖານຄວາມຮູ້ດ້ານທິດສະດີ, ກຳແໜ້ນແນວທາງນະໂຍບາຍ ແລະ ອື່ນໆ ເພື່ອສາມາດຈຳແນກບັນຫາ, ຮູ້ສັງເກດ ແລະ ສະຫຼຸບຕີລາຄາບັນຫາໄດ້ຢ່າງຖືກຕ້ອງ.

- ຊອກວິທີການແກ້ໄຂບັນຫາຢ່າງມີໂລຊິກ, ສົມເຫດ, ສົມຜົນ, ໜັກແໜ້ນສອດຄ່ອງກັບແນວທາງນະໂຍບາຍຂອງພັກ-ລັດ.

## II. ການເລືອກຫົວບົດ.

ວາລະສານອະລຸນໃໝ່ ມີຫົວບົດຕົ້ນຕໍ ແລະ ຫົວບົດສຳຮອງທີ່ຈັດຕັ້ງການຂຽນຢູ່ພາຍໃນ ຫຼື ສະເໜີເພື່ອນຮ່ວມງານພາຍນອກຂຽນໃຫ້. ນອກຈາກນັ້ນ ຍັງໄດ້ຮັບປະເພດບົດຫຼາກຫຼາຍຈາກພາຍນອກ. ສະນັ້ນ, ການເລືອກຫົວບົດໃຫ້ເໝາະສົມກັບເຫດການສຳຄັນ ແລະ ໄລຍະເວລາການອອກວາລະສານໃນແຕ່ລະເດືອນມີຄວາມສຳຄັນເປັນຢ່າງຍິ່ງ.

### 1. ວິທີເລືອກຫົວບົດ.

ການເລືອກຫົວບົດລົງພິມໃນວາລະສານແຕ່ລະສະບັບ ກ່ອນອື່ນໝົດແມ່ນອີງໃສ່ບາງເງື່ອນໄຂຕົ້ນຕໍ ຄື: ໂຄງຮ່າງຫົວບົດປະຈຳປີ; ເຫດການສຳຄັນໃນໄລຍະເວລາອອກວາລະສານ; ບົດໃໝ່ (ບົດບໍ່ເຄີຍລົງວາລະສານໃດມາກ່ອນ); ບົດລົງເລິກຂະແໜງການໃດໜຶ່ງ; ບົດເຜີຍແຜ່ໜໍ່ແໜງປັດໄຈໃໝ່; ບົດສະເໜີຕ້ານສິ່ງຫຍໍ້ທໍ້; ບົດສາລະໜ້າຮູ້ໃນດ້ານຕ່າງໆຢູ່ພາຍໃນ ແລະ ຕ່າງປະເທດ; ບົດກ່ຽວກັບພຶດຕິກຳ-ບົດຮຽນທ້ອງຖິ່ນ, ພຶດຕິກຳ-ບົດຮຽນຕ່າງ ປະເທດ.

### 2. ບັນດາຄໍລຳຂອງວາລະສານ.

ວາລະສານແຕ່ລະສະບັບປະກອບດ້ວຍບົດຂຽນປະເພດຕ່າງໆ ກວມເອົາຫຼາຍຊິ່ງເຂດດັ່ງກ່າວມາຂ້າງເທິງໂດຍໄດ້ຈັດເຂົ້າຢູ່ໃນຄໍລຳປະຈຳ ແລະ ຄໍລຳບໍ່ປະຈຳ ຊຶ່ງເປັນບ່ອນອີງໜຶ່ງໃຫ້ແກ່ການເລືອກບົດລົງໃນວາລະສານແຕ່ລະສະບັບ.

**- ຄໍລຳປະຈຳ:** ຄໍລຳປະຈຳປະກອບມີບັນດາຄໍລຳຄື: ພັກ-ພະນັກງານ, ການເມືອງ, ລັດ ແລະ ກົດໝາຍ, ເສດຖະກິດ, ວັດທະນະທຳ-ສັງຄົມ, ຕ່າງປະເທດ, ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ອີງການແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ພຶດຕິກຳ ແລະ ບົດຮຽນທ້ອງຖິ່ນ, ຄົ້ນຄວ້າແລກປ່ຽນຄວາມເຫັນ, ຊອກຮູ້ບົດຮຽນ, ຜ່ານວາລະສານ ແລະ ໜັງສືພິມຕ່າງປະເທດ.

**- ຄໍລຳບໍ່ປະຈຳ:** ແມ່ນຄໍລຳທີ່ອຸທິດໃຫ້ແກ່ເຫດການສຳຄັນຂອງຊາດ, ຂອງພັກ, ຂອງຜູ້ນຳ, ຂອງບັນດາປະ ເທດສັງຄົມນິຍົມ ແລະ ຂອງບັນດາປະເທດເພື່ອນມິດສາກົນ.

ການອອກວາລະສານແຕ່ລະສະບັບຈະປະກອບດ້ວຍບັນດາບົດຂອງການນຳ, ພ້ອມກັນນັ້ນ ກໍພະຍາຍາມຈັດໃຫ້ມີຢ່າງໜ້ອຍ 5 ບົດຈາກຄໍລຳປະຈຳ ແລະ ບໍ່ປະຈຳ. ໝາຍຄວາມວ່າ ການພິມວາລະສານແຕ່ລະສະບັບໄດ້ຖືເອົາຈຳນວນຄໍລຳ ແລະ ຈຳນວນໜ້າເນື້ອໃນເປັນຫຼັກຄືບໍ່ໃຫ້ຫຼຸດ 60 ໜ້າພິມໃນວາລະສານ.

ວາລະສານອະລຸນໃໝ່ເລືອກບົດໂດຍຜ່ານພະແນກບັນນາທິການ ຊຶ່ງຮັບຜິດຊອບຄໍລຳໂດຍກົງ. ບັນດາພະແນກບັນນາທິການລວມມີ:

①. **ພະແນກບັນນາທິການການເມືອງ** ຮັບຜິດຊອບຄໍລຳກ່ຽວກັບແນວຄິດ-ທິດສະດີ, ການເມືອງ, ພັກ-ພະນັກງານ, ລັດ ແລະ ກົດໝາຍ, ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ອົງການແນວໂຮມ, ອົງການຈັດຕັ້ງມະຫາຊົນ.

②. **ພະແນກບັນນາທິການເສດຖະກິດ** ຮັບຜິດຊອບຄໍລຳກ່ຽວກັບຂົງເຂດເສດຖະກິດໂດຍລວມ.

③. **ພະແນກບັນນາທິການວັດທະນະທຳ-ສັງຄົມ** ຮັບຜິດຊອບຄໍລຳກ່ຽວກັບຂົງເຂດວັດທະນະທຳ-ສັງຄົມໂດຍລວມ.

④. **ພະແນກບັນນາທິການຕ່າງປະເທດ** ຮັບຜິດຊອບຄໍລຳກ່ຽວກັບຂົງເຂດແນວທາງ, ນະໂຍບາຍຕ່າງປະເທດຂອງພັກ, ຂອງລັດເຮົາ ກໍຄື ບັນດາບົດຮຽນ, ຜົນສຳເລັດອັນພົ້ນເດັ່ນໃນດ້ານຕ່າງໆຂອງປະເທດເພື່ອນມິດ.

## III. ການຂຽນບົດໃຫ້ວາລະສານອະລຸນໃໝ່.

### 1. ບາງຈຸດທີ່ຄວນເອົາໃຈໃສ່ໃນການຂຽນບົດໃຫ້ວາລະສານ.

ນອກຈາກກຳແໜ້ນພາລະບົດບາດ, ຄວາມຮຽກຮ້ອງຕ້ອງການ ແລະ ຈຸດພິເສດຂອງວາລະສານອະລຸນໃໝ່ ແລ້ວ ການຂຽນແຕ່ລະບົດຕ້ອງຮູ້ເລືອກບັນຫາ, ເລືອກຫົວຂໍ້ທີ່ແທດເໝາະ, ຈາກນັ້ນກໍຕ້ອງກຳນົດໃຫ້ໄດ້ແນວຄິດໃຈກາງຂອງບົດ ແລະ ເນື້ອໃນທີ່ເໝາະສົມ; ຕ້ອງເອົາໃຈໃສ່ຈັດລຽງລຳດັບຄວາມສຳຄັນຂອງບັນຫາທີ່ຍົກຂຶ້ນໃນຫົວຂໍ້; ໃນບົດຂຽນຕ້ອງຊີ້ແຈງ, ອະທິບາຍບັນຫາໃດໜຶ່ງໃນແນວທາງ, ແຜນນະໂຍບາຍຂອງພັກ, ໃນບັນດານະໂຍບາຍ ແລະ ລະບຽບກົດໝາຍຂອງລັດແນໃສ່ຕອບແກ້ບັນຫາໃດໜຶ່ງໃນຊີວິດສັງຄົມ; ບົດຂຽນລົງເລິກຂະ ແໜງການໃດໜຶ່ງ, ທ້ອງຖິ່ນໃດໜຶ່ງ; ບົດຂຽນລົງວາລະສານຕ້ອງເປັນບົດຂຽນໃໝ່ ທີ່ບໍ່ເຄີຍລົງວາລະສານອື່ນ. ຄຸນນະພາບຂອງແຕ່ລະບົດຂຽນແມ່ນອີງໃສ່ຄວາມຊຳນານ, ປະສົບການ, ລະດັບຄວາມຮູ້, ຄວາມສາມາດ ແລະ ລະ ດັບວິຊາການຂອງຜູ້ຂຽນ.

### 2. ໂຄງຮ່າງບົດ.

**- ຕັ້ງບັນຫາ:** ໃນການເປີດຫົວບົດ ຫຼື ເປີດເລື່ອງ ຕ້ອງຍົກໃຫ້ເຫັນຄວາມໝາຍ, ຄວາມສຳຄັນຂອງຫົວຂໍ້, ສາຍກ່ຽວພັນຂອງຫົວຂໍ້ໃນສະພາບຄວາມເປັນຈິງ, ໃນຊີວິດສັງຄົມ.

**- ເນື້ອໃນ:** ໃນພາກນີ້ຕ້ອງເປີດກວ້າງໃຫ້ເຫັນຄວາມຈຳເປັນຂອງຫົວຂໍ້ ຫຼື ບັນຫາດັ່ງກ່າວນັ້ນ ໃນແນວທາງຂອງພັກ, ນະໂຍບາຍຂອງລັດ, ໃນຄວາມສົນໃຈຂອງສັງຄົມ; ຍົກໃຫ້ເຫັນສະພາບການຜັນແປຂອງຫົວຂໍ້ ຫຼື ບັນຫານັ້ນ; ສະແດງໃຫ້ເຫັນຂໍ້ມູນ, ສະຖິຕິ, ການສົມທຽບ; ຍົກໃຫ້ເຫັນຜົນກະທົບດ້ານລົບ, ດ້ານບວກ, ແງ່ຂະຫຍາຍຂອງບັນຫາ; ວິທີແກ້ໄຂບັນຫາ.

**- ສະຫຼຸບ:** ໃຫ້ຍ້ຳຄືນບັນຫາສຳຄັນໃດໜຶ່ງຂອງຫົວຂໍ້.

## IV. ວິທີບັນນາທິການບົດ.

### 1. ບົດຂຽນ.

ບົດຂຽນ ແມ່ນກິດຈະກຳວິທະຍາສາດ ຂອງບຸກຄົນທີ່ສົ່ງເຖິງສຳນັກງານວາລະສານ ເອີ້ນວ່າ ບົດຂຽນຕົ້ນສະບັບ. ບົດຂຽນຕົ້ນສະບັບຕ້ອງໄດ້ຜ່ານການບັນນາທິການ, ກວດແກ້, ຕີລາຄາ ເພື່ອເຮັດໃຫ້ຕົ້ນສະບັບນັ້ນສົມບູນ ແລະ ກ້າວໄປເຖິງການພິມລົງວາລະສານ.

### 2. ຜູ້ບັນນາທິການ.

ຜູ້ບັນນາທິການ: ແມ່ນຜູ້ທີ່ມີລະດັບວິຊາການດ້ານທິດສະດີ, ວິທະຍາສາດສັງຄົມເສດຖະສາດ, ລັດຖະສາດ, ການເມືອງວິທະຍາ, ມະນຸດວິທະຍາ, ວິທະຍາສາດທຳມະຊາດ ແລະ ສາຂາວິຊາອື່ນໆ; ໝາຍຄວາມວ່າ ຕ້ອງເປັນຄົນມີຄວາມຮູ້ກວ້າງຂວາງ, ພ້ອມກັນນັ້ນ ກໍເປັນຜູ້ກຳແໜ້ນທັດສະນະ, ແນວທາງ, ແຜນນະໂຍບາຍຂອງພັກ, ບັນດານະໂຍບາຍ ແລະ ລະບຽບກົດໝາຍຂອງລັດ, ທັງຕ້ອງໄດ້ຮັບການບຳລຸງສ້າງເປັນລະບົບ, ມີທັດສະນະຫຼັກໝັ້ນການເມືອງໜັກແໜ້ນ, ມີຈັນຍາບັນ, ມານະອົດທົນ, ຮອບຄອບ, ລະມັດລະວັງ, ພິຖີພິຖັນ, ມີຄວາມລະອຽດອ່ອນໃນການບັນນາທິການ, ມີຄວາມຂະໜັຍນໃນການຊອກຮູ້ຮ່ຳຮຽນເພື່ອຍົກລະດັບຂອງຕົນເອງຢູ່ສະເໝີ.

**3. ຂັ້ນຕອນໃນການບັນນາທິການ.**

**① ຂັ້ນຕອນກ່ອນຈະລົງມືບັນນາທິການ.**

- ກວດຫົວບົດຢ່າງລະອຽດ, ຄົບຖ້ວນສາກ່ອນ.

- ກວດຜ່ານບົດແບບສັງລວມ, ກວດບັນດາຫົວຂໍ້ຍ່ອຍ, ວັກຕອນຕ່າງໆຂອງບົດ, ໝາຍຄວາມວ່າ ກວດຜ່ານບົດຂຽນຕົ້ນສະບັບນັ້ນໂດຍລວມກ່ອນເພື່ອເບິ່ງໂຄງຮ່າງບົດ, ການຈັດລຽງບັນຫາສອດຄ່ອງກັບຫົວບົດ ຫຼື ບໍ່, ເນື້ອໃນບົດສາມາດລົງພິມໃນວາລະສານໄດ້ ຫຼື ບໍ່.

**② ຂັ້ນຕອນປະຕິບັດການບັນນາທິການ.**

- ນຳໃຊ້ພູມປັນຍາ ແລະ ບົດຮຽນເພື່ອບັນນາທິການ.

- ນຳໃຊ້ບັນດາເຄື່ອງໝາຍກຳນົດໃນວິຊາການບັນນາທິການ ເຊັ່ນ: ລົງແຖວ, ຫຍໍ້ໜ້າ, ຈຸດ, ຈ້ຳ, ຈ້ຳຈຸດ, ຍ້າຍວັກນີ້ຈາກໜ້ານີ້ໄປໃສ່ໜ້າອື່ນ, ການໃຊ້ສີ, ບິກສີຟ້າ, ສີດຳ, ສີແດງ.

- ກວດຄືນອີກ ເພື່ອຮັບປະກັນຄວາມຊັດເຈນ, ແທດເໝາະດ້ານເນື້ອໃນ ແລະ ການເກາະກ່າຍບັນຫາເພື່ອໃຫ້ບົດເດັ່ນຂຶ້ນ. ການກວດຄືນກໍເພື່ອໃຫ້ແນ່ໃຈວ່າເນື້ອໃນຂອງບົດນັ້ນຖືກກັບແນວທາງນະໂຍບາຍຂອງພັກ ແລະ ລະບຽບກົດໝາຍຂອງລັດ, ຖືກກັບຄວາມເປັນຈິງ, ພາວະວິໄສ, ສ້າງສັນ ແລະ ໃຫ້ປະໂຫຍດແກ່ຜູ້ອ່ານ ຫຼື ບໍ່.

**4. ການໃຊ້ຄຳສັບ, ພາສາໃນການບັນນາທິການບົດ.**

**①. ການໃຊ້ຄຳສັບ, ພາສາ** ໃນບົດຂຽນຕ້ອງຈະແຈ້ງໂດຍອີງໃສ່ພາລະບົດບາດ ແລະ ໜ້າທີ່ຂອງແຕ່ລະສື່ສິ່ງພິມ. ການນຳໃຊ້ຄຳສັບ, ພາສາໃນການຂຽນບົດມີຄວາມໝາຍຕັດສິນຕໍ່ຄວາມຖືກຕ້ອງ, ຄວາມຊັດເຈນຂອງເນື້ອໃນບົດ, ເຮັດໃຫ້ຜູ້ອ່ານເຂົ້າໃຈກະທູ້ ຫຼື ເນື້ອໃນສຳຄັນຂອງບົດ. ການໃຊ້ຄຳສັບຈະແຈ້ງ, ຮັດກຸມຈະເຮັດໃຫ້ເນື້ອໃນໜັກແໜ້ນ, ຈະແຈ້ງບໍ່ຄຸມເຄືອ, ບໍ່ຍາວ, ບໍ່ໃຊ້ຄຳສັບເຫຼືອ. ການໃຊ້ຄຳສັບ, ພາສາມີຄວາມໝາຍສຳຄັນໃນການສ້າງຄວາມປະທັບໃຈ, ດຶງດູດຈິດໃຈຂອງຜູ້ອ່ານ, ເຮັດໃຫ້ການສະແດງອອກຂອງບົດມີຫຼາຍຮູບ, ຫຼາຍສີພາຍໃຕ້ທີ່ຕັ້ງ ແລະ ບົດບາດຂອງແຕ່ລະສື່ສິ່ງພິມ. ການໃຊ້ຄຳສັບ, ສຳນວນພາສາມີສ່ວນຊ່ວຍໃຫ້ຜູ້ຂຽນມີວາດ ຫຼື ມີລີລາໃນການຂຽນ ແລະ ຄວາມຊຳນານທີ່ເປັນອັນສະເພາະຂອງຕົນ.

**②. ການໃຊ້ຄຳສັບ, ພາສາ, ໄວຍະກອນ.** ແມ່ນອີງໃສ່ບັນດາຄຳສັບ, ພາສາທີ່ຂຽນຢູ່ໃນບັນດາເອກະສານລຸ່ມນີ້:

- ບັນດາເອກະສານທາງການຂອງພັກ, ຂອງລັດເຊັ່ນ: ລາຍງານການເມືອງ, ມະຕິ, ຄຳສັ່ງ, ຄຳແນະນຳ, ລັດ ຖະທຳມະນູນ, ກົດໝາຍ, ລັດຖະດຳລັດ, ລັດຖະບັນຍັດ, ລະບຽບການຕ່າງໆ, ແຜນແມ່ບົດ, ແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມ, ຂໍ້ຕົກລົງ, ສັນຍາ, ສົນທິສັນຍາ, ບົດລາຍງານ, ສະຖິຕິຕ່າງໆ.

- ບັນດາພົດຈະນານຸກົມພາສາລາວ, ພົດຈະນານຸກົມພາສາລາວ-ພາສາຕ່າງປະເທດທີ່ມີ.

- ບັນດາເອກະສານວິຊາການດ້ານຕ່າງໆ, ຕຳລາຫຼັກສູດການຮຽນ-ການສອນ.

- ສື່ສິ່ງພິມ ແລະ ສື່ເອເລັກໂຕຼນິກ.

- ເອກະສານປະເພດຕ່າງໆຂອງນາໆປະເທດ, ຂອງສະຖາບັນ ແລະ ອົງການຈັດຕັ້ງຕ່າງໆໃນພາກພື້ນ, ຂົງເຂດ ແລະ ໃນໂລກ.

**③. ການໃຊ້ຄຳສັບພາສາຕ່າງປະເທດ.** ສຳລັບການໃຊ້ຄຳສັບພາສາຕ່າງປະເທດ ໃນການບັນນາທິການຕົວຈິງພວກເຮົາຍຶດຖື ດັ່ງນີ້:

- ບົດໃດໃຊ້ຄໍາສັບພາສາຝຣັ່ງ ຫຼື ພາສາອັງກິດ ກໍນໍາໃຊ້ຈົນໝົດເນື້ອຫາສາລະຂອງບົດ, ບໍ່ໃຫ້ປົນເປກັນ. ຕົວຢ່າງ: ເຕັກໂນໂລຊີ (ຝຣັ່ງ), ເທັກໂນໂລຢີ (ອັງກິດ); ປະເທດໂຮນລັງ (ຝຣັ່ງ), ປະເທດຮອນແລນ (ອັງກິດ), ປະເທດໂອຕຼິດ (ຝຣັ່ງ), ປະເທດອັອດເຕຣຍ (ອັງກິດ)....

- ສໍາລັບຄໍາສັບສະເພາະອື່ນໆ ໃນພາສາຕ່າງປະເທດໃດໜຶ່ງກໍໃຊ້ໄດ້ ແຕ່ຕ້ອງມີຄໍາອະທິບາຍໃນວົງເລັບເປັນພາສາລາວ ຕົວຢ່າງ: ອົງການນາໂຕ (ອົງການສົນທິສັນຍາອັດລັງຕິກເໜືອ) (NATO: The North Atlantic Treaty Organization), ເອັນຈີໂອ (ອົງການທີ່ບໍ່ຂຶ້ນກັບລັດຖະບານ) (NGO: Non-Government Organization), ອຸຍແນັດສະໂກ (ອົງການເພື່ອການສຶກສາ, ວິທະຍາສາດ ແລະ ວັດທະນະທໍາຂອງສະຫະປະຊາຊາດ) (UNESCO: United Nation for Education Science and Culture Organization), ຈີດີພີ (ລວມຍອດຜະລິດຕະພັນພາຍໃນ) (GDP: Gross Domestic Product), ອົງການໄອໂລ (ອົງການແຮງງານສາກົນ) (ILO: International of Labours Organization) ແລະ ອື່ນໆ.

## ຄໍາຖາມຄົ້ນຄວ້າ.

1. ວາລະສານອະລຸນໃໝ່ແມ່ນວາລະສານແນວໃດ? ມີພາລະບົດບາດແນວໃດ?.

2. ບັນດາບົດລົງພິມໃນວາລະສານອະລຸນໃໝ່ແມ່ນບົດແນວໃດ? ແລະ ຢາກຂຽນບົດລົງວາລະສານອະລຸນໃໝ່ໄດ້ດີຈະຕ້ອງເຮັດແນວໃດ?.

# ບົດທີ 10

# ບາງບົດຮຽນໃນການຂຽນບົດຕ່າງໆ.

**1. ຕ້ອງກຳນົດປະເພດບົດທີ່ຈະຂຽນ ແລະ ໃສ່ຊື່ເອກະສານໃຫ້ຈະແຈ້ງເຊັ່ນ:**

- ບົດລາຍງານປະຈຳເດືອນ, 6 ເດືອນ, ປະຈຳປີ.

- ບົດລາຍງານການເມືອງ

- ບົດປາຖະກະຖາກ່ຽວກັບມູນເຊື້ອ, ສະພາບການ-ເຫດການທີ່ພົ້ນເດັ່ນ, ຜົນສຳເລັດໃນການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່, ແຜນພັດທະນາເສດຖະກິດ-ສັງຄົມ...

- ບົດປາໄສ ຫຼື ສູນທອນພົດ.

- ບົດລາຍງານ ຫຼື ສະເໜີສະພາບການ.

- ບົດປະກອບຄວາມເຫັນໃນກອງປະຊຸມ.

- ບົດວິຈານ, ບົດຄວາມ, ບົດນຳ.

- ບົດຂ່າວ ຫຼື ບົດເລື່ອງ ເພື່ອລົງໜັງສືພິມ, ອອກວິທະຍຸ.

- ບົດໂອ້ລົມຂອງການນຳ.

**2. ກຳນົດຈຸດປະສົງ, ເປົ້າໝາຍ ແລະ ລະດັບຄາດໝາຍຂອງບົດ.**

- ຂຽນເພື່ອໃຫ້ຮູ້ຫຍັງ-ບອກຫຍັງ?

- ຂຽນໃຫ້ໃຜອ່ານ, ຂຽນໃຫ້ໃຜເວົ້າ.

- ຂຽນເພື່ອຜູ້ໃດ, ເພື່ອປະຊາຊົນ ຫຼື ເພື່ອພະນັກງານ, ລະດັບໃດ, ຂັ້ນໃດ.

- ຜ່ານການຄົ້ນຄວ້າເອກະສານແລ້ວໃຫ້ສາມາດມີຄວາມຮັບຮູ້ ແລະ ຫັນປ່ຽນແນວໃດໃນດ້ານທັດສະນະຄຸນສົມບັດ ແລະ ດ້ານພຶດຕິກຳ.

**3. ກຳນົດໂຄງຮ່າງ (ຫຼື ໂຄງສ້າງ) ຂອງເອກະສານ.**

**- ເປີດຫົວເລື່ອງ:** ຫຼື ອະລຳພະບົດ: ຕ້ອງສັ້ນເນັ້ນແຕ່ອັນຈຳເປັນເທົ່ານັ້ນຄື: ບອກໃຫ້ຜູ້ອ່ານ, ຜູ້ຟັງຮູ້ວ່າຈຸດປະສົງລະດັບຄາດໝາຍຂອງບົດນີ້ແມ່ນຫຍັງ, ເນື້ອໃນຕົ້ນຕໍທີ່ສະເໜີມີຫຍັງແດ່: ອ່ານແລ້ວ, ຟັງແລ້ວຈະເປັນປະໂຫຍດຄືແນວໃດ (ໝາຍວ່າມີຄວາມຮັບຮູ້ ແລະ ຫັນປ່ຽນແນວໃດໃນດ້ານທັດສະນະ, ຄຸນສົມບັດ ກໍຄື ດ້ານພຶດຕິກຳ).

**- ເນື້ອໃນຂອງບົດ:**

+ ອັນຕົ້ນຕໍທີ່ສະເໜີມີຫຍັງ (ມີຈັກບັນຫາ) ແລະ ຕ້ອງຮັບໃຊ້ຈຸດປະສົງເປົ້າໝາຍທີ່ຕັ້ງໄວ້.

+ ຄຳນຶງເຖິງຄວາມກ່ຽວພັນກັນຂອງບັນຫາຕ່າງໆ, ຈະສະເໜີອັນໃດກ່ອນ, ອັນໃດລຸນ, ອັນໃດຕໍ່ໄປ ຫຼື ເວົ້າຢ່າງໜຶ່ງແມ່ນຄຳນຶງເຖິງໂລຊິກຂອງບັນຫາ ເພື່ອໃຫ້ເຂົ້າໃຈໄດ້ງ່າຍ, ຮູ້ກົກ, ຮູ້ປາຍ ແລະ ຮັບປະກັນຄວາມກົມກຽວຂອງເນື້ອໃນ.

+ ວິໄຈ, ໄຈ້ແຍກ, ຢືນຢັນ, ເນັ້ນໜັກ, ຊີ້ແຈງ, ອ້າງອີງ, ຍົກຕົວຢ່າງ, ສົມທຽບເພື່ອໃຫ້ໜັກແໜ້ນ, ດູດດຶງໄດ້ຄວາມສົນໃຈ, ເພື່ອໃຫ້ເຂົ້າໃຈເລິກ, ຈົດຈຳໄດ້... ເນື້ອໃນມີຊີວິດຊີວາບໍ່ແຫ້ງກະແດ້ງ.

**- ສະຫຼຸບ:**

ພາກສະຫຼຸບແມ່ນພາກສັງລວມຫຍໍ້ເນື້ອໃນຂອງເອກະສານ, ຈາກນັ້ນແນະນຳໜ້າທີ່ໃນການຈັດຕັ້ງປະຕິບັດ (ໂດຍອີງໃສ່ແນວທາງນະໂຍບາຍຂອງພັກເປັນຫຼັກ). ຈະເຮັດຫຍັງ? 1, 2, 3... ການແນະນຳແມ່ນແນະນຳລະອຽດໃນແຕ່ລະພາກສ່ວນ, ຂົງເຂດ, ທ້ອງຖິ່ນຕາມແນວທາງຂອງພັກ, ຂໍ້ມູນທາງການທີ່ໄດ້ຮັບຮອງເອົາແລ້ວ.

**4. ຊອກຄົ້ນຄວ້າ ແລະ ເກັບກຳຂໍ້ມູນເອກະສານຕ່າງໆ.**

- ເພື່ອເຮັດໃຫ້ເນື້ອໃນເອກະສານມີເນື້ອໃນອຸດົມສົມບູນ, ເລິກເຊິ່ງ, ຕົວຈິງ, ມີວິທະຍາສາດຕ້ອງຊອກໃຫ້ໄດ້ອັນທີ່ເປັນພື້ນຖານບ່ອນອີງສຳລັບການຂຽນບົດນັ້ນໆ (ປຶ້ມຕຳລາ, ທິດສະດີ, ເອກະສານທີ່ກ່ຽວຂ້ອງ...).

- ຊອກຂໍ້ມູນເພື່ອມາເສີມ: ເຫດການຕົວຈິງທີ່ມັນເກີດຂຶ້ນ, ຕົວຢ່າງທີ່ເໝາະສົມ; ຕົວເລກສະຖິຕິ... ສະນັ້ນ ຕ້ອງອ່ານ, ຕ້ອງເບິ່ງ, ຕ້ອງຮູ້ບັນທຶກ, ຮູ້ພິຈາລະນາ ແລະ ເລືອກເຟັ້ນ.

**5. ຂຽນ.**

- ຂຽນຕາມໂຄງຮ່າງຂອງບົດທີ່ໄດ້ກຳນົດໄວ້ໃຫ້ເກາະກ່າຍກັນ.

- ຂຽນໃຫ້ເໝາະກັບລະດັບເປົ້າໝາຍ.

- ຂຽນໃຫ້ຖືກຕາມແນວທາງນະໂຍບາຍຂອງພັກ ທີ່ມີເອກະສານຖືກຮັບຮອງເອົາເປັນທາງການແລ້ວ.

- ປຽບທຽບທິດສະດີ ແລະ ພຶດຕິກຳ, ຍົກເອົາສຸພາສິດ ຫຼື ຄຳເວົ້າຜູ້ນຳມາໃສ່.

- ໃຊ້ພາສາສັບສຳນວນທີ່ຈະແຈ້ງ, ເຂົ້າໃຈງ່າຍເໝາະກັບແຕ່ລະເປົ້າໝາຍ.

- ຂຽນບໍ່ໃຫ້ຍືດຍາວຫຼາຍ.

**6. ຂຽນແລ້ວຕ້ອງມີການອ່ານຄືນ-ບັນນາທິການຫຼາຍລົບຫຼາຍຕ່າວ.**

**7. ຂໍຄຳເຫັນຈາກຂັ້ນເທິງເພື່ອຮັບຮອງເອົາເປັນທາງການ.**

**8. ຄວາມຮຽກຮ້ອງທີ່ຈຳເປັນສຳລັບຜູ້ຂຽນ:**

- ຕ້ອງມີຄວາມຮູ້ຄວາມເຂົ້າໃຈຕໍ່ບັນຫາທີ່ຈະຂຽນດີສົມຄວນ.

- ມີຄວາມສາມາດໃນການຂຽນບົດ.

- ມີຄວາມຮູ້ຄວາມເຂົ້າໃຈຕໍ່ແນວທາງຂອງພັກ-ລັດຢ່າງເລິກເຊິ່ງສົມຄວນ.

- ຮູ້ປຽບທຽບລະຫວ່າງທິດສະດີ ແລະ ພຶດຕິກຳຕົວຈິງ, ຮູ້ຍົກເອົາຜົນງານ-ຕົວເລກຕົວຈິງມາສອດຫ້ອຍເຂົ້າໃນບົດຢ່າງມີຊີວິດຊີວາ.

- ມີຄວາມມັກ, ມີຄວາມອົດທົນ ແລະ ມີຄວາມຮັບຜິດຊອບສູງໃນການຂຽນບົດ.